# ການພິມຈຳໜ່າຍ

## ຂີດໝາຍປະຫວັດສາດ

# 60 ປີ

ຈັດພິມໂດຍ: ກົມພິມຈຳໜ່າຍ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ນະຄອນຫຼວງວຽງຈັນ, 2012

# ການພິມຈຳໜ່າຍ
# ຂີດໝາຍປະຫວັດສາດ 60 ປີ

ພິມຄັ້ງທີ **I**

ຈັດພິມໂດຍ: ກົມພິມຈຳໜ່າຍ, ກະຊວງຖະແຫຼງຂ່າວ, ວັດທະນະທຳ
ແລະ ທ່ອງທ່ຽວ
ໂດຍຜ່ານ: ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ

ນະຄອນຫຼວງວຽງຈັນ, 2012

# ຄະນະຈັດທຳ

# ການພິມຈຳໜ່າຍ
# ຂີດໝາຍປະຫວັດສາດ 60 ປີ

ຄົ້ນຄວ້າ-ຮຶບໂຮມ ແລະ ຈັດພິມໂດຍ: ກົມພິມຈຳໜ່າຍ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

ບັນນາທິການ ໂດຍຜ່ານ: ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ

ພິມທີ່ໂຮງພິມ: ເທບປັນຍາ

ເລກທະບຽນພິມ: 364/ພຈ 10082012

ISBN 978-9932-01-049-3

ພິມຄັ້ງທີ I

ຈຳນວນພິມ: 500 ຫົວ

ຂະໜາດ: 15 cm x 21 cm

ນະຄອນຫຼວງວຽງຈັນ, 2012

# ຄຳເຫັນ

ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ ມີຄວາມຍິນດີ ແລະ ປື້ມປິຕິທີ່ສຸດ ທີ່ໄດ້ມີໂອກາດຈັດພິມປຶ້ມທີ່ມີຊື່ວ່າ: ການພິມຈຳໜ່າຍຂີດໝາຍປະຫວັດສາດ 60 ປີ ຊຶ່ງເປັນປຶ້ມທີ່ເຕັມໄປດ້ວຍເນື້ອຫາສາລະກ່ຽວກັບວຽກງານການພິມຈຳໜ່າຍໃນໄລຍະ 60 ປີ ຜ່ານມາ ຄື (ວັນທີ 13 ສິງຫາ 1950 - 13 ສິງຫາ 2010). ປຶ້ມຫົວເລື່ອງດັ່ງກ່າວເກີດຂຶ້ນໄດ້ກໍເນື່ອງຈາກຄວາມພະຍາຍາມຂອງພະນັກງານກົມພິມຈຳໜ່າຍທຸກໆຄົນ ພ້ອມທັງເພື່ອນຮ່ວມງານ ຮ່ວມອາຊີບ ໄດ້ອູ້ມຊູຊ່ວຍເຫຼືອທັງທາງດ້ານວັດຖຸປັດໄຈ, ສະຕິປັນຍາ ແລະ ຊັບສິນ ໂດຍສະເພາະ ຂໍຊົມເຊີຍ ແລະ ຂອບໃຈມາຍັງການນຳກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຄະນະກົມພິມຈຳໜ່າຍ ທີ່ເປັນຫ່ວງເປັນໃຍໃຫ້ການຊີ້ນຳໃກ້ຊິດຕິດແທດ ປະກອບງົບປະມານໃຫ້ຈຳນວນບໍ່ຫຼາຍແຕ່ມັນກໍຊ່ວຍໃຫ້ເກີດມີປຶ້ມຫົວເລື່ອງນີ້ອອກມາຮັບໃຊ້ສັງຄົມລາວເຮົາ ມັນອາດກາຍເປັນໜັງສືທີ່ສາມາດສະໜອງຂໍ້ມູນ ຄວາມຮູ້ດ້ານການພິມຈຳໜ່າຍ ແລະ ຫໍສະໝຸດໃຫ້ແກ່ຜູ້ອ່ານ ຜູ້ໃຝ່ສະແຫວງຫາຄວາມຮູ້ເປັນຢ່າງດີ.

ປຶ້ມ " ການພິມຈຳໜ່າຍ ຂີດໝາຍປະຫວັດສາດ 60 ປີ " ໄດ້ໃຫ້ຄວາມຮູ້ດ້ານມູນເຊື້ອປະຫວັດການພິມຈຳໜ່າຍ ໃນໄລຍະ 60 ປີ, ສະຖິຕິດ້ານການຈັດພິມ (ສຳນັກພິມ), ໂຮງພິມ, ຮ້ານຈຳໜ່າຍປຶ້ມ, ບໍລິສັດໂຄສະນາ, ບໍລິສັດແປພາສາ ແລະ ສະຖິຕິຫໍສະໝຸດ, ການສົ່ງເສີມການອ່ານ; ພ້ອມນີ້ ກໍຍັງມີກອນລຳລ່ອງ, ລຳສັ້ນກ່ຽວກັບວຽກງານການພິມຈຳ

ໜ່າຍ ແລະ ມີບົດເພງຫຼາກຫຼາຍຈັງຫວະ ໂດຍສະເພາະ ຈັງຫວະລຳວົງ.

ເຖິງຢ່າງໃດກໍດີ, ປຶ້ມຫົວເລື່ອງດັ່ງກ່າວ ອາດມີປະໂຫຍດໃຫ້ແກ່ສັງຄົມ, ແຕ່ກໍປາສະຈາກບໍ່ໄດ້ຂໍ້ຂາດຕົກບົກຜ່ອງໃນດ້ານຂໍ້ມູນ, ດ້ານການຈັດພິມ ແລະ ດ້ານອື່ນໆ; ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ ກໍຄືກົມພິມຈຳໜ່າຍຂໍສະແດງຄວາມຍິນດີ ແລະ ຮັບເອົາຄຳຕຳນິຕຳຊົມຂອງທຸກໆທ່ານ ພ້ອມທັງຮຽກຮ້ອງເຖິງບັນດາທ່ານ ຈົ່ງໄດ້ຊ່ວຍປັບປຸງແກ້ໄຂ ເຮັດແນວໃດ ໃຫ້ປຶ້ມຫົວເລື່ອງນີ້ ມີເນື້ອໃນອຸດົມສົມບູນ ແລະ ດີຂຶ້ນໃນການພິມຄັ້ງໜ້າ.

ນະຄອນຫຼວງວຽງຈັນ, ວັນທີ 8 ມິຖຸນາ 2012
ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ

# ຄຳນຳ

ກົມພິມຈຳໜ່າຍ, ກະຊວງຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ ໄດ້ຈັດພິມປຶ້ມທີ່ມີຊື່ວ່າ: " ການພິມຈຳໜ່າຍ ຂີດໝາຍປະຫວັດສາດ 60 ປີ " ເຫຼັ້ມນີ້ຂຶ້ນໃນໂອກາດສະເຫຼີມສະຫຼອງ ຫຼື ລະລຶກວັນຄົບຮອບ 60 ປີ ຂອງການເຄື່ອນໄຫວວຽກງານການພິມຈຳໜ່າຍ (13 ສິງຫາ 1950 - 13 ສິງຫາ 2010) ເພື່ອເປັນຂີດໝາຍທາງປະຫວັດສາດ ຫຼື ຄວາມເປັນມາໃນຮອບ 60 ປີ, ເກືອບເວົ້າໄດ້ວ່າຊົ່ວອາຍຸຄົນໆໜຶ່ງ...

ປຶ້ມເຫຼັ້ມນີ້ສະທ້ອນໃຫ້ເຫັນສະພາບການຈັດພິມ, ການພິມ ແລະ ການຈຳໜ່າຍທີ່ເລີ່ມຕົ້ນດ້ວຍຮູບແບບປະຖົມປະຖານ, ງ່າຍດາຍຈົນກ້າວໄປສູ່ການເຕີບໃຫຍ່ຂະຫຍາຍໂຕເປັນລຳດັບ, ດັ່ງພວກເຮົາໄດ້ປະຈັກໃນປະຈຸບັນ. ປຶ້ມນີ້ພວກເຮົາຈະໄດ້ຮັບຮູ້ວຽກງານການພິມຈຳໜ່າຍ ຊຶ່ງໄດ້ຕິດພັນກັບການປະຕິວັດລາວມາແຕ່ຕອນຕົ້ນໆ, ອີກປະການໜຶ່ງວຽກງານພິມຈຳໜ່າຍຍັງໄດ້ຕິດພັນກັບການເຄື່ອນໄຫວຂອງພັກປະຊາຊົນປະຕິວັດລາວກໍຄືລັດຖະບານລາວຕໍ່ຕ້ານມາແຕ່ຍຸກຕົ້ນໆເຊັ່ນກັນ. ໃນຍຸກແຫ່ງການເຄື່ອນໄຫວປະຕິວັດປົດປ່ອຍຊາດນັ້ນ, ການພິມຈຳໜ່າຍກໍຄື ສິ່ງພິມທັງຫຼາຍຖືເປັນສິ່ງສຳຄັນທີ່ຂາດບໍ່ໄດ້ ເພາະມັນເປັນພາຫະນະ ຫຼື ກະບອກສຽງໃນການໂຄສະນາປຸກລະດົມປະຊາຊົນບັນດາເຜົ່າຕື່ນຕົວລຸກຮືຂຶ້ນຕໍ່ຕ້ານສັດຕູ ແລະ ທັງເຂົ້າມາຮ່ວມໃນຂະບວນການຫຼາຍຂຶ້ນເປັນລຳດັບ. ສິ່ງພິມ ຫຼື ການພິມຈຳໜ່າຍ ໃນໄລຍະ 60 ປີ ຜ່ານມາຈຶ່ງມີຄວາມສຳຄັນທັງມີເນື້ອຫາສາລະຢ່າງຫຼາກຫຼາຍ ໂດຍປາລົບໃຫ້

ເຫັນພື້ນຖານ ຫຼື ພຶດຕິກຳຂອງບຸກຄະລາກອນຜູ້ຮັບຜິດຊອບ ແລະ ເຄື່ອນໄຫວຢ່າງທໍລະຫົດ ແລະ ໝັ້ນໜຽວຕໍ່ວຽກງານການພິມຈຳໜ່າຍ ຊຶ່ງສາມາດເປັນແມ່ແບບ ແລະ ແວ່ນແຍງອັນໃສແຈ້ງໃຫ້ແກ່ຮຸ່ນສືບທອດໃນຍຸກປະຈຸບັນ.

ເພື່ອໃຫ້ເປັນປະໂຫຍດ ແລະ ສ້າງສະຕິອັນສູງສົ່ງໃຫ້ແກ່ນັກຈັດພິມ, ນັກຂີດຂຽນ, ນັກການພິມ ແລະ ການຈຳໜ່າຍປັດຈຸບັນ, ກົມພິມຈຳໜ່າຍຈຶ່ງຈັດພິມປຶ້ມທີ່ມີຫົວເລື່ອງວ່າ: "ການພິມຈຳໜ່າຍ ຂີດໝາຍປະຫວັດສາດ 60 ປີ " ນີ້ຂຶ້ນເພື່ອເປັນການສ້າງຄວາມຮັບຮູ້ ແລະ ຮູ້ທີ່ມາຂອງຊາວຊິນລົມແຫ່ງການພິມຈຳໜ່າຍກໍຄືທ່ານຜູ້ອ່ານທົ່ວໆໄປໄດ້ຮັບຮູ້ ແລະ ເຂົ້າໃຈເລື່ອງລາວເປັນຢ່າງດີ. ການຈັດພິມປຶ້ມເຫຼັ້ມນີ້ ຖ້າທ່ານຍັງອ່ານເຫັນວ່າມີຂໍ້ບົກພ່ອງປະການໃດ ກໍຂໍໃຫ້ມີຄຳເຫັນແນະນຳມາໃຫ້ກໍໄດ້ເພື່ອເປັນບົດຮຽນ ແລະ ສ້າງສະຕິໃນການທີ່ຈະຈັດພິມຕໍ່ໆໄປ.

ນະຄອນຫຼວງວຽງຈັນ,ວັນທີ 31 ພຶດສະພາ 2012
ກົມພິມຈຳໜ່າຍ

# ສາລະບັນ

ໜ້າ

- ບົດທວນຄືນຄວາມເປັນມາຂອງການພິມຈຳໜ່າຍ ຄົບຮອບ 60 ປີ 1

I . ອາລຳພະບົດ:...........................................................

II. ຄວາມເປັນມາຂອງວຽກງານພິມຈຳໜ່າຍ:...................... 4

- ວຽກງານພິມຈຳໜ່າຍໃນສະໄໝກາງບູຮານລາວ................ 8

III. ວຽກງານພິມຈຳໜ່າຍໃນສະໄໝຕໍ່ສູ້ກູ້ຊາດຕ້ານຈັກກະພັດຜູ້ຮຸກຮານເລີ່ມແຕ່ປີ 1950 ເປັນຕົ້ນມາ.............................. 11

- ວຽກງານພິມຈຳໜ່າຍໃນເວລານັ້ນໄດ້ແບ່ງເຂດຄຸ້ມຄອງອອກເປັນ 3 ປະເພດຄື: ................................................ 29

- ສະຖິຕິ ສຳນັກພິມ.................................................. 39-40

- ສະຖິຕິໂຮງພິມ...................................................... 41-42

- ສະຖິຕິຮ້ານຈຳໜ່າຍປຶ້ມ ແລະ ສິ່ງພິມອື່ນ........................ 43-45

- ສະຖິຕິບໍລິສັດໂຄສະນາ............................................ 46-47

- ສະຖິຕິບໍລິສັດແປພາສາ............................................ 48-49

- ສະຫຼຸບການຊ່ວຍເຫຼືອວຽກງານຫໍສະໝຸດຂອງອົງການຕ່າງປະເທດ......................................................................... 50-52

- ກອນລຳທາງສັ້ນ (ກອນປາລິບເບື້ອງຕົ້ນ)........................ 53-58

- ກອນລຳທາງສັ້ນ ທວນຄືນ 60 ປີ ມູນເຊື້ອການພິມຈຳໜ່າຍ.. 59-84

- ເພງ: ງານສັງສັນວັນພິມຈຳໜ່າຍ................................ 85

- ເພງ: ເຈົ້າຂອງຮ້ານປຶ້ມ.................................................... 86
- ເພງ: ສາວສຳນັກພິມ.................................................... 87
- ເພງ: ຮັກສາວໂຮງພິມ.................................................. 88
- ເພງ: ນັກປະພັນຝັນຊຽນ.............................................. 89
- ໂຄງຮ່າງການຈັດຕັ້ງຂອງກົມພິມຈຳໜ່າຍ ໃນປີ 2010......... 90-91

24 / VII
ຫ້າມຈຳໜ່າຍ

# ບົດທວນຄືນ

## ຄວາມເປັນມາຂອງວຽກງານພິມຈຳໜ່າຍ ໄລຍະ 60 ປີ ( 1950 - 2010 )

I .ອາລຳພະບົດ:

ວຽກງານພິມຈຳໜ່າຍໄດ້ຂະຫຍາຍໂຕແຕ່ຕ່ຳຫາສູງ, ແຕ່ງ່າຍດາຍໄປຫາສັບສົນ, ວຽກງານພິມຈຳໜ່າຍໄດ້ມີການເຄື່ອນເໜັງທີ່ປະກອບໄປດ້ວຍຂໍ້ຂັດແຍ້ງໃນບັນດາດ້ານຕ່າງໆ ທີ່ກົງກັນຂ້າມກັນ ແລະຊຸກດັນກັນໃຫ້ເຕີບໃຫຍ່ເຂັ້ມແຂງກ້າວຂຶ້ນສູ່ອຸດສາຫະກຳການພິມຈຳໜ່າຍເທື່ອລະກ້າວ. ວຽກງານພິມຈຳໜ່າຍແມ່ນຂະແໜງວິຊາການໜຶ່ງທີ່ເປັນກົກເຄົ້າຂອງສິ່ງພິມທັງຫຼາຍ, ແຕ່ເມື່ອມັນຂະຫຍາຍຕົວອອກໄປຕາມການເວລາຂອງມັນແລ້ວ, ວຽກງານນີ້ ກໍແຍກຕົວອອກໄປເປັນວິຊາການໜຶ່ງທີ່ລົງເລິກໄປສູ່ວຽກງານໃນ 3 ດ້ານທີ່ກ່ຽວພັນກັນແບບກາຍອິນຊີຄື: ວຽກຈັດພິມ, ວຽກໂຮງພິມ ແລະ ວຽກການຈຳໜ່າຍສິ່ງພິມ; ວຽກງານ 3 ດ້ານທີ່ກ່າວມານັ້ນມັນເປັນຕົວຫຼັກທີ່ນຳເອົາຜົນງານການຄົ້ນຄວ້າ, ການປະດິດແຕ່ງ, ການແປ, ການແຕ້ມຮູບ, ຮູບຖ່າຍມາກວດແກ້ຮຽບຮຽງແລ້ວ ຈັດເປັນຕົ້ນສະບັບສົມບູນເພື່ອສົ່ງເຂົ້າພິມຢູ່ໂຮງພິມໃຫ້ເປັນຫຼາຍເຫຼັ້ມຫຼາຍສະບັບ ຊຶ່ງຈະອອກມາໃນຮູບແບບປຶ້ມ ແລະ ສິ່ງພິມອື່ນໆ. ແລ້ວນຳໄປຈຳໜ່າຍດ້ວຍຮູບການຕ່າງໆຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມ....

ຈາກບັນຫາດັ່ງກ່າວນີ້ ວຽກງານພິມຈຳໜ່າຍຈິ່ງເປັນວຽກໜຶ່ງ

ທີ່ສຳຄັນຢູ່ໃນຊີວິດສັງຄົມ ເພາະມັນເປັນການສຶກສາອົບຮົມຄົນ, ມັນເປັນການສ້າງຊັບພະຍາກອນມະນຸດໂດຍທາງອ້ອມ ແລະ ທາງກົງ, ວຽກງານພິມຈຳໜ່າຍຍັງເປັນວຽກງານທີ່ຕິດພັນກັບແນວຄິດການເມືອງຂອງພັກ ແລະ ລັດຖະບານ ເພາະມັນເປັນພາຫະນະໃນການຕໍ່ສູ້ຊົນຊັ້ນ ຫຼື ເປັນເຄື່ອງມືຮັບໃຊ້ຊົນຊັ້ນປົກຄອງ. ສະນັ້ນວຽກງານພິມຈຳໜ່າຍຈຶ່ງສຳຄັນ ແລະ ຈຳເປັນໃນຊີວິດສັງຄົມ. ເມື່ອເປັນແນວນັ້ນ ມັນຈຶ່ງຮຽກຮ້ອງໃຫ້ມີການຄຸ້ມຄອງຜະລິດຕະພັນພິມຈຳໜ່າຍ ແລະ ມີລະບະບັນນາທິການກວດກາທັງເນື້ອໃນ ແລະ ຮູບການຂອງສິ່ງພິມ ເພື່ອໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ ແລະ ລັດ ໂດຍສະເພາະແມ່ນທັດສະນະ ແລະ ຈຸດຢືນຕໍ່ລະບອບການ ຫຼື ຊົນຊັ້ນປົກຄອງ ໂດຍບໍ່ໃຫ້ມີທ່າອ່ຽງແບບເຫັນແກ່ແຕ່ຜົນປະໂຫຍດດ້ານເສດຖະກິດຢ່າງດຽວ.

ຈາກບັນຫາດັ່ງກ່າວນັ້ນ ວຽກງານພິມຈຳໜ່າຍຈຶ່ງມີນະໂຍບາຍຈາກລັດຖະບານ ເພື່ອເປັນການຊຸກຍູ້ ສົ່ງເສີມ ແລະ ພັດທະນາດ້ານຈິດໃຈເພື່ອກະຕຸກຊຸກຍູ້ໃຫ້ວຽກງານນີ້ມີການຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ, ສະໜອງຄວາມຕ້ອງການຂອງສັງຄົມດ້ານຜະລິດຕະພັນສິ່ງພິມເຊັ່ນ: ການສ້າງ ແລະ ປະກອບບຸກຄະລາກອນ, ເຕັກນິກ, ເທັກໂນໂລຢີທີ່ທັນສະໄໝ, ການໃຫ້ນາມມະຍົດ, ການຍ້ອງຍໍ ແລະ ຄ່າແຮງງານໃຫ້ຜູ້ປະດິດຄິດແຕ່ງ, ຜູ້ຈັດພິມ ແລະ ອື່ນໆ; ລັດສົ່ງເສີມ ແລະ ຊຸກຍູ້ໃຫ້ການຈັດຕັ້ງ, ບຸກຄົນທັງພາຍໃນ ແລະ ຕ່າງປະເທດປະກອບສ່ວນດ້ວຍການສະໜອງພາຫະນະ, ວັດຖຸອຸປະກອນ, ທຶນຮອນເຂົ້າໃນການພັດທະນາວຽກງານພິມຈຳໜ່າຍ ລວມທັງດຳເນີນການພິມຈຳໜ່າຍທີ່ບໍ່ຂັດກັບລະບຽບກົດໝາຍ ແລະ ວັດທະນະທຳອັນດີງາມຂອງຊາດ, ທັງສອດຄ່ອງກັບກົນໄກເສດຖະກິດຕະຫຼາດ. ສະນັ້ນ, ຜະລິດຕະພັນສິ່ງພິມເພື່ອໃຫ້ສອດຄ່ອງກັບວັດທະນະທຳສັງຄົມລາວນັ້ນ, ສິ່ງພິມຕ່າງໆຈຶ່ງຕ້ອງນຳໄປ

ຜ່ານບັນນາທິການຂອງສຳນັກພິມ ແລະ ຕ້ອງໄດ້ຮັບອະນຸຍາດຈາກອົງການຄຸ້ມຄອງມະຫາພາກກ່ອນ, ແລ້ວຈຶ່ງນຳອອກຈຳໜ່າຍ ຫຼື ເຜີຍແຜ່ໄດ້.

ວຽກງານພິມຈຳໜ່າຍແມ່ນການເຄື່ອນໄຫວໜຶ່ງດ້ານວຽກງານແນວຄິດອັນແຫຼມຄົມຂອງພັກ ແລະ ກໍຈັດຢູ່ໃນລະບົບວັດທະນະທຳແນວຄິດ, ແມ່ນການນຳເອົາໝາກຜົນການປະດິດສ້າງຕ່າງໆມາພິມເຜີຍແຜ່ເຊັ່ນ: ວິທະຍາສາດ, ເຕັກນິກ, ວັນນະຄະດີ ແລະ ອື່ນໆ. ພາຍໃຕ້ຮູບການຈັດພິມປື້ມ ແລະ ສິ່ງພິມອື່ນໆ, ປື້ມມັນມີລັກສະນະພັກ, ລັກສະນະຕໍ່ສູ້ ແລະ ລັກສະນະວິທະຍາສາດ, ລັກສະນະຊາດ ແລະ ລັກສະນະມະຫາຊົນ. ປື້ມເປັນໄມ້ຫຼາວັດແທກລະດັບຄວາມກ້າວໜ້າດ້ານເສດຖະກິດ, ສັງຄົມຂອງປະເທດຊາດ. ຜະລິດຕະພັນນີ້ ມັນເຜີຍແຜ່ແນໃສ່ໃຫ້ຫຼາຍຄົນຮັບຮູ້ ແລະ ນຳເອົາປັນຍາຄວາມຮູ້ໄປໃຫ້ຄົນ, ມັນຍົກລະດັບປະຊາຊົນມັນກໍ່ສ້າງຄຸນສົມບັດ ແລະ ແບບແຜນດຳລົງຊີວິດອັນຈີບງາມໃຫ້ຄົນເຮົາ.

ການເຄື່ອນໄຫວພິມຈຳໜ່າຍມັນເຜີຍແຜ່ແນວທາງຂອງພັກ ແລະ ລະບຽບກົດໝາຍຂອງລັດ, ມັນປະກອບສ່ວນເຮັດໃຫ້ມີສະຖຽນລະພາບດ້ານການເມືອງກໍຄືປະເທດຊາດ, ດັ່ງຢູ່ໃນມະຕິກອງປະຊຸມໃຫຍ່ຄັ້ງທີ VIII ຂອງສູນກາງພັກຂຽນວ່າ: "...ຕ້ອງສົ່ງເສີມການອ່ານ, ການຮຽນຮູ້, ການປະດິດຄິດແຕ່ງ, ການຂຽນ, ການຂະຫຍາຍຫ້ອງອ່ານ, ຫໍສະໝຸດ ແລະ ຮ້ານຈຳໜ່າຍປື້ມໃນເຂດຊຸມຊົນຕົວເມືອງກໍຄືຊົນນະບົດ, ຕອບສະໜອງຂ່າວສານ, ເພີ່ມສິ່ງພິມ ແລະ ການໂຄສະນາທີ່ມີເນື້ອຫາສາລະດີ, ຕ້ອງມີຄຸນປະໂຫຍດເພື່ອຄ່ານິຍົມທີ່ຖືກຕ້ອງ..."

## II. ຄວາມເປັນມາຂອງວຽກງານພິມຈຳໜ່າຍ:

- ວຽກງານພິມຈຳໜ່າຍກ່ອນປີ 1950 ຄືນຫຼັງ ສະໄໝຕົ້ນແຫ່ງການກຳເນີດພິມຈຳໜ່າຍ ຫຼື ສິ່ງພິມຕ່າງໆຢູ່ລາວ:

ວຽກງານສິ່ງພິມຕ່າງໆເວົ້າລວມ, ເວົ້າສະເພາະກໍແມ່ນວຽກງານພິມຈຳໜ່າຍທີ່ເປັນກົກເຄົ້າຂອງສິ່ງພິມທັງຫຼາຍໄດ້ກຳເນີດເກີດຂຶ້ນກ່ອນນີ້ປະມານ 2000 ກວ່າປີ, ນັບແຕ່ມື້ຊົນຊາດອ້າຍລາວໄດ້ປະດິດໂຕອັກສອນ ( ໜັງສື ) ຂຶ້ນມາເປັນຂອງຊາດຕົນເອງ, ໂຕອັກສອນ ຫຼື ອັກສອນສາດຂອງລາວໄດ້ກຳເນີດເກີດຂຶ້ນໃນຍຸກຕົ້ນບູຮານລາວຄື: ພ.ສ




ຕົວໜັງສືລາວທີ່ໃຊ້ໃນສະຕະວັດທີ XVI

Lao alphabets were used in XVIth century

613, ຄ.ສ 70-72 ຊຶ່ງເປັນສະໄໝທີ່ຊົນຊາດອ້າຍລາວສ່ວນໜຶ່ງຍັງຕັ້ງຫຼັກຢູ່ມົນທົນເສສວນພາກຕາເວັນຕົກສຽງໃຕ້ຂອງປະເທດຈີນ, ຊົນຊາດລາວໄດ້ຕັ້ງເມືອງຫຼວງຂຶ້ນເມືອງໜຶ່ງຮຽກວ່າ: ນະຄອນເພງາຍມີຂຸນເມັງເປັນກະສັດ, ກ່ອນໜ້ານັ້ນ ພະເຈົ້າແຜ່ນດິນຈີນຊື່ວ່າ: ວູ່ຕີ ໄດ້ແຕ່ງຕັ້ງໃຫ້ຄະນະທູດໄປສືບເບິ່ງສາສະໜາໃນອິນເດຍ, ຄະນະທູດຈີນໄດ້ຜ່ານນະຄອນເພງາຍຂອງລາວແຕ່ຂຸນເມັງບໍ່ຍອມໃຫ້ຜ່ານ, ແລ້ວໃນທີ່ສຸດເກີດສົງຄາມກັນຫຼາຍປີແຕ່ເສຍໄຊໃຫ້ກັບຈີນໃນພ.ສ256, ມາໃນປີ ພ.ສ 552 ຈີນເກີດວຸ່ນວາຍ. ຕອນນີ້ ຂຸນວັງເມືອງ ຜູ້ສືບທອດນະຄອນເພງາຍໄດ້ໂອກາດປະກາດເອກະລາດ. ແຕ່ຕອນນີ້ຄົນລາວມີ 2 ພວກຄື: ພວກຢູ່ນະຄອນເພງາຍຮຽກວ່າ ພວກອ້າຍລາວ, ພວກຢູ່ຝ່າຍໃຕ້ເອີ້ນວ່າ ພວກງາຍລາວ.

ມາເຖິງປີ ພ.ສ 600 ຄ.ສ 57 ເຈົ້າແຜ່ນດິນຈີນຊື່ວ່າ: ມິງຕີ້ຝັນເຫັນລັດສະໝີຮຸ່ງເຮືອງຢູ່ທ້ອງຟ້າເບື້ອງຕາເວັນຕົກ, ມີພວກຂຸນຜູ້ໃຫຍ່ເວົ້າວ່າ ນັ້ນແມ່ນສາສະໜາຮຸ່ງເຮືອງຢູ່ອິນເດຍ, ພະເຈົ້າມິງຕີ້ ຈຶ່ງແຕ່ງຄະນະທູດໄປສືບເຖິງ 7 ປີ ແລ້ວເອົາພະພຸດທະຮູບ, ພ້ອມພະທຳພະສົງມາພ້ອມ ຊຶ່ງເປັນສາສະໜາພຸດນິກາຍມະຫາຍານແລ້ວເຜີຍແຜ່ໄປນາໆປະເທດທີ່ໃກ້ຄຽງກັນ. ມາຮອດຍຸກນີ້ພະເຈົ້າແຜ່ນດິນລາວອົງໜຶ່ງຊື່ວ່າ: ຂຸນຫຼວງລີເມົາ ຜູ້ເປັນປະມຸກຢູ່ນະຄອນງາຍລາວ ທີ່ຕັ້ງອານາຈັກຢູ່ອານາຈັກໜອງແສ, ສະໄໝນີ້ຄົນລາວໄປມາຄ້າຂາຍກັບປະເທດຈີນ ແລະ ອິນເດຍ. ເມື່ອເຈົ້ານະຄອນງາຍລາວເຫັນວ່າສາສະໜາພຸດມີຄວາມກ້າວໜ້າ ແລະມີເຫດຜົນດີກວ່າການຖືຜີ ແລະ ພາມ ເພິ່ນຈຶ່ງນຳເອົາສາສະໜາພຸດນິກາຍມະຫາຍານ ພ້ອມທັງຄຳພີພະໄຕປີດົກເຂົ້າມາພ້ອມ, ເພື່ອໃຫ້ຄົນລາວໄດ້ສຶກສາຮ່ຳຮຽນ, ເພື່ອໃຫ້ຮູ້ຈັກອັນໃດຜິດ ອັນໃດຖືກ, ອັນດີ ແລະອັນຊົ່ວເປັນຕົ້ນ. ຄຳພີພະໄຕປີດົກທີ່ກ່າວມານັ້ນ ເປັນໂຕອັກສອນສັນສະກິດ ຫຼື ເທວະນາຄະຣີ ເປັນໂຕອັກສອນທີ່ໃຊ້ກັນໃນອິນເດຍພາກເໜືອ,

ໂຕອັກສອນສັນສະກິດທີ່ວ່ານີ້ ພາໃຫ້ຄົນລາວຮຽນຍາກ, ຂຽນຍາກ ແລະ ແປກໍຍາກ. ບັນພະບູລຸດໃນສະໄໝນັ້ນ ຈຶ່ງພາກັນປະດິດໂຕອັກສອນຂອງລາວຂຶ້ນມາເອງ ໂດຍອີງໃສ່ໂຕອັກສອນສັນສະກິດນັ້ນເປັນໂຕຫຼັກ, ລາວເຮົາຈຶ່ງມີໂຕອັກສອນແບບລາວ (ໂຕເຟື້ອງ), ຈາກນັ້ນມາຄົນລາວຈຶ່ງມີໂຕອັກສອນ ຫຼື ອັກສອນສາດເປັນຂອງຕົນເອງ, ສາມາດອ່ານອອກຂຽນໄດ້, ຈາກນັ້ນ ກໍເກີດມີພາສາວັນນະຄະດີ, ວັນນະກຳຕ່າງໆ ທີ່ປະກົດໃນໃບລານ, ພັບສາ ແລະ ພັດສະດຸອື່ນໆ ເຊັ່ນ: ຂຽນໃສ່ໄມ້ແປ້ນ, ໄມ້ກະບັ້ງ, ແຜ່ນຫີນ, ແຜ່ນກົ່ວ, ແຜ່ນດິນໜຽວ, ແຜ່ນໂລຫະ........... ໃນສະຖານທີ່ຕ່າງໆ.



*ໜັງສືໃບລານລາວ*

ການຂີດຂຽນກໍໃຊ້ເຫຼັກຈານ, ໃຊ້ປີກນົກ, ແລະ ໄມ້ແຂມໄມ້ເລົາ, ນໍ້າມຶກກໍໃຊ້ຂອງທຳມະຊາດເຊັ່ນ: ນໍ້າໝາກຊາຕີ, ໝາກຜັກປັງ, ໝາກມອນ ແລະ ບີປາຕ່າງໆ. ນີ້ແມ່ນຕົ້ນກຳເນີດຂອງສິ່ງພິມລາວ ເອີ້ນວ່າຜະລິດຕະພັນຫັດຖະກຳພິມຈຳໜ່າຍ ເພາະເວລານີ້ ຍັງບໍ່ທັນມີສຳນັກພິມ ແລະ ໂຮງພິມ, ການຈຳໜ່າຍກໍມີແຕ່ແຈກຢາຍລ້າ, ແຈກເພື່ອເປັນທຳມະທານແລະຂຽນເພື່ອທຳມະທານເພື່ອໃຫ້ຄົນໄດ້ຮູ້ກ່ຽວກັບທຳມະຄຳສັ່ງສອນຂອງພະພຸດທະເຈົ້າ ແລະ ນິທານວັນນະກຳທີ່ເປັນຄະຕິທຳໃຫ້ຄົນໄດ້ຮູ້ໄດ້ອ່ານ. ຊົນຊາດລາວມີໂຕອັກສອນ 2 ແບບ, ໃນແບບທີ 2 ນີ້ເອີ້ນວ່າ ອັກສອນທຳ (ໂຕທຳ) ເພື່ອໃຊ້ໃນທາງພຸດທະສາສະໜາໂດຍສະເພາະແມ່ນຄຳພີດີກາ, ໂຕອັກສອນທຳໄດ້ດັດແປງມາຈາກພາສາບາລີ ຫຼື ເອີ້ນວ່າ: ອັກສອນຄຣີນ, ອັກສອນຄຣີນກາຍມາເປັນເຄົ້າໜັງສືໃນສີລັງກາ, ມອນ, ພະມ້າ, ລາວ, ລື້ ແລະ ໄຕໃຫຍ່, ໂຕອັກສອນບາລີ(ຄຣີນ)ເປັນໂຕອັກສອນຂອງຊາວອິນເດຍພາກໃຕ້, ສ່ວນໃຫຍ່ແມ່ນໃຊ້ຢູ່ໃນແຄວ້ນມະຄະທະ (ມະຄົດ). ໃນປີພ.ສ 236 ກ່ອນນັ້ນພະເຈົ້າອະໂສກກະລາດໄດ້ເປັນໃຫຍ່ ແລະ ມີອຳນາດບາດໃຫຍ່ໃນອິນເດຍ ເພິ່ນຈຶ່ງເອີ້ນອັກສອນບາລີວ່າ : “ ຄຣີນ ”, ເວລານັ້ນເພິ່ນໄດ້ໃຫ້ພະສົງຊື່ວ່າ: ພະໂສນະກັບພະອຸດຕະລະເປັນປະທານເພື່ອນຳເອົາສາສະໜາພຸດນິກາຍຫີນະຍານ ( ລັດທິເຖລະວາດ ), ມາເຜີຍແຜ່ໃນສຸວັນນະພູມປະເທດ ( ແຫຼມອິນດູຈີນ ), ເລີ່ມແຕ່ປະເທດມອນ, ພະມ້າ, ແລະ ໄທ ໃນພາກຕາເວັນອອກຂອງແຫຼມອິນດູຈີນ, ຊົນຊາດມອນທີ່ເປັນໃຫຍ່ໃນພາກຕາເວັກຕົກ ຈຶ່ງຮັບເອົາໂຕອັກສອນບາລີມາດັດແປງໃຊ້ເປັນອັກສອນຂອງຕົນ, ຕໍ່ມາຊົນຊາດພະມ້າເຂົ້າມາຢູ່ກັບມອນແລ້ວກໍຮັບເອົາວັດທະນະທຳມອນຕະຫຼອດທັງໂຕອັກສອນແລ້ວມາດັດແປງເປັນໂຕອັກສອນຂອງພະມ້າ. ເມື່ອມາຮອດ ພ.ສ 1600 ຄ.ສ 1057 ພະເຈົ້າອະນຸຣຸດທະເປັນກະສັດພະມ້າຜູ້ຍິ່ງໃຫຍ່ ຈຶ່ງເຜີຍແຜ່ສາ

ສະໜາເຂົ້າໃນແຫຼມອິນດູຈີນພາກເໜືອ ຄື: 12 ພັນນາ ຈົນເລີຍໄປເຖິງ ລ້ານຊ້າງເຊັ່ນ: ຊຽງຕຸງ, ຊຽງຮຸ້ງ, ຊຽງໃໝ່ ແລະ ຊຽງທອງ. ຈາກນັ້ນລາວ ຈຶ່ງ ຮັບເອົາໂຕອັກສອນແບບມອນ ແລະ ພະມ້ານມາໃຊ້ໃນທາງສາສະໜາ ເພາະຖືວ່າ ມັນເປັນເຄົ້າຂອງພາສາບາລີ ເຮົາຈຶ່ງເອີ້ນວ່າ: ໂຕໜັງສື ທຳຈົນເຖິງປະຈຸບັນ ແລະ ໃຊ້ໃນທາງພຸດທະສາສະໜາ, ລາວເຮົາຈຶ່ງໄດ້ ໂຕອັກສອນ 2 ຢ່າງ.

## ວຽກງານພິມຈຳໜ່າຍໃນສະໄໝກາງບູຮານລາວ:

ເມື່ອຊົນຊາດລາວມີໂຕໜັງສື 2 ແບບຄືແນວນັ້ນ, ວຽກງານພິມ ຈຳໜ່າຍ ກໍຄືສິ່ງພິມໄດ້ຂະຫຍາຍໂຕຂຶ້ນໄວວາ ຖ້າທຽບກັບສະໄໝຕົ້ນບູ ຮານລາວ, ນັບຕັ້ງແຕ່ເຈົ້າຟ້າງຸ່ມໄດ້ທ້ອນໂຮມລາວໃຫ້ເປັນສັກດີນາລວມ ສູນມາ, ໂດຍສະເພາະແມ່ນສະໄໝທີ່ລາວເຮົາມີຄວາມຮຸ່ງເຮືອງຈະເລີນ ດ້ານສິລະປະຫັດຖະກຳ (ສະໄໝເຈົ້າໄຊຍະເສດຖາທິລາດ ແລະ ສະໄໝ ພະເຈົ້າສຸລິຍະວົງສາ). ເພາະໃນເວລານັ້ນມີນັກປາດອາຈານຢ່າງຫຼວງ ຫຼາຍ, ມີນັກຂີດນັກຂຽນ, ນັກສິລະປະ-ວັນນະຄະດີນັບທັງຄະດີໂລກ ແລະ ຄະດີທຳ, ຜະລິດຕະພັນພິມຈຳໜ່າຍໃນຍຸກນີ້ໄດ້ຂຽນອອກໃສ່ໃບລານ, ພັບສາ ແລະພັດສະດຸອື່ນໆຢ່າງຫຼວງຫຼາຍ ເຊັ່ນ: ກາບກອນ, ໂຄງ, ສານ, ນິ ທານວັນນະກຳ ແລະ ຕຳນານຕ່າງໆ, ເຫຼົ່ານີ້ຜະລິດອອກເພື່ອສຶກສາອົບ ຮົມຄົນ ໃຫ້ຊົງຕົວຢູ່ກັບຄຸນງາມໃນຫຼາຍດ້ານຈົນກາຍເປັນວັດທະນະທຳ ປະຈຳຊີວິດຂອງຄົນລາວເຖິງປະຈຸບັນ. ການປະດິດແຕ່ງວັນນະກຳ - ວັນ ນະຄະດີມາໃນປະເພດຮ້ອຍກອງ ແລະ ຮ້ອຍແກ້ວເຊັ່ນ: ເລື່ອງກາລະ ເກດ, ສິນໄຊ, ແຕງອ່ອນ, ທ້າວກ່ຳກາດຳ, ຄັດທະນາມ, ສຽວສະຫວາດ, ອິນທິຍານສອນລູກ, ສຸດທິອ່າວ, ພະຫຍາຍ່ອຍ, ປູ່ສອນຫຼານ ແລະ ຫຼານ




ສອນປູ່, ສານລຶບຜະສູນ, ຈັນທະຄາດ, ປະຖົມມະສົມໂພດ, ປະຖົມມະມູນ, ປະຖົມມະກັບ ແລະ ຕຳນານຕ່າງໆ, ຜະລິດຕະພັນພິມຈຳໜ່າຍໃນຍຸກກາງບູຮານນີ້ ເຖິງວ່າມີຄວາມກ້າວໜ້າຂະຫຍາຍໂຕ ແຕ່ກໍ່ຍັງຄົງໂຕ

ຢູ່ກັບຜະລິດຕະພັນຫັດຖະກຳ, ເພາະຍັງບໍ່ທັນມີສຳນັກພິມ ແລະ ໂຮງພິມ, ສ່ວນວຽກງານການຈຳໜ່າຍກໍຍັງຄົງໂຕຢູ່ກັບການແຈກຢາຍລ້າ, ແຕ່ຜະລິດຕະພັນເວລານີ້ ມີເນື້ອໃນຄວາມໝາຍເລິກເຊິ່ງ ທັງແບບນຽນ, ໃຫ້ຄວາມປະທັບໃຈ ແລະ ໃຫ້ຄວາມບັນເທີງຢ່າງບໍ່ຈືດຈາງຈົນເຖິງປະຈຸບັນ, ສາມາດອົບຮົມບົ່ມນິດໄສຂອງຄົນລາວໃຫ້ມີສັດຈະທັດ, ດຸໝັ່ນຂະຫຍັນພຽນ, ຮູ້ເຄົາລົບນົບໄຫວ້, ຮູ້ຮີດຄອງປະເພນີອັນດີງາມ, ຊຶ່ງນັບວ່າສິ່ງພິມໃນເວລານີ້ ໄດ້ສຶກສາອົບຮົມໃຫ້ຄົນລາວໄດ້ຮັບເອົາຄວາມຮູ້ໂດຍທາງອ້ອມຢ່າງຫຼາກຫຼາຍ.

ຜະລິດຕະພັນພິມຈຳໜ່າຍ ໃນສະໄໝກາງບູຮານລາວນີ້ຍັງສ່ອງແສງໃຫ້ຄົນຍຸກປັດຈຸບັນໄດ້ເຫັນການພົວພັນສັງຄົມໃນອະດີດ ແລະ ສ່ອງແສງໃຫ້ເຫັນຍາມປະເທດຊາດໄດ້ຮັບເອກະລາດ ແລະ ສີວິໄລ, ພ້ອມກັນນັ້ນ ສິລະປະ-ວັນນະຄະດີກໍຄືສິ່ງພິມ ຍັງສ່ອງແສງໃຫ້ເຫັນຍາມປະເທດຊາດລາວເສຍເອກະລາດ, ເປັນເມືອງຂຶ້ນຕ່າງຊາດ ແລະ ປະຊາຊົນຖືກກົດຂີ່ຂູດຮີດ ແລະ ອື່ນໆ.

ໃນຕອນທ້າຍຂອງສະໄໝກາງບູຮານນີ້ ໄດ້ມີການສະສົມ, ທ້ອນໂຮມ ແລະ ມີຜະລິດຕະພັນພິມຈຳໜ່າຍຢ່າງຫຼວງຫຼາຍ ຈົນເກີດມີຫໍໄຕຂຶ້ນຢູ່ຕາມວັດວາອາຮາມ, ຊຶ່ງແມ່ນການກຳເນີດເບື້ອງຕົ້ນຂອງຫໍສະໝຸດລາວ, ຢູ່ໃນຕອນທ້າຍຂອງສະໄໝບູຮານລາວນັ້ນ ກໍເກີດມີຈົດໝາຍເຫດວຽງຈັນ ຊຶ່ງແມ່ນໜໍ່ແໜງຂອງວາລະສານ ແລະ ໜັງສືພິມເກີດຂຶ້ນ, ຢູ່ປະເທດໃກ້ຄຽງກໍມີຈົດໝາຍເຫດກຸງສີເຊັ່ນກັນ, ຈາກບັນຫາດັ່ງກ່າວວຽກງານພິມຈຳໜ່າຍຈຶ່ງເປັນກົກເຄົ້າຂອງສິ່ງພິມທັງປວງ.

## III. ວຽກງານພິມຈຳໜ່າຍໃນສະໄໝຕໍ່ສູ້ກູ້ຊາດຕ້ານຈັກກະພັດຜູ້ຮຸກຮານເລີ່ມແຕ່ປີ 1950 ເປັນຕົ້ນມາ.

ຕະຫຼອດໄລຍະແຫ່ງການນຳພາຕໍ່ສູ້ປົດປ່ອຍຊາດຂອງພັກປະຊາຊົນປະຕິວັດລາວ ເພື່ອຍາດເອົາຄວາມເປັນເອກະລາດແຫ່ງຊາດ ແລະ ເພື່ອນຳເອົາຄວາມເປັນອິດສະລະພາບມາສູ່ປວງຊົນລາວທັງຊາດ ກໍຄື ຕະຫຼອດໄລຍະ 30 ກວ່າປີແຫ່ງພາລະກິດປົກປັກຮັກສາ ແລະ ສ້າງສາປະເທດຊາດ, ກໍ່ສ້າງລະບອບປະຊາທິປະໄຕປະຊາຊົນ, ພັກປະຊາຊົນປະຕິວັດລາວຍາມໃດກໍຖືເອົາການສຶກສາອົບຮົມ ຂົນຂວາຍປະຊາຊົນເພື່ອຈັດຕັ້ງປະຕິບັດແນວທາງໃຫ້ໄປສູ່ການບັນລຸໝາກຜົນຂອງການປະຕິວັດ, ສະນັ້ນການສຶກສາອົບຮົມຍົກລະດັບພະນັກງານ ແລະ ປະຊາຊົນໃນທົ່ວປະເທດ, ນອກຈາກຈະໃຊ້ຮູບການໂຄສະນາແບບປາກເປົ່າແລ້ວ ກໍຍັງໃຊ້ປຶ້ມ ແລະ ສິ່ງພິມຕ່າງໆເປັນພາຫະນະ. ຈະແມ່ນປະເພດທິດສະດີ, ວັນນະຄະດີ, ວັນນະກຳ ກໍໄດ້ຈັດພິມເຜີຍແຜ່ເປັນສ່ວນໃຫຍ່ , ນອກຈາກນີ້ ກໍຍັງໃຊ້ປຶ້ມຄູ່ມືຕ່າງໆກ່ຽວກັບວິຊາຊີບ ເພື່ອພັດທະນາສ້າງສາເສດຖະກິດ-ສັງຄົມ, ທັງນີ້ ກໍເພື່ອໃຫ້ພະນັກງານ ແລະ ປະຊາຊົນພົນລະເມືອງໄດ້ຮັບຄວາມຮູ້ນອກລະບົບ ການສຶກສາເພື່ອທຳມາຫາລ້ຽງຊີບ ຫຼື ສ້າງເສດຖະກິດຄອບຄົວ ປະກອບສ່ວນເຮັດໃຫ້ປະເທດຊາດຮຸ່ງເຮືອງຈະເລີນ.

ໄລຍະແຫ່ງການຕໍ່ສູ້ປົດປ່ອຍຊາດກໍຄືໄລຍະປົກປັກຮັກສາ ແລະ ສ້າງສາປະເທດຊາດນັ້ນ ພັກປະຊາຊົນປະຕິວັດລາວ ຍາມໃດກໍໄດ້ເອົາການໂຄສະນາຜ່ານສິ່ງພິມ ໂດຍສະເພາະແມ່ນປຶ້ມເພື່ອເປັນການຍົກລະດັບ, ຜູ້ຍັງບໍ່ຮູ້ໜັງສື ກໍໄດ້ຮ່ຳຮຽນປະຊາສຶກສາເພື່ອລຶບລ້າງຄວາມບໍ່ຮູ້ໜັງສື, ຄູອາຈານ ແລະ ປະຊາຊົນພົນລະເມືອງກໍໄດ້ໃຊ້ປຶ້ມຫຼັກສູດຕາມ

ຕຳລາຊັ້ນຮຽນປະກອບໃຫ້, ຜູ້ມີລະດັບຄວາມຮູ້ສູງ ກໍມີຕຳລາແບບປື້ມອ່ານເສີມຄວາມຮູ້ຢ່າງຫຼາກຫຼາຍ, ທ່ານ ເລນິນເວົ້າວ່າ: "ບໍ່ມີປື້ມ ບໍ່ມີປັນຍາຄວາມຮູ້ສູງ ສ້າງສັງຄົມນິຍົມ-ສັງຄົມຄອມມູຍນິດບໍ່ໄດ້".

ວຽກງານພິມຈຳໜ່າຍທີ່ໄດ້ກຳເນີດເກີດຂຶ້ນ ພ້ອມກັບການປະຕິວັດລາວ, ເພື່ອປະຕິບັດຕາມແຜນນະໂຍບາຍເປີດກ້ວາງ, ຂະຫຍາຍແນວໂຮມ, ຂະຫຍາຍສິງຄາມປະຊາຊົນຢ່າງແຂງແຮງ, ໜີບຮັດກຳລັງສັດຕູ ແລະ ປຸກລະດົມຈິດໃຈຮັກຊາດຂອງພະນັກງານນັກຮົບຕະຫຼອດຮອດປະຊາຊົນບັນດາເຜົ່າ ໃຫ້ລຸກຮືຂຶ້ນຕໍ່ສູ້ກູ້ຊາດຍາດເອົາໄຊຊະນະໃນບັ້ນຮົບຕ່າງໆ, ພັກປະຊາຊົນປະຕິວັດລາວຈຶ່ງເຫັນຄວາມຈຳເປັນໃນການໂຄສະນາຜ່ານສິ່ງພິມ. ຈາກນັ້ນ ເພິ່ນຈຶ່ງຮຽກໂຮມ ແລະ ເປີດກອງປະຊຸມໃຫຍ່ຜູ້ແທນປະຊາຊົນທົ່ວປະເທດ ຂຶ້ນໃນວັນທີ 13 ສິງຫາ 1950. ກອງປະຊຸມຄັ້ງນີ້ໄດ້ຕົກລົງສ້າງຕັ້ງ "ແນວລາວອິດສະລະ ແລະ ຈັດຕັ້ງລັດຖະບານລາວຕໍ່ຕ້ານ" ໂດຍມີເຈົ້າສະເດັດ ສຸພານຸວົງ ເປັນນາຍົກລັດຖະມົນຕີຂອງລັດຖະບານລາວຕໍ່ຕ້ານ ແລະ ເປັນປະທານແນວລາວອິດສະລະ. ໃນມື້ດຽວກັນຄືໃນຕອນເຊົ້າເວລາ 8 ໂມງ (13 ສິງຫາ 1950) ໄດ້ສ້າງຕັ້ງໂຮງພິມລາວອິດສະລະຂຶ້ນຢ່າງເປັນທາງການ. ນີ້ຄືສັນຍະລັກ ແລະ ບົ່ງບອກເຖິງຕົ້ນກຳເນີດຂອງການພິມຈຳໜ່າຍທີ່ຕິດພັນຢູ່ກັບການປະຕິວັດ ກໍຄືພັກປະຊາຊົນປະຕິວັດລາວ. ໂຮງພິມລາວອິດສະຫຼະເປັນໜໍ່ແໜງຂອງສິ່ງພິມປະຕິວັດ. ເຖິງວ່າມັນຢູ່ໃນຂັ້ນປະຖົມປະຖານ ແຕ່ມັນມີເນື້ອໃນຄວາມໝາຍກວ້າງໄກ ເພາະມັນເກີດຂຶ້ນໃນສະໜາມຮົບ ແລະ ໄຟປະຕິວັດກຳລັງລຸກເປັນແປວ. ເມື່ອໂຮງພິມລາວອິດສະລະໄດ້ເກີດຂຶ້ນໃນຕອນເຊົ້າຂອງວັນທີ 13/08/1950 ພໍຮອດຕອນບ່າຍ 3 ໂມງ ໂຮງພິມແຫ່ງນີ້ ກໍໄດ້ພິມໜັງສືພິມລາວອິດສະລະເປັນຄັ້ງທຳອິດ ແລະ ເປັນສະບັບທຳອິດ. ໜັງສືພິມລາວອິດສະລະສະບັບນີ້ເປັນສະບັບພິເສດ ຊຶ່ງພິມເປັນສີແດງ, ຢູ່ເນື້ອໃນ

ຂອງໜັງສືພິມມີບົດບັນນາທິການ, ມີໂຄງການດຳເນີນງານຂອງສູນກາງແນວລາວອິດສະລະ ພ້ອມທັງໜ້າທີ່ຂອງຄະນະລັດຖະບານລາວຕໍ່ຕ້ານຈຳນວນ 7 ທ່ານ. ໜັງສືພິມສະບັບພິເສດນີ້ມີ 8 ໜ້າ, ຂະໜາດ 25x40cm ຈຳນວນພິມ 2.500 ສະບັບ ໂດຍໃຊ້ເວລາພິມ 2 ວັນ. ຫຼັງຈາກນັ້ນ ກໍສົ່ງໄປຈຳໜ່າຍ ໃນກົມກອງທະຫານຢູ່ແນວຮົບ, ໃນຄະນະລັດຖະບານລາວຕໍ່ຕ້ານ ແລະ ອື່ນໆໃນເຂດປົດປ່ອຍ. ສິ່ງພິມທີ່ຜະລິດໃນຮອບ 2 ແມ່ນພິມໃບປິວ ເພື່ອນຳໄປຫວ່ານຂົນຂວາຍ ເອົາຂ້າລາຊະການ, ທະຫານຕຳຫຼວດໃນກົງຈັກລັດຖະບານຫຸ່ນວຽງຈັນ. ຕໍ່ມາກໍໄດ້ພິມຄຳຮຽກຮ້ອງຂອງສູນກາງແນວລາວອິດສະລະ ແລະ ພິມໃບປິວປະກອບຮູບພາບເພື່ອຂົນຂວາຍເອົາພວກຫຸ່ນວຽງຈັນ. ໂຮງພິມລາວອິດສະລະເວລານັ້ນມຸງດ້ວຍໃບຄໍ້ ແລະ ແອ້ມດ້ວຍຝາໄມ້ເຮ້ຍ ຕັ້ງຢູ່ແຂວງຫົວພັນ; ຫົວໜ້າໂຮງພິມລາວອິດສະລະຜູ້ທຳອິດແມ່ນ ທ່ານ ສີທາ ເພັງແພງເມືອງ, ທ່ານ ສິງ ຫອມສົມບັດ ແລະ ທ່ານ ຄຳພັນ ຈັນທະລາດ ເປັນຄະນະ ແລະ ໃນຊຸມປີ 1950 ນີ້ໂຮງພິມລາວອິດສະລະ ກໍຄືວຽກງານພິມຈຳໜ່າຍຂຶ້ນກັບກະຊວງສຶກສາທິການໂດຍ ແມ່ນເຈົ້າ ສຸກ ວົງສັກ ເປັນລັດຖະມົນຕີ ແລະ ພາຍໃຕ້ການຊີ້ນຳນຳພາຂອງພະຍາ ພູມີ ວົງວິຈິດ.

ເຄື່ອງມືການຜະລິດສິ່ງພິມເວລານັ້ນ ແມ່ນປະຖົມປະຖານຄື: ໃຊ້ຫີນ ລີໂຕ 3 ແຜ່ນ ເພື່ອແກະສະຫຼັກໂຕໜັງສືໃຫ້ເປັນແມ່ພິມ, ເຈ້ຍພິມ




*ແຜ່ນຫີນລີໂຕ*



*ຂັ້ນຕອນການຜະລິດສິ່ງພິມດ້ວຍຫີນລີໂຕ*

ກໍໃຊ້ເຈ້ຍສາໂດຍຊອກຊື້ນຳປະຊາຊົນ ແລະ ຈາກປະເທດເພື່ອນບ້ານ, ນ້ຳມຶກພິມມີ 5 ຊະນິດຄື: ສີດຳ, ຂາວ, ແດງ, ເຫຼືອງ ແລະ ມຸ່ຍ ຊຶ່ງໄດ້ປ້ອນເຂົ້າໄປຢ່າງລະ 5 ກິໂລ.

ວຽກງານພິມຈຳໜ່າຍຄ່ອຍໆຂະຫຍາຍໂຕຂຶ້ນຕາມຂະບວນການຕໍ່ສູ້ກູ້ຊາດ, ໂດຍສະເພາະແມ່ນພາຍຫຼັງກອງທັບປະຊາຊົນຫວຽດນາມມອບຈັກພິມຕີໄປໃຫ້ 1 ເຄື່ອງ ແລະ ສ.ປ ຈີນ ກໍມອບໃຫ້ 1 ເຄື່ອງ. ເຄື່ອງຈັກພິມນີ້ເຖິງວ່າ ທັນສະໄໝກວ່າເກົ່າ ແຕ່ກໍໃຊ້ແຮງຄົນດຶງ ຫຼື ຢຽບເອົາ. ຈຳນວນກຳມະກອນໂຮງພິມ ກໍເພີ່ມຂຶ້ນຈາກ 12 ຄົນເປັນ 15 ຄົນ

ຕາມການເຕີບໃຫຍ່ຂອງການພິມ ຊຶ່ງປະກອບດ້ວຍ 8 ໜ່ວຍງານ ແຕ່ຕອນນັ້ນ ຫີນລີໂຕກໍຍັງດຳເນີນ ແຕ່ເພີ່ມຂຶ້ນຮອດ 7 ແຜ່ນ ແລະ ລວມທັງອັນເກົ່າເປັນ 10 ແຜ່ນ, ສິ່ງພິມກໍເພີ່ມຂຶ້ນເຊັ່ນ: ປຶ້ມແບບຮຽນພິມ ແລະ ໃບປິວ ແຕ່ 10-1500 ໃບ, ແຕ່ລະມື້ໃຊ້ເວລາພິມແຕ່ 10-12 ຊົ່ວໂມງ, ທັງນີ້ ກໍເພື່ອຜະລິດສິ່ງພິມໄວ້ຮັບໃຊ້ລະດູແລ້ງໃນຊຸມປີ 1950.



*ເຄື່ອງຈັກພິມຕີໂປທີ່ນຳໃຊ້ໃນໂຮງພິມແຫ່ງລັດ*

ມາໃນວັນທີ 6/01/1956 ກອງປະຊຸມໃຫຍ່ແນວລາວອິດສະລະໄດ້ເກີດຂຶ້ນຢູ່ເຂດທີ່ໝັ້ນ ແຂວງຫົວພັນ, ກອງປະຊຸມໄດ້ປ່ຽນຊື່ແນວລາວອິດສະລະມາເປັນ "ແນວລາວຮັກຊາດ". ເວລານີ້ວຽກງານພິມຈຳໜ່າຍ ກໍຄືໂຮງພິມ ລາວອິດສະລະກໍໄດ້ປ່ຽນມາເປັນ "ໂຮງພິມລາວຮັກຊາດ" ແລະ ໜັງສືພິມລາວອິດສະຫຼະ ກໍປ່ຽນມາເປັນ "ໜັງສືພິມລາວຮັກຊາດ".

ເຖິງປີ 1957 ລວມລາວຄັ້ງທີ 1 ເກີດຂຶ້ນ ໂດຍມີເປົ້າໝາຍປອງດອງຊາດ, ຢູ່ໂຮງພິມລາວຮັກຊາດມີພະນັກງານຈຳນວນ 17 ຄົນ ກໍໄດ້ນຳເອົາເຄື່ອງຈັກພິມເຂົ້າມາວຽງຈັນ ເພື່ອພິມໜັງສືພິມລາວຮັກຊາດ, ໂຮງພິມລາວຮັກຊາດຕັ້ງຢູ່ຄຸ້ມຂົວດິນຕໍ່ໜ້າກະຊວງປ້ອງກັນຄວາມສະຫງົບປະຈຸບັນ. ເຈົ້າຂອງເຮືອນບ່ອນຕັ້ງໂຮງພິມ ແລະ ສຳນັກພິມ ຊື່ແມ່ປ້າເຫງົ້າ ເປັນເຮືອນແຖວ 2 ຊັ້ນ, ຕອນນີ້ ມີຈັກພິມຕີໂປແທ່ນນອນ 8 ຫຼື 1 ເຄື່ອງ ແລະ ຈັກຕັດ 1 ເຄື່ອງ. ວຽກງານພິມຈຳໜ່າຍ ກໍຄືການພິມ ແລະການຈຳໜ່າຍດຳເນີນໄປໄດ້ແຕ່ພຽງ 16 ເດືອນ ກໍຖືກລັດຖະບານຫຸ່ນວຽງຈັນເອົາຕຳຫຼວດຢູ່ດອນຕີ້ວໄປປິດລ້ອມ ເພື່ອບໍ່ໃຫ້ພິມສິ່ງພິມອີກ (ປີ 1959). ໃນເວລານີ້ ວຽກງານຈຳໜ່າຍກໍຢູ່ນຳກັນກັບໂຮງພິມ; ທັງພິມທັງຈຳໜ່າຍ, ມີກຳມະກອນຈຳນວນ 48 ຄົນ, ກໍໄດ້ຖືກສົ່ງກັບຄືໄປທ້ອງຖິ່ນຂອງໃຜມັນເພື່ອໄປເປັນພົນລະເມືອງດີ, ຈຳນວນໜຶ່ງຖືກສົ່ງໄປຮຽນຢູ່ຕ່າງປະເທດ. ເວລານີ້ ໜັງສືພິມລາວຮັກຊາດໄດ້ພິມ 12.000 ສະບັບຕໍ່ອາທິດ. ໜັງສືພິມ ກໍໄດ້ອອກຈຳໜ່າຍແຕ່ 65 ສະບັບ, ສະບັບທີ 65 ໄດ້ແຈກຢາຍໃນຕົວເມືອງວຽງຈັນຢາຍໄດ້ພຽງແຕ່ 3000 ສະບັບກໍຖືກຢຸດຕິ.

ເມື່ອໂຮງພິມສຳນັກພິມຖືກປິດ, ພະນັກງານກຳມະກອນຖືກຄຸມຂັງໄວ້ກັບໂຮງພິມເປັນເວລາ 45 ວັນ ອະນຸຍາດແຕ່ແມ່ຍິງທີ່ເປັນເອື້ອຍລ້ຽງ 2 ຄົນໄປຕະຫຼາດທໍ່ນັ້ນ. ຮອດທ້າຍເດືອນ 5/1959 ພວກຕຳຫຼວດຄວບຄຸມຈຶ່ງຢຸດຕິ. ພໍທ້າຍເດືອນ 6/1959 ທ່ານ ສາລີ ວົງຄຳຊາວ ໃນນາມຜູ້ເປັນຫົວໜ້າສຳນັກງານຜູ້ຕາງໜ້າແນວລາວຮັກຊາດ ປະຈຳວຽງຈັນ ແນະນຳໃຫ້ທ່ານ ສີຫາ ເພັງແພງເມືອງ ຫົວໜ້າໂຮງພິມລາວຮັກຊາດວ່າ: ໃຫ້ໄປເອົາອັດຕາກິນຂອງເອື້ອຍນ້ອງພ້ອມເງິນເດືອນນຳທ່ານ ກີນົມພົນເສນາ ເພາະຕອນນີ້ ເພິ່ນຈະໄປຕ່າງແຂວງ ແລະ ເພິ່ນກໍບອກ ທ່ານ

ສີຫາ ອີກວ່າ: ຖ້າຜູ້ໃດກັບຄືນທ້ອງຖິ່ນ ກໍໃຫ້ອຳນວຍຄວາມສະດວກໃຫ້ແກ່ເຂົາເຈົ້າຄືເງິນຈ້າງເຄື່ອງບິນ, ຈ້າງລົດ ແລະ ເງິນກິນກໍໃຫ້ໄປເອົານຳທ່ານ ກິນິມ ພົນເສນາ. ຕອນນີ້ອ້າຍນ້ອງພະນັກງານ ແລະ ກຳມະກອນຈຳນວນໜຶ່ງບໍ່ກັບຄືນທ້ອງຖິ່ນ ຄືພາກັນອອກໄປຫາສະໝັກເຮັດວຽກຢູ່ຕາມໂຮງພິມເອກະຊົນທາງນອກໃນວຽງຈັນ; ສ່ວນສະຫາຍ ບີ ຄົນເຜົ່າມົ້ງຕອບວ່າເຂົາຈະບໍ່ໄປໃສທັງນັ້ນ ແລະ ກໍບອກວ່າ ເຂົາຈະເຝົ້າໂຮງພິມຫຼັງນີ້ຈົນຮອດນາທີສຸດທ້າຍ.

ມາຮອດວັນທີ 13/7/1959 ພະນັກງານໂຮງພິມລາວຮັກຊາດຈຳນວນໜຶ່ງໄດ້ສິ່ງລົງຮາກຖານ, ທ່ານ ສີຫາ ເພັງແພງເມືອງ ຫົວໜ້າໂຮງພິມຖືກສົ່ງໄປເຂດລ້ອງສັງລ້ອງຕອນ, ໄປຢູ່ກັບ ທ່ານ ທິດມ່ອນ ສາວຈັນທະລາ ແລະ ໃຫ້ຮັບຜິດຊອບໂຄສະນາ. ພໍຮອດ ເດືອນ 8/1959 ພວກພະນັກງານກຳມະກອນໃນໂຮງພິມ ແລະ ສຳນັກພິມ ລາວຮັກຊາດຄື: ທ່ານ ບຸນທຳ ໄຊຍະລາດ, ທ່ານ ຖານ, ທ່ານ ບົວພອນ, ທ່ານ ຫຼ້າ ແລະ ທ່ານ ເນດ ກໍໄດ້ອອກຈາກໂຮງພິມໄປເປັນກຳມະກອນໂຮງພິມເອກະຊົນເຊັ່ນກັນ. ທັງນີ້ ກໍເພື່ອກຽມເງື່ອນໄຂໂຕນອອກເຂດພື້ນຖານການປະຕິວັດ. ໃນທີ່ສຸດພວກນີ້ ກໍໄດ້ໄປຮອດແຂວງຫົວພັນ ແຕ່ເສຍຊີວິດ 1 ຄົນ, ຍ້ອນເສຍລັບໃຫ້ສັດຕູ.

ຕໍ່ມາຮອດ ວັນທີ 9/8/1960 ເກີດເສິກກາງເມືອງໃນນະຄອນຫຼວງວຽງຈັນ, ກອງພັນທະຫານລາບອາກາດຂອງພວກຫຸ່ນວຽງຈັນເອງ ກໍ່ລັດຖະປະຫານ, ກຳລັງປະຕິວັດກໍໄດ້ກັບຄືນວຽງຈັນອີກຄັ້ງໜຶ່ງ ເພື່ອຊ່ວຍກຳລັງລັດຖະປະຫານປ້ອງກັນນະຄອນຫຼວງວຽງຈັນ. ຕອນນີ້ ສະຫາຍ ບີ ອອກໄປຢູ່ແຂວງວຽງຈັນ ກໍໄດ້ກັບຄືນມາພິມໜັງສື (ເອກະສານ) ໂຮງພິມລາວຮັກຊາດທີ່ປະຮ້າງນັ້ນ ຈົນເຖິງມື້ທີ່ກຳລັງລັດຖະປະຫານ ແລະ ກຳລັງຮັກຊາດເດີນທາງຂຶ້ນໄປປົດປ່ອຍທົ່ງໄຫຫີນ ແຂວງຊຽງແຂວງ.

ຮອດວັນທີ 18-12-1960 ໂຮງພິມລາວຮັກຊາດ ກໍຄືສຳນັກພິມຈຳໜ່າຍໄດ້ສ້າງຕັ້ງຄືນໃໝ່ຢູ່ແຂວງຫົວພັນ. ເວລານີ້ ພິມໜັງສືພິມລາວຮັກຊາດ ລາຍ 15 ວັນ, ເດືອນໜຶ່ງພິມ 2 ສະບັບ, ພິມໃບປິວກ່ຽວກັບຄຳຮຽກຮ້ອງຂອງສູນກາງແນວລາວຮັກຊາດ. ໃນເວລານີ້ ມີພະນັກງານກຳມະກອນ 34 ຄົນ ແລະ ສຳນັກພິມ ກໍພຽງແຕ່ເປັນໜ່ວຍງານບັນນາທິການກວດແກ້ທີ່ນັ້ນ. ມາຮອດ ເດືອນ 3/1968 ຈິ່ງຕັ້ງເປັນສຳນັກພິມລາວຮັກຊາດຂຶ້ນເປັນທາງການແຕ່ກໍ່ຢູ່ກັບໂຮງພິມ.

ເລີ່ມແຕ່ ປີ 1969 ໄປຈົນເຖິງ 1975 ເຂດປົດປ່ອຍໄດ້ເຕີບໃຫຍ່ຈົນມີລັກສະນະເປັນລັດໜຶ່ງເພາະກວມເອົາຮອດ 3/5 ຂອງດິນແດນທົ່ວປະເທດ, ພົນລະເມືອງກວມເອົາ 1/3. ຕອນນີ້ສູນກາງພັກໄດ້ຈັດຕັ້ງຄະນະໂຄສະນາ-ອົບຮົມວັດທະນະທຳສຶກສາຂຶ້ນ ເອີ້ນວ່າ: ຄ.ອ.ວ ສູນກາງພັກ. ເວລານີ້ ວຽກງານ ພິມຈຳໜ່າຍ ໄດ້ສັງກັດຢູ່ ຄ.ອ.ວ. ຕອນນີ້ ຄ.ອ.ວ ໄດ້ສັ່ງໃຫ້ເພີ່ມພາຫະນະການພິມ, ເພີ່ມກຳມະກອນ ແລະ ຈັດຕັ້ງໂຮງຮຽນເພື່ອສ້າງພະນັກງານກຳມະກອນການພິມໃຫ້ບັນດາ ແຂວງທົ່ວປະເທດ ແລະໃຫ້ສ້າງຕັ້ງໂຮງພິມຂະໜາດກາງຢູ່ເຂດປົດປ່ອຍຂຶ້ນ 1 ຫຼັງ ຕັ້ງຢູ່ແຂວງອຸດົມໄຊ ເພື່ອຮັບໃຊ້ 6 ແຂວງພາກເໜືອ, ສ້າງຂຶ້ນໃນປີ 1972 ເອີ້ນວ່າໂຮງພິມມິດຕະພາບລາວ-ຈີນ. ໂຮງພິມ ແລະສຳນັກພິມລາວຮັກຊາດໄດ້ຕັ້ງຢູ່ໃນຖ້ຳພູແຄເມືອງວຽງໄຊ, ມີພະນັກງານກຳມະກອນທັງໝົດ 250 ຄົນ. ສ້າງໃຫ້ບັນດາແຂວງທົ່ວປະເທດ 100 ຄົນ. ເວລານີ້ ມີໂຮງພິມ 16 ແຫ່ງ, ສາມາດພິມປຶ້ມໄດ້ຮອດ 5000-10.000 ເຫຼັ້ມ, ຂະໜາດເປັນໃບ 100.000 ໃບ. ທ່ານ ໄກສອນ ພົມວິຫານ ໄດ້ມອບບົດຂຽນຂອງເພິ່ນໃຫ້ທ່ານ ສີທາ ເພັງແພງເມືອງ ເອົາໄປພິມທີ່ໂຮງພິມມິດຕະພາບລາວ-ຈີນ ໂດຍມີຫົວເລື່ອງວ່າ: “ບາງບົດຮຽນຕົ້ນຕໍ ແລະ ບາງບົດຮຽນກ່ຽວກັບທິດທາງໃໝ່ຂອງການປະຕິວັດ”, ພິມອອກຈຳນວນ 5000 ເຫຼັ້ມ. ໂຮງພິມ

ມິດຕະພາບລາວ-ຈີນນີ້ ເປັນສາຂາຂອງໂຮງພິມລາວຮັກຊາດ ແລະ ຢູ່ພາຍໃຕ້ການຊີ້ນຳຂອງ ຄ.ອ.ວ.

ຮອດ ປີ 1975 ຂະບວນການຕໍ່ສູ້ຂອງປະຊາຊົນໃນເຂດລັດຖະບານຫຸ່ນວຽງຈັນຄຸ້ມຄອງ, ມີຂະບວນລຸກຮື້ຂຶ້ນຍຶດອຳນາດຢ່າງເປັນຂະບວນເຮັດໃຫ້ການປະຕິວັດ ໄດ້ໂອກາດຍຶດອຳນາດໂດຍສັນຕິ ໃນວັນທີ 2/8/1975 ເມື່ອມາເຖິງວັນທີ 2/12/1975 ກໍປະກາດສ້າງຕັ້ງລະບອບ ສ.ປ.ປ ລາວ ຂຶ້ນເປັນທາງການ ແລະ ໄດ້ລົບລ້າງລະບອບການປົກຄອງແບບລາຊາທິປະໄຕ ວຽກງານພິມຈຳໜ່າຍລວມມີທັງໂຮງພິມລາວຮັກຊາດ ແລະ ສຳນັກພິມລາວຮັກຊາດທີ່ຂຶ້ນກັບ ຄ.ອ.ວ ກໍຍົກຍ້າຍເຂົ້າມາວຽງຈັນ.

ປີ 1975 ໂຮງພິມຂອງຝ່າຍລັດຖະບານຫຸ່ນວຽງຈັນມີໂຮງພິມແຫ່ງຊາດ ແລະ ໂຮງພິມແຜນທີ່ (2 ແຫ່ງ) ໃນ 2 ໂຮງພິມນີ້ມີຫົວໜ້າຄວບຄຸມຜູ້ດຽວແຕ່ມີຜູ້ຮອງໄປປະຈຳການແຕ່ລະບ່ອນ. ເມື່ອຍຶດອຳນາດ ແລ້ວໂຮງພິມ 2 ແຫ່ງນີ້ ກໍຍຶດເຂົ້າເປັນຂອງລັດຖະບານລະບອບໃໝ່ ແລະຂຶ້ນກັບການຄຸ້ມຄອງຂອງກະຊວງຄົມມະນາຄົມ, ຂົນສົ່ງ, ໄປສະນີ ແລະກໍ່ສ້າງ, ມີກຳມະກອນ65ຄົນ, ຕໍ່ມາລັດຖະບານສ.ປ.ປລາວກໍໄດ້ມອບໂຮງພິມແຫ່ງຊາດ ໃຫ້ກະຊວງໂຄສະນາ, ຖະແຫຼງຂ່າວ, ວັດທະນະທຳ ແລະທ່ອງທ່ຽວ ເປັນຜູ້ຄຸ້ມຄອງ (15/12/1975).

ທ່ານ ສີທາ ເພັງແພງເມືອງ ຖືກແຕ່ງຕັ້ງໃຫ້ເປັນຫົວໜ້າກົມພິມຈຳໜ່າຍຜູ້ທຳອິດ, ທັງເປັນຫົວໜ້າອຳນວຍການໂຮງພິມແຫ່ງຊາດ, ທ່ານບົວໄລ ຖືກແຕ່ງຕັ້ງໃຫ້ເປັນຫົວໜ້າໂຮງພິມແຜນທີ່. ເວລານີ້ ຈຳນວນພະນັກງານ ໃນໂຮງພິມແຫ່ງຊາດລວມທັງສຳນັກພິມມີ 123 ຄົນ, ຈຳນວນກຳມະກອນໂຮງພິມແຫ່ງຊາດເກົ່າ 65 ຄົນ, ລວມທັງໝົດເປັນ 188 ຄົນ. ມາຮອດປີ1976-1977ທາງກະຊວງໂຄສະນາ,ຖະແຫຼງຂ່າວ,ວັດທະນະ



*ທ່ານ ສີທາ ເພັງແພງເມືອງ ຫົວໜ້າກົມພິມຈຳໜ່າຍ ປີ 1975-1982*



*ທ່ານ ສຸວັນທອນ ບຸບຜານຸວົງ ຮອງຫົວໜ້າກົມພິມຈຳໜ່າຍ*

ທຳ ແລະ ທ່ອງທ່ຽວ ກໍໄດ້ມີການສັບຊ້ອນຫຼືປັບປຸງວຽກງານພິມຈຳໜ່າຍຄືນໃໝ່ໂດຍ ທ່ານ ສີທາ ເພັງແພງເມືອງ ເປັນຫົວໜ້າກົມ, ທ່ານ ສຸວັນທອນ ບຸບຜານຸວົງ ແລະ ທ່ານ ອອນສີ ບຸດສີວົງສັກ ເປັນຮອງ, ບັນດາພະແນກການທີ່ຂຶ້ນກັບກົມພິມຈຳໜ່າຍມີ: ພະແນກຈຳໜ່າຍປຶ້ມ, ພະແນກໂຮງພິມ, ພະແນກບັນນາທິການພາຍໃນປະເທດ ແລະ ພະແນກບັນນາທິການຕ່າງປະເທດ. ຊຶ່ງມີສຳນັກງານຕັ້ງຢູ່ຫໍສະໝຸດແຫ່ງຊາດ ຕັ້ງຢູ່ປະຈຸບັນ.

ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດກ່ອນປີ 1975 ໄດ້ກໍ່ຕັ້ງຂຶ້ນຢູ່ໃນເຂດປົດປ່ອຍເກົ່າໃນເດືອນ 3/1968 ເອີ້ນວ່າສຳນັກພິມຈຳໜ່າຍລາວຮັກຊາດ. ຊຶ່ງມີສະຖານທີ່ຕັ້ງຢູ່ຖ້ຳພູແຄ ແລະ ເປັນສະຖານທີ່ດຽວກັບໂຮງພິມລາວຮັກຊາດ, ທັງໝົດນີ້ຂຶ້ນກັບການຊີ້ນຳຂອງ ຄ.ອ.ວ. ເມື່ອປະເທດຊາດ ໄດ້ຮັບການປົດປ່ອຍ 1975 ສຳນັກພິມລາວຮັກຊາດພ້ອມກັບໂຮງພິມລາວຮັກຊາດທີ່ໄດ້ຍົກ



ທ່ານ ອ່ອນສີ ບຸດສີວົງສັກ
ຮອງຫົວໜ້າກົມພິມຈຳໜ່າຍ



ທ່ານ ຄຳເສັງ ສູນດາລາ
ຫົວໜ້າກົມພິມຈຳໜ່າຍ
ປີ 1983-1999

ຍ້າຍເຂົ້າມາຢູ່ວຽງຈັນໃນປີ1975. ເວລານີ້ ສຳນັກພິມລາວຮັກຊາດ ເປັນພຽງພະແນກການໜຶ່ງຢູ່ໃນກົມພິມຈຳໜ່າຍ, ໂດຍແມ່ນທ່ານ ສຸວັນທອນ ບຸບຜານຸວົງ ເປັນຜູ້ຮັບຜິດຊອບຊີ້ນຳ, ຕໍ່ມາຮອດປີ 1982 ພະແນກພິມຈຳໜ່າຍກໍຖືກແຕ່ງຕັ້ງຂຶ້ນເປັນສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດໂດຍແມ່ນທ່ານ ສີທາ ເພັງແພງເມືອງ ເປັນຫົວໜ້າອຳນວຍການ, ສ່ວນກົມພິມຈຳໜ່າຍແມ່ນຍັງຄືເດີມ ແຕ່ຜູ້ເປັນຫົວໜ້າກົມແມ່ນທ່ານ ຄຳເສັງ ສູນດາລາ, ມີທ່ານ ຄຳຜຸຍ ໄຊສົມບັດ ແລະ ທ່ານ ສົມສະໜຸກ ບຸດສະດີ ເປັນຮອງ, ຕໍ່ມາຮອດປີ 1992 ທ່ານ ປະທວນ ໃສສຸວັນ ແລະ ທ່ານ ຄຳພາ ພັນສະໄໝ ມາເປັນຮອງ. ເວລານີ້ເອີ້ນວ່າກົມພິມຈຳໜ່າຍ ແລະ ປ້າຍ ຊຶ່ງມີ 5 ພະແນກການຂຶ້ນກັບຄື: ພະແນກຫ້ອງການ, ພະແນກຄຸ້ມຄອງພິມຈຳໜ່າຍ, ພະແນກຄຸ້ມຄອງສິ່ງພິມ, ພະແນກຄຸ້ມຄອງການພິມ ແລະ ພະແນກຄຸ້ມຄອງປ້າຍ. ມາຮອດປີ1999ທ່ານ ຈັນທະພິລິດ ຈຽມສີສຸລາດ ຂຶ້ນເປັນຫົວ



***ທ່ານ ຈັນທະພິລິດ ຈຽມສີສຸລາດ***
***ຫົວໜ້າກົມພິມຈຳໜ່າຍ***
***ປີ 1999-2003***

ໜ້າກົມພິມຈຳໜ່າຍ ແລະ ຫໍສະໝຸດ ແລະ ມີທ່ານ ກະວິນ ກຽງຄຳຊົນນີ ແລະ ທ່ານ ເນັ່ງ ໄຊຫວ່າງ ເປັນຮອງ, ບັນດາພະແນກການຂຶ້ນກັບມີ: ພະແນກພິມຈຳໜ່າຍ, ພະແນກພັດທະນາການພິມ, ພະແນກຫໍສະໝຸດ ແລະ ສິ່ງເສີມການອ່ານ ແລະ ພະແນກວາລະສານໜັງສືພິມ ວັດທະນະທຳ ທ່ອງທ່ຽວ ແລະ ໂຄສະນາຜ່ານສິ່ງພິມ, ຍັງມີບັນດາກອງວິຊາການທີ່ຂຶ້ນກັບຄື: ຫໍສະໝຸດແຫ່ງຊາດ, ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ ແລະ ວາລະສານ ວັນນະສິນ, ສ່ວນປ້າຍແມ່ນຄະນະສັບຊ້ອນຂອງກະຊວງຖະແຫຼງຂ່າວແລະວັດທະນະທຳປີ1999 ເອົາຍ້າຍໄປໄວ້ນຳກົມວັດທະນະທຳມະຫາຊົນຈົນເຖິງປະຈຸບັນ.

ການຄຸ້ມຄອງວຽກງານພິມຈຳໜ່າຍໃນເວລາຜ່ານມາຄື: ເລີ່ມແຕ່ປີ 1987 ໄດ້ອີງໃສ່ຂໍ້ກຳນົດຊົ່ວຄາວຂອງສະພາລັດຖະມົນຕີ ສະບັບເລກທີ 45/ປສລ, ລົງວັນທີ 20-10-1987 ວ່າດ້ວຍຫຼັກການໃນການດຳເນີນວຽກງານພິມຈຳໜ່າຍ, ການພິມ ແລະ ການຈຳໜ່າຍສິ່ງພິມໃນ ສ.ປ.ປ ລາວ ແລະ ໄດ້ອີງໃສ່ຂໍ້ກຳນົດຂອງລັດຖະມົນຕີວ່າການກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ສະບັບເລກທີ 466/ຖວ, ລົງວັນທີ 21/7/2008 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພິມຈຳໜ່າຍ.

ເມື່ອວຽກງານພິມຈຳໜ່າຍໄດ້ດຳເນີນມາຮອດປີ 2003, ທ່ານ



*ທ່ານ ສີວຽງແຂກ ກອນນີວົງ*
*ຫົວໜ້າກົມພິມຈຳໜ່າຍ*
*ປີ 2003 ເຖິງ ປະຈຸບັນ*

ສີວຽງແຂກ ກອນນີວົງ ກໍມາເປັນຫົວໜ້າກົມພິມຈຳໜ່າຍ ມີທ່ານ ກະວິນ ກຽງຄຳຊິນນີແລະທ່ານເນັ່ງໄຊຫວ່າງ ເປັນຮອງ ແລະ ຕໍ່ມາກໍມີທ່ານ ອາລຸນ ບຸນມີໄຊ ແລະ ທ່ານ ຈັນທອນ ໄຊຍະສອນ ມາເປັນຮອງກົມ. ມາໃນປີ 2010 ຄະນະກົມຍັງເຫຼືອພຽງ 2 ທ່ານ, ເພາະ 2 ທ່ານ ເຂົ້າກິນເບ້ຍບຳນານ ແລະ ອີກ 1 ທ່ານ ໄປຮຽນຍາວນານ. ບັນດາພະແນກການທີ່ຂຶ້ນກັບກົມພິມຈຳໜ່າຍ. ເວລານີ້ມີ: ພະແນກຄຸ້ມຄອງການຈັດພິມ ແລະ ວັນນະຄະດີ, ພະແນກຄຸ້ມຄອງການພິມ, ພະແນກຄຸ້ມຄອງການຈຳໜ່າຍ ແລະ ໂຄສະນາຜ່ານສິ່ງພິມ ແລະ ພະແນກຫ້ອງການ. ວຽກງານພິມຈຳໜ່າຍເວລານີ້ ໄດ້ຮັບຜົນສຳເລັດໃນການຮ່າງກົດໝາຍຄຸ້ມຄອງພິມຈຳໜ່າຍ, ເຊິ່ງໄດ້ປະກາດໃຊ້ເປັນທາງການໃນປີ 2009, ປະຈຸບັນ ກຳລັງຮ່າງກົດໝາຍຄຸ້ມຄອງວຽກງານຫໍສະໝຸດ ຊຶ່ງສາມາດສຳເລັດໄປໂດຍພື້ນຖານ ແລະ ກະກຽມເພື່ອນຳຜ່ານລັດຖະບານ.

ການພິມຈຳໜ່າຍແຕ່ປີ 1975-1980 ນັ້ນ, ແມ່ນພິມຮັບໃຊ້ໜ້າທີ່ການເມືອງຂອງພັກ ແລະ ລັດຖະບານ, ງົບປະມານລາຍຈ່າຍໃນການພິມແມ່ນລັດເປັນຜູ້ຕອບສະໜອງ, ຈຳນວນພິມກໍແມ່ນລັດຖະມົນຕີວ່າການກະຊວງເປັນຜູ້ກຳນົດໃຫ້ ແລະ ເອີ້ນວ່າ: "ເກື້ອກຸນ" ຊີວິດການເປັນຢູ່

ຂອງພະນັກງານລັດຖະກອນ ກໍແມ່ນລັດເປັນຜູ້ໃຫ້ອັດຕາກິນບັບທັງທີ່ຢູ່ ອາໄສ. ໃນຊຸມປີ 1980 ນີ້ ວຽກການພິມ ແລະ ການຈຳໜ່າຍ ກໍຂະຫຍາຍ ຕົວຂຶ້ນກວ່າເກົ່າ, ນັບແຕ່ເຄີຍໃຊ້ຫີນລີໂຕ 3 ແຜ່ນ ແບບປະຖົມປະຖານ ແລະ ຫຼ້າສະໄໝ ກໍໄດ້ຫັນມາໃຊ້ເຄື່ອງພິມທີ່ນັບມື້ທັນສະໄໝຂຶ້ນ.



*ເຄື່ອງຈັກ offset ທີ່ນຳໃຊ້ໃນໂຮງພິມແຫ່ງລັດ*

ວຽກງານພິມຈຳໜ່າຍຕົກມາຮອດປີ 1986 ພັກ ແລະ ລັດຖະບານ ກໍໄດ້ເປີດກວ້າງເສດຖະກິດອອກສູ່ໂລກພາຍນອກ, ມີການປ່ຽນແປງກົນ ໄກຄຸ້ມຄອງແບບບໍລິຫານເກື້ອກຸນໄປສູ່ການໄລ່ລຽງທຸລະກິດ, ນຳໃຊ້ກົນ ໄກຄຸ້ມຄອງເສດຖະກິດຕະຫຼາດ ແລະ ກໍເປັນໄລຍະແຫ່ງການດັດສ້າງ ແລະ ກໍ່ສ້າງພື້ນຖານວັດຖຸເຕັກນິກໃຫ້ແກ່ສັງຄົມນິຍົມ. ໂດຍເລີ່ມຈາກລະ ບອບປະຊາທິປະໄຕ ປະຊາຊົນກ້າວຂຶ້ນ. ເວລານີ້ ຄວາມຮຽກຮ້ອງຕ້ອງ ການດ້ານປຶ້ມ ແລະ ສິ່ງພິມອື່ນແມ່ນມີຄວາມຈຳເປັນ ແລະ ຮີບດ່ວນ.

ສະນັ້ນ ການກະກຽມໃຫ້ແກ່ການເປີດກວ້າງນັ້ນການຈັດຕັ້ງສຳນັກພິມຈຳໜ່າຍປຶ້ມແບບວິຊາຊີບ ຈຶ່ງໄດ້ຮັບການສ້າງຕັ້ງຂຶ້ນ ໃນປີ1977 ພ້ອມນີ້ບັນດາຂະແໜງການອື່ນໆກໍເກີດຂຶ້ນເຊັ່ນ: ສະຖາບັນຄົ້ນຄວ້າຕ່າງໆ, ອົງການຈັດຕັ້ງ, ໂຄງການສາສະໜາ, ວັດທະນະທຳ ແລະ ເຜີຍແຜ່ວິທະຍາສາດ, ວິທະຍາການຂອງບັນດາກະຊວງ, ອົງການຫຼຽບເທົ່າ ແລະ ອື່ນ. ທັງໝົດນັ້ນ ມັນດຶງດູດເອົາບັນດາປັນຍາຊົນ, ນັກຄົ້ນຄວ້າ, ນັກປະດິດແຕ່ງມາຢູ່ອ້ອມຂ້າງພິມຈຳໜ່າຍ ແລະ ກໍໄດ້ປະກອບສ່ວນຮ່ວມແຮງຮ່ວມໃຈເຂົ້າສູ່ການພິມຈຳໜ່າຍປຶ້ມ ແລະ ສິ່ງພິມອື່ນໆ ອອກຮັບໃຊ້ຕາມເງື່ອນໄຂ ແລະ ຄວາມສາມາດຂອງໃຜລາວ.



*ເຄື່ອງຈັກພິມ Heidelberg ທີ່ນຳໃຊ້ໃນໂຮງພິມສີສະຫວາດ*

ການພິມຈຳໜ່າຍໄດ້ຟື້ນຟູ ແລະ ນຳໃຊ້ບັນດາໂຮງພິມລັດທີ່ມີຢ່າງທັນການ, ຂະຫຍາຍເຕັກນິກວິຊາການໂຮງພິມທີ່ເປັນຫຼັກແຫຼ່ງ, ໄດ້

ສ້າງຕັ້ງໂຮງພິມໃໝ່ຂຶ້ນຫຼາຍຂະແໜງການ. ອະນຸຍາດໃຫ້ສ້າງຕັ້ງໂຮງງານປຶ້ມຊຽນຂອງເອກະຊົນຂຶ້ນ, ອະນຸຍາດໃຫ້ສືບຕໍ່ໂຮງພິມປະຊາບໍລິການ, ປາກປ່າສັກການພິມ, ໂຮງພິມສັນຕິພາບ. ລວມທັງໝົດ 20 ກວ່າແຫ່ງ. ຈາກນັ້ນ, ຈຶ່ງສາມາດຕອບສະໜອງສິ່ງພິມໃຫ້ສັງຄົມໄດ້ພຽງພໍ. ເວລານີ້ ເຖິງວ່າ ໂຮງພິມຈະຂະຫຍາຍຕົວຂຶ້ນດ້ວຍການໃຊ້ລະບົບອົບແຊດ ແຕ່ກໍຍັງໄດ້ໃຊ້ການເກັບລຽງໂຕໜັງສື ດ້ວຍແທ່ງຂີ້ກົ່ວ ແລະ ແບບພິມຕີໂປ ຊຶ່ງມີພິມຮາບ ແລະ ພິມນູນ, ເວລານັ້ນ ຍັງພິມໄດ້ແຕ່ສີດຽວ.

ດ້ານການຈຳໜ່າຍ ກໍໄດ້ຈັດຕັ້ງ ແລະ ຂະຫຍາຍຕາໜ່າງຮ້ານຈຳໜ່າຍສິ່ງພິມຂຶ້ນແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນໂດຍມີຢູ່ເກືອບທຸກໆແຂວງ; ແລ້ວກໍ ຂະຫຍາຍລົງຮອດເມືອງແລະບາງບ້ານ ຫຼືຫົວໜ່ວຍການຜະລິດ, ສາມາດນຳເອົາສິ່ງພິມຕ່າງໆທັງພາຍໃນ ແລະ ຕ່າງປະເທດໃຫ້ໄປເຖິງໄດ້ ໃນເງື່ອນໄຂທີ່ຄົມມະນາຄົມບໍ່ສະດວກ, ການຈຳໜ່າຍນີ້ແມ່ນຈຳໜ່າຍດ້ວຍສຳນັກພິມຂອງລັດເປັນຜູ້ດຳເນີນ, ສ່ວນເອກະຊົນຍັງບໍ່ມີ.

ຈຸດເດັ່ນໄລຍະນີ້ ແມ່ນໄດ້ກໍ່ສ້າງໂຄງສ້າງພື້ນຖານດ້ານເຕັກນິກວິຊາການ ແລະ ກຳມະກອນໄດ້ຄົບຊຸດພໍສົມຄວນໃຫ້ແກ່ຂົງເຂດພິມຈຳໜ່າຍ, ອຸດສາຫະກຳການພິມຈຳໜ່າຍເວລານີ້ ອາດເວົ້າໄດ້ວ່າ ໜຸ່ມນ້ອຍແຕ່ມີລັກສະນະຄົບວົງຈອນ. ພ້ອມນີ້ ພິມຈຳໜ່າຍຍັງໄດ້ອົບຮົມບົ່ມເພາະທັດສະນະຄະຕິ ຫຼື ຊຸບຫູ່ທັດສະນະກຽວກັບການພິມຈຳໜ່າຍໃຫ້ໝັ້ນໝຽວດ້ານແນວຄິດຈິດໃຈໄວ້ກັບຊາດ, ວິທະຍາສາດ ແລະ ກ້າວໜ້າ. ໄດ້ຂະຫຍາຍຖັນແຖວປັນຍາຊົນ, ນັກຄົ້ນຄວ້າທີ່ໜຸ່ມນ້ອຍ, ຖັນແຖວນັກຂ່າວໃໝ່ທີ່ເອກອ້າງທະນົງໃຈ, ໄດ້ກຳເນີດປຶ້ມ 100 ກວ່າຫົວເລື່ອງທີ່ເປັນພາສາລາວ, ຍອດພິມມີເຖິງ 10 ກວ່າລ້ານເຫຼັ້ມ.

ໃນເວລານີ້ ຄວາມສຳນຶກຂອງຄົນໃນສັງຄົມລາວໃໝ່ເຂົ້າໃຈ



ວ່າການຜະລິດສິ່ງພິມແມ່ນໜ້າທີ່ຂອງກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ຫຼື ບາງຂະແໜງການເທົ່ານັ້ນ. ຈາກນັ້ນ ຈຶ່ງບໍ່ມີໃຜເອົາໃຈໃສ່ຂີດຂຽນ ແລະ ພິມປຶ້ມເພື່ອໜ້າທີ່ການເມືອງຂອງຕົນ. ໃນເວລານີ້ ລະບອບຄ່າປາກກາສຳລັບຜູ້ປະດິດແຕ່ງກໍບໍ່ສົມປະກອບ, ຈຶ່ງອາໄສການປຸກລະດົມແນວຄິດ, ອີກປະການໜຶ່ງ ເງິນເດືອນກໍຕໍ່າ, ຊີວິດການເປັນຢູ່ຝືດເຄືອງທີ່ສຸດ.ຈາກບັນຫາດັ່ງກ່າວຈຶ່ງພາໄປສູ່ການຄ່ອຍໆຫຼຸດໜ້ອຍຖອຍລົງດ້ານປະລິມານ ແລະ ຄຸນນະພາບກ່ຽວກັບຜະລິດຕະພັນດ້ານມັນສະໝອງ ກໍຄືຜູ້ຄົ້ນຄວ້າປະດິດແຕ່ງນັ້ນເອງ. ຈາກບັນຫາການເກື້ອກູນຈຶ່ງເກີດມີລະບົບຂໍ້ຂັດແຍ້ງຄື: ຜະລິດໄປຕາມແຜນການ ແລະ ຄວາມສາມາດຕອບສະໜອງງົບປະມານຂອງລັດ, ສິ່ງຕາມມາແມ່ນຟຸມເຟືອຍ, ຂາດຄວາມຮັບຜິດຊອບ, ຂາດປະສິດທິຜົນ, ແຕ່ກົນໄກນີ້ຖືກຍົກເລີກໃນປີ 1986 ເພາະ



ກອງປະຊຸມໃຫຍ່ສະໄໝທີ IV ຂອງສູນກາງພັກໄດ້ກຳນົດຫຼັກການປ່ຽນແປງໃໝ່. ສະເພາະວຽກງານພິມຈຳໜ່າຍກໍໄດ້ຫັນໄປສູ່ລະບອບໄລ່ລຽງທຸລະກິດ, ແຕ່ຢ່າງໃດກໍດີ, ປະເທດຊາດຫຼັງປົດປ່ອຍໃໝ່ມັນກໍໄດ້ສ້າງພື້ນຖານດ້ານການຈັດຕັ້ງດ້ານວິຊາການ ແລະ ເຕັກນິກທີ່ສຳຄັນຂອງອຸດສາຫະກຳການພິມຈຳໜ່າຍໄວ້ໃຫ້ເປັນມໍລະດົກ ແລະ ເປັນທຶນຮອນໃຫ້ແກ່ພັກ-ລັດບໍ່ໜ້ອຍ. ເພື່ອເປັນການຖະນຸຖະໜອມ ແລະ ນຳໃຊ້ໃຫ້ເກີດຜົນໃນໄລຍະປ່ຽນແປງໃໝ່ເພື່ອໃຫ້ເຕີບໃຫຍ່ຂະຫຍາຍໂຕຕໍ່ໄປ.

ວົງການພິມຈຳໜ່າຍຄື ການພິມເລີ່ມແຕ່ປີ 1986 ໄປ ກໍໄດ້ສູ້ຊົນດັດປັບຕົນເອງກ້າວຂຶ້ນໃນບາດກ້າວເລີ່ມຕົ້ນໃຫ້ໄປສູ່ຮູບແບບໃໝ່ໃນວິທີສຳນຶກແຫ່ງຈິນຕະນາການໃໝ່.

ໃນເວລານີ້ ຂົງເຂດການພິມຈຳໜ່າຍມີ 2 ຫົວໜ່ວຍຄື: ມີສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ ທີ່ສັງກັດກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ແລະ ສຳນັກພິມຂອງສະຖາບັນຄົ້ນຄວ້າວິທະຍາສາດການ

ສຶກສາ ຊຶ່ງເປັນຜູ້ຮຽບຮຽງປຶ້ມຫຼັກສູດແບບຮຽນຂອງກະຊວງສຶກສາ.

ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດຂອງກະຊວງຖະແຫຼງ ແລະ ວັດທະນະທຳ ມີໜ້າທີ່ພິມປຶ້ມສັງຄົມ, ການເມືອງ, ແລະ ສິລະປະ-ວັນນະຄະດີ, ສິລະປະ-ວັດທະນະທຳເປັນຫຼັກ. ໃນປີ 1986-1990 ນີ້ພັດຂາດງົບປະມານໃນການພິມ ແຕ່ພັດກຳລັງຢູ່ໃນໄລຍະແຫ່ງການຄົ້ນຄວ້າ ເພື່ອຈະກ້າວໄປສູ່ອັນທີ່ເອີ້ນວ່າ: ວິສາຫະກິດຂອງລັດ ໂດຍຮ່ວມກັນກັບພາກສ່ວນໂຮງພິມແຫ່ງລັດ. ແຕ່ເວລານີ້ ມີຈຸດເດັ່ນເພາະໄດ້ຮ່ວມມືພິມປຶ້ມກັບໄຊຫວຽດ, ຫວຽດນາມ, ກຳປູເຈຍ ຈຳນວນພິມສ່ວນຫຼາຍແມ່ນຫົວເລື່ອງໜຶ່ງພິມຮອດ 10.000 ເຫຼັ້ມ, ຫວຽດນາມຊ່ວຍພິມປຶ້ມ 53 ຫົວເລື່ອງ ມີຈຳນວນພິມ 106.000 ເຫຼັ້ມ.

## ວຽກງານພິມຈຳໜ່າຍໃນເວລານັ້ນໄດ້ແບ່ງເຂດຄຸ້ມຄອງອອກເປັນ 3 ປະເພດຄື:

**ປະເພດວິຊາຊີບ:**

- ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ.
- ສະຖາບັນຄົ້ນຄວ້າຮຽບຮຽງປຶ້ມແບບຮຽນຂອງກະຊວງສຶກສາ.
-
- **ປະເພດບໍ່ເປັນວິຊາຊີບ:**

ປະເພດນີ້ມີຫຼາຍຄື: ສະຖາບັນຄົ້ນຄວ້າຕ່າງໆ, ສຳນັກພິມ, ໜັງສືພິມ ແລະ ວາລະສານຕ່າງໆ. ກົມກອງທີ່ພິມເຜີຍແຜ່ວິທະຍາສາດ, ວິທະຍາການ ແລະ ໂຄສະນາວັດທະນະທຳຕ່າງໆ, ຍັງມີສະຖາບັນສົງ ແລະ

ອື່ນໆ. ບັນດາສະຖາບັນເຫຼົ່ານີ້ ມີທ່າອ່ຽງໄປສູ່ການຈັດຕັ້ງເປັນສຳນັກພິມ ເພາະເຂົາເຈົ້າໄດ້ທຶນຂອງລັດເປັນຕົ້ນຕໍ ແລະ ພາກສ່ວນດັ່ງກ່າວນີ້ ຍັງໄດ້ທຶນທາງນອກສະໜັບສະໜູນ, ປະເພດບໍ່ແມ່ນວິຊາຊີບນີ້ພິມປື້ມຮອດ 59 ຫົວເລື່ອງ, ມີຈຳນວນພິມເຖິງ 224.500 ເຫຼັ້ມ.

## ປະເພດເອກະຊົນ, ບຸກຄົນ:

ປະເພດນີ້ ມີຫຼາຍຂຶ້ນເປັນລຳດັບໃນໄລຍະປ່ຽນແປງໃໝ່, ເຂົາເຈົ້າພິມຈຳໜ່າຍໄປສະນີບັດ, ບັດອວຍພອນ, ປະຕິທິນ ແລະ ຮູບພາບພິມ, ຜູ້ທີ່ເຮັດການພິມຈຳໜ່າຍດ້ວຍຕົນເອງກໍເກີດຂຶ້ນຫຼາຍ. ເລີ່ມແຕ່ປີ 1988 ເປັນຕົ້ນມາ, ສ່ວນຫຼາຍແມ່ນພວກຄົ້ນຄວ້າປະດິດແຕ່ງ. ແຕ່ພວກນີ້ປົກກະຕິແລ້ວບໍ່ມີທຶນພິມເປັນຂອງຕົນ, ແຕ່ມີມະນຸດສຳພັນດີ ຈຶ່ງໄດ້ທຶນອຸປະຖຳຈາກວິສາຫະກິດຕ່າງໆມາພິມ, ພິມແລ້ວຈຳໜ່າຍເອງ; ແຕ່ມີບັນຫາເລື່ອງການຕະຫຼາດ. ປື້ມຈຳນວນທີ່ພິມອອກມາໃນຮູບນີ້ ແມ່ນຢືມຊື່ການຈັດຕັ້ງບ່ອນຕົນຂຶ້ນກັບແບບທາງການໂດຍຜູກພັນຜົນປະໂຫຍດນຳກັນ. ຮອດປີ 1990 ພາກສ່ວນນີ້ພິມປື້ມໄດ້ທັງໝົດ 35 ຫົວເລື່ອງ, ຈຳນວນພິມ 212.250 ເຫຼັ້ມ. ພາກເອກະຊົນມີບົດບາດສຳຄັນໃນການຈັດພິມເຂົາເຈົ້າພິມໄດ້ຮອດ 182 ຫົວເລື່ອງ, ຍອດພິມຮອດ 566.000 ເຫຼັ້ມໃນປີ 1990-1991 ກໍເພີ່ມຂຶ້ນເປັນລຳດັບ.

ໃນໄລຍະນີ້ຍັງມີຫຼາຍຂະແໜງການ ທີ່ຍັງບໍ່ໄດ້ພິມປື້ມວິຊາການທີ່ກ່ຽວຂ້ອງກັບວຽກງານຂອງຕົນ ແລະ ກໍຍັງຄິດວ່າ ເປັນໜ້າທີ່ຂອງກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ.

ຂົງເຂດການພິມໄລຍະນີ້ ທົ່ວປະເທດມີໂຮງພິມທັງໝົດ 27 ແຫ່ງ (ໂຮງພິມ ແລະ ໂຮງງານເຈ້ຍມີຂະໜາດນ້ອຍເຖິງກາງ, ໃນນີ້ມີຂອງ

ລັດ 18 ແຫ່ງ, ຂອງສູນກາງ 9 ແຫ່ງ, ອີກ 4 ແຫ່ງເປັນຂອງລັດວິສາຫະກິດ, ໃນຈຳນວນ 18 ແຫ່ງນີ້ ເປັນຂອງລັດ ແລະ ຂຶ້ນກັບທ້ອງຖິ່ນ 9 ແຫ່ງ. ນອກນັ້ນ ເປັນຂອງເອກະຊົນ ມີຫຼາຍຮ້ານອັດສຳເນົາເອກະສານທີ່ສາມາດພິມສິ່ງພິມໄດ້ແບບເປັນໃບ ເປັນເຫຼັ້ມ ແລະ ຍັງມີຈຳພວກພິມດ້ວຍຜ້າກັ້ງໄໝ, ການພິມເວລານີ້ຄືງໂຕຢູ່ກັບການເກັບລຽງ ແລະ ແບບອັບແຊັດ, ແຕ່ເປັນຈັກລຸ້ນເກົ່າແກ່. ເວລານີ້ ການຊ່ວງເສັງແກ້ງແຍ້ງເສດຖະກິດ ສະເພາະການພິມແມ່ນແກ້ງແຍ້ງດ້ານລູກຄ້າ. ພວກເອກະຊົນມີກຳລັງແຮງ ໃນການແກ້ງແຍ້ງຊ່ວງຊີງ ແລະ ເດີນດີກວ່າ ເພາະກົນໄກການຈັດຕັ້ງກະທັດຮັດ ພ້ອມທັງເກັ່ງທາງດ້ານການຕະຫຼາດ. ພວກເຂົາເລີຍເຮັດ 3 ດ້ານພ້ອມກັນຄື: ບໍລິການ, ຜະລິດເປັນສິນຄ້າ ແລະ ເຮັດການຈຳໜ່າຍສິ່ງພິມແບບຂາຍເຄື່ອງຊັບພະສິນຄ້າໄປພ້ອມ.

ສຳລັບວຽກງານຫໍສະໝຸດ ແລະ ສົ່ງເສີມການອ່ານໃນຊຸມປີ 1990 ນັ້ນ ເບື້ອງຕົ້ນໂຕເລກບໍ່ຄ່ອຍຊັດເຈນດີ; ແຕ່ເວົ້າສະເພາະຫ້ອງອ່ານ ຫຼື ຫ້ອງສະໝຸດແລ້ວ ທົ່ວປະເທດມີ 68 ແຫ່ງ. ການເຄື່ອນໄຫວສົ່ງເສີມການອ່ານແມ່ນໃຊ້ຕູ້ປຶ້ມລົງໄວ້ແຕ່ລະໂຮງຮຽນ, ໃຊ້ລົດເຄື່ອນທີ່ ແລະ ການອ່ານປະຈຳວັນຢູ່ກັບຫໍສະໝຸດແຫ່ງຊາດ, ແຕ່ມີທຶນຈາກຕ່າງປະເທດຊ່ວຍເຫຼືອໃນດ້ານສົ່ງເສີມການອ່ານ. ວຽກງານສົ່ງເສີມການອ່ານໃນເວລານີ້ ເກີດຂຶ້ນມາຫຼາຍ ເພາະມີອົງການຊ່ວຍເຫຼືອ ຄືອົງການຈັດຕັ້ງທີ່ບໍ່ແມ່ນລັດຖະບານ ໂດຍມີຍີ່ປຸ່ນເຂົ້າມາເປັນຕົວແທນເຮັດໂຄງການສົ່ງເສີມການອ່ານຢູ່ວຽງຈັນເຊັ່ນ: ໂຄງການອົງການພັດທະນາເດັກນ້ອຍລາວ-ຍີ່ປຸ່ນ (SVA) ໂຄງການ ASPB= ອົງການຮ່ວມນ້ຳໃຈກັບເດັກນ້ອຍລາວ-ຍີ່ປຸ່ນ (ALC) ໃນປະຈຸບັນນອກນີ້ກໍ່ຍັງມີໂຄງການພາເດັດ, ຈີຊີໂຣ ແລະ ອື່ນໆ. ນອກນີ້ ກໍຍັງມີສູນພາສາ ຝຣັ່ງ ແລະ ອົງການຣູມທູຣີດລາວ (ROOM TO READ) ກໍມີບົດບາດທີ່ສຳຄັນຫຼາຍໃນການສົ່ງເສີມການ

ອ່ານຢູ່ລາວໂດຍສະເພາະແມ່ນເຂົາເຈົ້າພິມປື້ມສຳລັບອະນຸບານ, ປະຖົມ ແລະ ອື່ນໆ. ນອກນີ້ ອົງການຣູມທູຣີດ ຍັງໄດ້ສ້າງຫ້ອງສະໝຸດຂຶ້ນພ້ອມທັງສ້າງໂຮງຮຽນສາມັນສຶກສາຢູ່ຫຼາຍແຫ່ງ.




ວາລະສານ-ໜັງສືພິມວັດທະນະທຳທ່ອງທ່ຽວ ແລະ ສົ່ງເສີມການອ່ານເປັນວຽກທີ່ກຳນົດຂຶ້ນມາໃໝ່ ຕາມຄວາມຮຽກຮ້ອງຕ້ອງການຂອງສັງຄົມ. ວຽກນີ້ ສ້າງຂຶ້ນໃນປີ 1999 ຊຶ່ງເອີ້ນວ່າໃນທ້າຍໄລຍະ 3 ຂອງການດຳເນີນວຽກງານພິມຈຳໜ່າຍ. ແຕ່ກໍໄດ້ອະນຸຍາດໃຫ້ນຳເຂົ້າວາລະສານທ່ອງທ່ຽວເປັນພາສາຝຣັ່ງ 2.700 ສະບັບ, ອະນຸຍາດໃຫ້ເຮັດກາໝາຍ, ສະຕິກເກີ້ ແລະ ອະນຸຍາດໂຄສະນາຜ່ານສິ່ງພິມຫຼາຍຄັ້ງ.

ໃນປີ 1990 ມີຫ້ອງສະໝຸດທັງໝົດ 76 ແຫ່ງຂຶ້ນກັບສູນກາງ 16 ແຫ່ງ ໃນນີ້ ມີຫໍສະໝຸດແຫ່ງຊາດ 1 ແຫ່ງ, ຢູ່ທ້ອງຖິ່ນ 60 ແຫ່ງ, ຕູ້ສະໝຸດເຄື່ອນທີ່ມີ 3.000 ກວ່າແຫ່ງ, ສຳລັບວຽກງານການພິມທົ່ວປະເທດມີໂຮງພິມ 34 ແຫ່ງ, ໃນນັ້ນຂອງສູນກາງມີ 8 ແຫ່ງ, ຂອງທ້ອງຖິ່ນ

9 ແຫ່ງ, ສຳລັບໂຮງພິມເອກະຊົນ ແລະ ຮ້ານພິມຢູ່ນະຄອນຫຼວງວຽງຈັນ ມີ 16 ແຫ່ງ.




ຢູ່ໃນໄລຍະແຕ່ ປີ 2000-2010 ນີ້ ບັນດາຂໍ້ກຳນົດທີ່ໃຊ້ຜ່ານມາບໍ່ສອດຄ່ອງກັບສະພາບຕົວຈິງ ເພາະວຽກງານພິມຈຳໜ່າຍໄດ້ຂະຫຍາຍໂຕຂຶ້ນນັບມື້ຕາມເງື່ອນໄຂ ແລະ ກົນໄກເສດຖະກິດຕະຫຼາດ. ບັນດາສິ່ງພິມຕ່າງໆກາຍເປັນຜະລິດຕະພັນການຄ້າ, ມັນມີການແກ່ງແຍ້ງກັນຕາມບັນດາດ້ານຂອງມັນແລ້ວກໍຊຸກດັນກັນ, ຊ່ວງເສັງກັນເພື່ອກ້າວໄປສູ່ອຸດສາຫະກຳການພິມຈຳໜ່າຍ, ໂດຍສະເພາະພາຍຫຼັງທີ່ມີມະຕິຂອງສູນກາງພັກປະຊາຊົນປະຕິວັດລາວຄື: ແນວທາງຫັນເປັນອຸດສາຫະກຳທັນສະໄໝເທື່ອລະກ້າວ. ຈາກນັ້ນ ມັນກໍຮຽກຮ້ອງໃຫ້ກົມພິມຈຳໜ່າຍ ແລະ ຫໍສະໝຸດຕ້ອງໄດ້ຮ່າງກົດໝາຍພິມຈຳໜ່າຍ ເພື່ອຄຸ້ມຄອງສິ່ງພິມທັງຫຼາຍໃຫ້ຢູ່ໃນລະບຽບການ ຫຼືເພື່ອປົກປ້ອງສິດຜົນປະໂຫຍດຂອງຜູ້ດຳເນີນການດ້ານສິ່ງພິມ.

ໃນໄລຍະນີ້ ວຽກງານຄຸ້ມຄອງການພິມຈຳໜ່າຍກໍຄືໂຕຢູ່ກັບ 3

ພາກສ່ວນທີ່ເປັນເປົ້າໝາຍຄຸ້ມຄອງ ແລະ ກວດການເຊັ່ນ: ພາກລັດ (ພາກວິຊາຊີບ), ພາກທີ່ບໍ່ແມ່ນວິຊາຊີບ (ນອກສຳນັກພິມ), ພາກເອກະຊົນ. ແຕ່ 3 ພາກນີ້ບໍ່ຄືງໂຕ ເພາະມັນຂະຫຍາຍໂຕອອກໄດ້ຫຼາຍຮູບຊົງຂອງມັນ. ສ່ວນພາກວິຊາຊີບພາກລັດແມ່ນຍັງຈຳກັດຈຳນວນ ແຕ່ມີຄຸນນະພາບສູງຂຶ້ນ. ພາກທີ່ບໍ່ແມ່ນວິຊາຊີບ ແລະ ເອກະຊົນຂະຫຍາຍຕົວ



ໄປໄກ ເນື່ອງຈາກມີທຶນຮອນໃນດ້ານທຸລະກິດເຊັ່ນ: ບໍລິສັດ, ຮ້ານຂາຍປຶ້ມ. ເວລານີ້ມີບໍລິສັດແປພາສາກຳເນີດຂຶ້ນ 6 ແຫ່ງ ແລະ ບໍລິສັດໂຄສະນາຜ່ານສິ່ງພິມ. ວຽກງານຫໍສະໝຸດເວລານີ້ ມີຫ້ອງອ່ານທີ່ໃຊ້ຕູ້ປຶ້ມ, ມີລົດສະໝຸດເຄື່ອນທີ່ ( Mobile Library ), ມີເຮືອສະໝຸດເຄື່ອນທີ່ ແລະ ມີເລກໝາຍປຶ້ມມາດຕະຖານສາກົນ ISBN. ໃນເວລານີ້ ມີສະມາຄົມການພິມ ແລະ ສະມາຄົມຫ້ອງສະໝຸດເກີດຂຶ້ນມາເພື່ອປົກປ້ອງສິດຜົນປະໂຫຍດຂອງຜູ້ຈັດພິມ ແລະ ຜູ້ເຄື່ອນໄຫວສົ່ງເສີມການອ່ານ.

ກົມພິມຈຳໜ່າຍຍັງໄດ້ຄຸ້ມຄອງສົ່ງເສີມນັກຂຽນ, ນັກວັນນະ

ຄະດີ ແລະ ວັນນະກຳ, ໂດຍຈັດໃຫ້ມີການແຂ່ງຂັນບົດຂຽນປະເພດເລື່ອງສັ້ນ ແລະ ຍາວ, ກະວີກາບກອນ ແລະ ນິທານພື້ນເມືອງຫຼາຍຄັ້ງໃສ່ວັນປະຫວັດສາດທີ່ສຳຄັນຂອງຊາດ ໂດຍມີການມອບລາງວັນຕາມລຳດັບຢ່າງສົມກຽດ. ນອກນີ້ ກໍໄດ້ແຂ່ງຂັນເລືອກປຶ້ມດີເດັ່ນປະຈຳທຸກປີໂດຍເລີ່ມມາແຕ່ປີ 2007 ຈົນເຖິງປະຈຸບັນ. ນອກຈາກນີ້ ກໍໄດ້ຄັດເລືອກ ຫຼື ກວດສອບບົດຂຽນເພື່ອຊີງລາງວັນຊີໄຣ, ລາງວັນຍອດຍ້ຽມຂອງອາຊີຕາເວັນອອກສຽງໃຕ້. ມາຮອດປະຈຸບັນນີ້ມີນັກປະພັນ, ນັກກະວີໄດ້ຮັບລາງວັນມາແລ້ວຈຳນວນ 14 ທ່ານ. ພ້ອມນີ້ກົມພິມຈຳໜ່າຍຮ່ວມກັບສະມາຄົມນັກປະພັນລາວ ຍັງໄດ້ກວດສອບບົດຂຽນເພື່ອຊີງລາງວັນແມ່ນ້ຳຂອງ (ລາງວັນ 3 ຊາດອິນດູຈີນ). ປະຈຸບັນມີຜູ້ໄດ້ຮັບລາງວັນມາແລ້ວ ຈຳນວນ 10 ທ່ານ. ນອກນີ້ ອີກບັນດານັກຂີດຂຽນຍັງມີການເສັງເອົາລາງວັນສົນໄຊປະຈຳປີ ແລະ ອື່ນໆ.

ວຽກງານພິມຈຳໜ່າຍໃນທ້າຍຊຸມປີ 2000 ມີອັນຄຶກຄັກຂຶ້ນຕື່ມຖ້າທຽບໃສ່ກັບຊຸມປີກ່ອນໆ ເພາະມີການພິມປຶ້ມຊວງເສັງກັນເປັນສິນຄ້າເຊັ່ນ: ມີຮ້ານຂາຍປຶ້ມເກີດຂຶ້ນຫຼາຍ, ມີຜູ້ຂາຍປຶ້ມເຄື່ອນທີ່ໃນຮູບແບບເປັນໂຕະຕາມຕະຫຼາດ, ແບບພາຍຖົງເລາະຕາມສະຖານທີ່ ແລະ ສະຖານີໂດຍສານ. ມີແມ່ຄ້າຂາຍປຶ້ມແບບຂາຍຍົກ ແລະ ຂາຍຍ່ອຍ (ມືນີ້ໜຶ່ງ ແລະ ມືສອງ). ແຕ່ເວລານີ້ມີການພິມປຶ້ມແບບອິດສະຫຼະ, ລັກລອກແບບ ຫຼື ລັກລິຂະສິດກັນໄປພິມ ແລ້ວພາໃຫ້ຜິດກົດໝາຍ ວ່າດ້ວຍລິຂະສິດ, ຜິດຕໍ່ກົດໝາຍອາຍາ ແລະ ຜິດຕໍ່ກົດໝາຍ ວ່າດ້ວຍພິມຈຳໜ່າຍ. ສະນັ້ນ ຈຶ່ງມີປຶ້ມປອມ ແລະ ປຶ້ມເຖື່ອນນຳເຂົ້າມາຈຳໜ່າຍຕາມທ້ອງຕະຫຼາດ. ເວລານີ້ປະກົດນີສິສັນຂຶ້ນໄປພ້ອມໆກັນກັບການຮ້ອງຟ້ອງຂຶ້ນກົມພິມຈຳໜ່າຍ. ເພື່ອແກ້ໄຂບັນຫານີ້, ກົມພິມຈຳໜ່າຍຈຶ່ງສະເໜີຕັ້ງຄະນະກຳມະການສະເພາະກິດ ເພື່ອກວດກາສິ່ງພິມຂຶ້ນ ແລ້ວມີການກວດກາ ແລະ ແກ້ໄຂໂດຍ

ອີງຕາມເງື່ອນໄຂ ແລະ ອີງໃສ່ລະບຽບກົດໝາຍ ຫຼື ຂໍ້ຕົກລົງຂອງລັດຖະມົນຕີວ່າການກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ເພື່ອເຂົ້າໄປກ່ງວຂ້ອງກັບຜູ້ເຮັດປຶ້ມປອມ, ມີການຍຶດຂອງກາງ ແລະ ດຳເນີນຄະດີ ໄປຕາມສະຖານໜັກ ຫຼື ເບົາ.

ເພື່ອປະຕິບັດຕາມກົດໝາຍພິມຈຳໜ່າຍ, ກົມພິມຈຳໜ່າຍ ໄດ້ມີການໂຄສະນາສຶກສາອົບຮົມໃຫ້ມວນຊົນ ປະຕິບັດລະບຽບກົດໝາຍ. ໃນນັ້ນ ໄດ້ຊຸກຍູ້ສົ່ງເສີມໃຫ້ພາກລັດ ແລະ ເອກະຊົນຈັດຕັ້ງສຳນັກພິມຂອງຕົນຂຶ້ນໃຫ້ຫຼາຍ ເພື່ອຄວາມສະດວກໃນການຄຸ້ມຄອງ ແລະ ສົ່ງເສີມໃຫ້ມີປຶ້ມ, ສິ່ງພິມອື່ນອອກຮັບໃຊ້ສັງຄົມໃຫ້ຫຼາຍ.

ເມື່ອປະເທດຊາດເປີດກວ້າງແຕ່ປີ 1986 ເຖິງປະຈຸບັນ ສຳນັກພິມເພີ່ມຂຶ້ນເຖິງ 8 ແຫ່ງ, ໂດຍມີກົດໝາຍພິມຈຳໜ່າຍຮັບຮອງ, ໂຮງພິມເພີ່ມຂຶ້ນເປັນ76 ແຫ່ງແລະພິມໄດ້ຮອດ4ສີ,ມີປຶ້ມພິມສຳເລັດ3.000ກວ່າຫົວເລື່ອງ ມີຈຳນວນພິມ ເຖິງ 35 ລ້ານ ກວ່າເຫຼັ້ມ, ມີບໍລິສັດແປພາສາເກີດຂຶ້ນຮອດ 20 ແຫ່ງ, ຍັງມີບໍລິສັດອອກແບບໂຄສະນາຜ່ານສິ່ງພິມຫຼາຍບ່ອນ ແລະ ຮ້ານຈຳໜ່າຍປຶ້ມສິ່ງພິມເພີ່ມຂຶ້ນ, ຜະລິດຕະພັນມີຫຼາຍຮູບຫຼາຍສີ, ມີທັງປະລິມານ ແລະ ຄຸນນະພາບ.

ການພົວພັນຕ່າງປະເທດ, ກົມພິມຈຳໜ່າຍ ໄດ້ມີການຍາດແຍ່ງການຊ່ວຍເຫຼືອຈາກຕ່າງປະເທດ ແລະ ພົວພັນກັບສາກົນເປັນຢ່າງດີ, ເຮັດໃຫ້ສີສັນໃນຂົງເຂດພິມຈຳໜ່າຍກ້າວສູ່ບັນຍາກາດ ແລະ ມິດຕະພາບຄື: ທຸກໆປີມີການແລກປ່ຽນຢ້ຽມຢາມກັນລະຫວ່າງສອງກົມພິມຈຳໜ່າຍລາວ-ຫວຽດນາມ, ກົມຫໍສະໝຸດຫວຽດນາມໄດ້ເຊັນບົດບັນທຶກຊ່ວຍຈຳ ແລະ ຮັບເອົາຊ່ຽວຊານຕ່າງປະເທດເຂົ້າມາຊ່ວຍ 2 ທ່ານ. ກົມໄດ້ຍາດແຍ່ງເອົາການຊ່ວຍເຫຼືອຈາກ ສະມາຄົມນັກຮົບເກົ່າຂອງອາເມລິກາເພື່ອສ້າງຫໍສະໝຸດປວງຊົນ ແລະ ຫໍສະໝຸດໂຮງຮຽນຢູ່ທ້ອງ

ຖິ່ນ. ໄດ້ເຊັນບົດບັນທຶກຊ່ວຍຈຳກັບອົງການສຶກສາຊຸມຊົນ ເພື່ອພັດທະນາ ສົ່ງເສີມການອ່ານ. ວຽກນີ້ ໄດ້ດຳເນີນຢູ່ທົ່ວແຂວງຫຼວງພະບາງ. ກົມຮ່ວມ ກັບຫໍສະໝຸດແຫ່ງຊາດ ໄດ້ຍາດແຍ່ງການຊ່ວຍເຫຼືອຂົງເຂດຈາກຫໍສະ ໝຸດແຫ່ງຊາດ ສະວີເດັນ ໃນດ້ານກໍ່ສ້າງຊັບພະຍາກອນມະນຸດດ້ານການ ອ່ານ. ຊຶ່ງຜ່ານມາໄດ້ຈັດກອງປະຊຸມຮ່ວມ 3 ຝ່າຍຂຶ້ນ 3 ຄັ້ງ ມີລາວ, ສະ ວີເດັນ ແລະ ຫວຽດນາມເພື່ອກະກຽມໃຫ້ແກ່ໂຄງການ.

ວຽກງານພິມຈຳໜ່າຍມັນເດີນໄປຕາມກົດເກນຂອງມັນຄື: ມັນ ກຳເນີດຂຶ້ນຈາກປະຖົມປະຖານ ແລະ ງ່າຍດາຍເອີ້ນວ່າ ແຕ່ຕ່ຳຫາສູງ, ແຕ່ງ່າຍດາຍໄປຫາສັບສົນ. ແຕ່ມີລັກສະນະກ້າວໜ້າ ແລະ ທັນສະໄໝ.

ການພິມຈຳໜ່າຍແມ່ນວຽກໜຶ່ງທີ່ປະກົດຂຶ້ນໃນຊີວິດສັງຄົມ, ຊຶ່ງ ເປັນກຸ່ມວິຊາການໜຶ່ງທີ່ຈຳເປັນ ແລະ ຂາດບໍ່ໄດ້. ມັນຮຽກຮ້ອງໃຫ້ມີ ການຄຸ້ມຄອງ, ປັບປຸງ ແລະ ສົ່ງເສີມໃຫ້ເຕີບໃຫຍ່ໄປຄຽງຄູ່ກັບເສດຖະ ກິດສັງຄົມດ້ານອື່ນໆ. ມັນເປັນກິດຈະການໜຶ່ງທີ່ສຳຄັນຢູ່ໃນວຽກງານ ຖະແຫຼງຂ່າວ ແລະ ວັດທະນະທຳ. ຊຶ່ງເອີ້ນວ່າ: ສາຍໃຍແຫ່ງຂໍ້ມູນຂ່າວ ສານ, ມັນເຜີຍແຜ່ຜົນງານ, ທັດສະນະຄິດປະດິດສ້າງຂອງບັນດານັກຄົ້ນຄວ້າ ດ້ານວິທະຍາສາດສັງຄົມ ແລະທຳມະຊາດ ຊຶ່ງໄດ້ແກ່:ນັກປະພັນ, ນັກວັນ ນະຄະດີ, ບູຮານຄະດີ, ວິຈິດຕະກອນ, ສິລະປິນ ແລະ ອື່ນໆ. ພາຍໃຕ້ ຮູບການຈັດພິມປຶ້ມ, ແລະ ໂຄສະນາຜ່ານສິ່ງພິມເຊັ່ນ: ໂປສະເຕີ, ສະຕິກ ເກີ້, ແບນເນີ, ປ້າຍ, ສະຫຼາກສິນຄ້າ, ປະຕິທິນ, ແຜ່ນພັບ, ປຶ້ມໂຄສະນາ ແລະ ອື່ນໆຢ່າງຫຼາກຫຼາຍ.

ວຽກງານພິມຈຳໜ່າຍມັນຕອບສະໜອງແລະຜັນຂະຫຍາຍແນວ ທາງນະໂຍບາຍຂອງພັກ-ລັດ ໃຫ້ໄປສູ່ລວງກ້ວາງໃນທົ່ວປວງຊົນໃຫ້ຮັບ ຮູ້ ຫຼື ເຊື່ອມຊຶມໂດຍທາງອ້ອມ ແລະ ທາງກົງ. ມັນຕອບສະໜອງໜ້າທີ່ຍຸດ ທະສາດຂອງພັກຄື: ການປົກປັກຮັກສາ ແລະ ສ້າງສາປະເທດຊາດ; ທັງ

ເປັນໄມ້ຫຼາວັດແທກແຫ່ງຄວາມຈະເລີນ ແລະ ເຕີບໂຕເຂັ້ມແຂງຂອງປະເທດຊາດໃນດ້ານເສດຖະກິດ-ສັງຄົມອີກດ້ວຍ.

ຫວນຄືນຜົນງານການເຄື່ອນໄຫວ 60 ປີ ແຫ່ງການພິມຈຳໜ່າຍ ເຖິງວ່າ ຢູ່ໃນສະພາບຈຳກັດ ແຕ່ການພິມຈຳໜ່າຍລາວໃຕ້ການຊີ້ນຳ ນຳພາຂອງພັກປະຊາຊົນປະຕິວັດລາວ ໄດ້ບືນຕົວກ້າວຂຶ້ນເປັນລຳດັບ; ໃນນາມຄົນຮ່ວມອາຊີບດຽວກັນ ແລະ ຜູ້ຮັບຜິດຊອບໂດຍກົງ ທີ່ເປັນເສນາທິການໃຫ້ແກ່ທ່ານລັດຖະມົນຕີວ່າການກະຊວງຖະແຫລງຂ່າວ ແລະວັດທະນະທຳ ກໍຄືພັກ ແລະ ລັດຖະບານ ຂໍຮຽກຮ້ອງມາຍັງນັກຮົບການພິມຈຳໜ່າຍ ແລະ ຫໍສະໝຸດ ຈົ່ງບືນຕົວກ້າວຂຶ້ນສ້າງຜົນງານໃໝ່ໃຫ້ຍິ່ງໃຫຍ່ກວ່າເກົ່າ.

ທີ່ນະຄອນຫຼວງວຽງຈັນ, ວັນທີ 15 ພຶດສະພາ 2010

ຄົ້ນຄວ້າ ແລະ ຮຽບຮຽງ: ທ່ານ ກະວິນ ກຽງຄຳຊົນນີ

ຮຽບຮຽງເພີ່ມເຕີມ: ທ່ານສີວຽງແຂກ ກອນນີວົງ, ທ່ານ ຄຳເສັງ ສຸນດາລາ ແລະ ທ່ານ ຈັນທະພິລິດ ຈຽມສີສຸລາດ

# ສະຖິຕິ ສຳນັກພິມ ປີ 2011

| ລ/ດ | ຊື່ສຳນັກພິມ | ຫົວໜ້າສຳນັກພິມ | ວ/ດ/ປ ອະນຸຍາດ | ວ/ດ/ປ ອະນຸຍາດ (ຕໍ່) | ສະຖານທີ່ຕັ້ງ | ໂທລະສັບ | ໝາຍເຫດ |
|---|---|---|---|---|---|---|---|
| 1 | ສຳນັກພິມ ສີສະເກດ | ນ. ຄອນມະລີ ສີພອນໄຊ | 17/12/2009 | | ບ. ສີສະເກດ ມ. ຈັນທະບູລີ | 020 55417368 | ເອກະຊົນ |
| 2 | ສຳນັກພິມ ໄວເດັກ | ນ. ພັນນາລີ ເທບພະວົງສາ | 10/03/2010 | 28/03/2011 | ບ. ໂນນແສງຈັນ ມ. ໄຊທານີ | 020 22444898<br>020 22229807 | ເອກະຊົນ |
| 3 | ສຳນັກພິມ ອ້າຍໜູນ້ອຍ | ທ່ານ. ຄຳຫຼ້າ ປັນຍາສຸກ | 22/03/2010 | 21/04/2011<br>30/04/2012 | ບ. ວັດໜອງ ມ. ຫຼວງພະບາງ | 071 254937 | ເອກະຊົນ |
| 4 | ສຳນັກພິມ ດອກ ເກດ | ນ. ດວງເດືອນ ບຸນຍາວົງ | 31/03/2010 | 22/03/2011<br>09/03/2012 | ບ. ສີຖານ ມ. ສີໂຄດ | 020 55607292 | ເອກະຊົນ |
| 5 | ສຳນັກພິມ ແສງສຸວັນ | ນ. ກິງເດືອນ ເນດຕະວົງ | 29/06/2010 | | ບ. ທົ່ງສາງນາງ ມ. ຈັນທະບູລີ | 020 55605605 | ເອກະຊົນ |
| 6 | ສຳນັກພິມ ມັກອ່ານ | ນ. ສຸກພະຈັນ ໄຊເສນາ | 29/06/2010 | 03/01/2012<br>03/01/2012 | ຖະໜົນສາມແສນໄທ ມ. ຈັນທະບູລີ | 021285150 | ເອກະຊົນ |
| 7 | ສຳນັກພິມ ແສງປັນຍາ | ນ. ແກ້ວມະນີວອນ ຜາລີຂັນ | 15/11/2010 | | ບ. ສີສະຫວາດ ມ. ຈັນທະບູລີ | 021 218740 | ເອກະຊົນ |

| | | | | | | | |
|---|---|---|---|---|---|---|---|
| 8 | ສຳນັກພິມ ວຽງສະຫວັນ | ນ. ວຽງສະຫ້ວນ ພະວໍລະຈິດ | 29/11/2010 | | ບ. ຄູ ວຽງ ມ. ສີສັດຕະນາກ | 020 99801961 | ເອກະຊົນ |
| 9 | ສຳນັກພິມ ມິດີບຸກ | ນ. ປານຄຳ ອິນທະວົງ | 29/11/2010 | 23/01/2012 | ບ. ດົງປາລານທົ່ງ ມ. ສີສັດຕະນາກ | 021 452924 | ເອກະຊົນ |
| 10 | ສຳນັກພິມ ຫຼວງພະສີ | ທ່ານ.ດວງໄຊ ຫຼວງພະສີ | 30/11/2010 | | ບ. ຮອງແກ ມ. ໄຊເສດຖາ | 020 77602149 | ເອກະຊົນ |
| 11 | ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ | ທ່ານ ວິວັນ ຈັນທະໂຄດ | | | ບ. ຊຽງຍືນ ມ. ຈັນທະບູລີ | 021 212473 | ລັດ |
| 12 | ສຳນັກພິມປຶ້ມແບບຮຽນ ຂອງກະຊວງສຶກສາທິການ | ທ່ານ ນາງ ພວງຄຳ | | | ບ. ສີສະເກດ, ມ. ສີສັດຕະນາກ | | ລັດ |
| + | ລວມ ມີ 12 ສຳນັກພິມ; ໃນນີ້ ສຳນັກພິມເອກະຊົນ ມີ 10 ແຫ່ງ | | | | | | 10/2 |

ນະຄອນຫລວງວຽງຈັນ, ວັນທີ / 12 / 2012

ຫົວໜ້າກົມພິມຈຳໜ່າຍ

ຫົວໜ້າພະແນກຄຸ້ມຄອງການພິມ

24 / VII
ຫ້າມຈຳໜ່າຍ

# ບັນຊີລາຍຊື່ໂຮງພິມ-ຮ້ານພິມຕ່າງໆ
# ໃນນະຄອນຫຼວງວຽງຈັນ ປະຈຳປີ 2009

| ລ/ດ | ລາຍຊື່ | ທີ່ຕັ້ງ | ເບີໂທລະສັບ | ໝາຍເຫດ |
|---|---|---|---|---|
| 1 | ໂຮງພິມ ແຫ່ງລັດ | ບ. ຊຽງຍືນ/ມ.ຈັນທະບູລີ | 213273/55504519 | ທ.ໄມອອນ ທຳມະວົງ |
| 2 | ໂຮງພິມສຶກສາ | ບ. ສີສະເກດ/ມ.ຈັນທະບູລີ | 215357/ | ທ.ຄຳບອນ ບຸນນະລາດ |
| 3 | ໂຮງພິມໜຸ່ມລາວ | ບ. ໜອງປາໄນ/ມ.ສີໂຄດ | 215721/55518433 | ທ. ສະຫວັດ ໂມລີພັນ |
| 4 | ໂຮງພິມກອງທັບ | ກະຊວງປ້ອງກັນຊາດ | 911114/99800785 | ທ.ຄຳເພີຍ ພົມມະລັງສີ |
| 5 | ໂຮງພິມ ນະຄອນຫລວງ | ບ. ດົງປາແຫລບ/ມ.ຈັນທະບູລີ | 216590/5511324 | ທ.ແສງໂຄດ ສີເມືອງ |
| 6 | ໂຮງພິມ ກົມແຜນທີ່ | ສຳນັກງານນາຍົກ | 55699574 | ທ.ພວງພັນ |
| 7 | ໂຮງພິມ ສີສະຫວາດ | ບ. ສີສະຫວາດ/ມ.ຈັນທະບູລີ | 213308/55517842 | ທ.ຈັນທຽມ ຣັຖະເຮົ້າ |
| 8 | ໂຮງພິມປາກປ່າສັກ | ບ. ວັດຈັນ/ມ.ຈັນທະບູລີ | 212303/77715528 | ທ.ມົ້ງ ອິນທະວົງ |
| 9 | ໂຮງພິມ ສະຫວ່າງ | ບ. ສະຫວ່າງ/ມ.ຈັນທະບູລີ | 214290/99902733 | ນ.ຈັນນວນ ແສງປະເສີດ |
| 10 | ໂຮງພິມ ມັນທາຕຸລາດ | ບ. ສີຖານເໜືອ/ມ.ສີໂຄດ | 222130/55516138 | ທ.ຄອນທະໄລ ພະຈັນທະວົງ |
| 11 | ໂຮງພິມ ຮ່ວມມິດ | ບ. ໂພນຕ້ອງ/ມ.ຈັນທະບູລີ | 562144/55511775 | ນ.ສາຍອຳພອນ ວິລີວົງ |
| 12 | ໂຮງງານ ປຶ້ມຊຽນ | ບ. ສະຫວ່າງ/ມ.ຈັນທະບູລີ | 214400/5511324 | ທ.ແສງໂຄດ ສີເມືອງ |
| 13 | ໂຮງພິມ ຫ້ວຍຫົງ | ບ. ຫ້ວຍຫົງ/ມ.ຈັນທະບູລີ | 560151/55503940 | ທ.ບຸນມັ່ນ ຈະເລີນສຸກ |
| 14 | ໂຮງພິມ ສະຫວັນ | ບ. ຫ້ວຍຫົງ/ມ.ຈັນທະບູລີ | 561556/55513369 | ທ.ສົມພຽງ ວິສຸດທິວົງ |
| 15 | ໂຮງພິມ ສຸຣິຊາດ | ບ. ໂພນສະຫວ່າງ/ມ.ຈັນທະບູລີ | 222124/22220332 | ທ.ດາວວີ ສີລີພົນ |

| | | | | |
|---|---|---|---|---|
| 16 | ໂຮງພິມ ອິນດາວຄຳ | ບ. ສີບຸນເຮືອງ/ມ.ຈັນທະບູລີ | 222929/55613941 | ທ.ອູລຳ ໄຊວົງສີ |
| 17 | ໂຮງພິມ ດວງມາ | ບ. ທົ່ງປົ່ງ/ມ.ສີໂຄດ | 620098/55519093 | ທ.ດວງມາ ໄຊຍະສອນ |
| 18 | ໂຮງພິມ ເອັສພີພີ | ບ. ນາຄຳ/ມ.ສີໂຄດ | 262194/55518882 | ທ.ສຸລິເນດ ໄຊຍະເດດ |
| 19 | ໂຮງພິມ ສິນໃຈ | ບ. ໜອງບົວທອງ/ມ.ສີໂຄດ | 217628/55518472 | ທ.ສິນໃຈ ທິລະສັກ |
| 20 | ບໍລິສັດ ບຸບຜາ ຂາອອກ-ຂາເຂົ້າ | ບ. ອູບມຸງ/ມ.ສີໂຄດ | 213699/55517239 | ທ.ພຸດທະກອນ ບຸບຜາສວັນ |
| 21 | ໂຮງພິມ ເທບປັນຍາ | ບ. ວຽງຈະເລີນ/ມ.ໄຊເສດຖາ | 413972/22222098 | ທ.ວິຊຸນ ປັນຍາວິຈິດ |
| 22 | ໂຮງພິມ ແກ້ວປະເສີດ | ບ. ທາດຫລວງ/ມ.ໄຊເສດຖາ | 261950/55515468 | ທ.ໄກສອນ ວົງປະເສີດ |
| 23 | ໂຮງພິມ ດາວວິໄລ | ບ. ທາດຫລວງ/ມ.ໄຊເສດຖາ | 412934/55611753 | ນ.ດາວອນ ພິມມະສອນ |
| 24 | ໂຮງພິມ ສັນຕິພາບ | ບ. ສະພານທອງ/ມ.ໄຊເສດຖາ | 415441/55404059 | ນ.ອິນທິລາ ຫຼວງປະເສີດ |
| 25 | ໂຮງພິມ ສະພານທອງ | ບ. ສະພານທອງ/ມ. ໄຊເສດຖາ | 313757/55389161 | ນ.ອຸ່ນ ດວງພະຈັນ |
| 26 | ໄລ ປ້າຍ ແລະ ການພິມ | ບ. ພະໄຊ/ມ.ສີສັດຕະນາກ | 350523/55517063 | ທ.ສີວິໄລ ສຸກສະຫວັດ |
| 27 | ໂຮງພິມ ເພັງສະຫວັນ | ບ. ຕານມີໄຊ/ມ.ໄຊທານີ | 771054/55612960 | ທ.ບຸນຈັນ ວັນນະຈັກ |

# ສະຖິຕິ ຮ້ານຂາຍປຶ້ມ

| ລ/ດ | ຊື່ຮ້ານຂາຍປຶ້ມ | ເບີໂທລະສັບ | ການລົງທຶນ | | ຊື່ເຈົ້າຂອງຮ້ານຂາຍປຶ້ມ | ທີ່ຕັ້ງຂອງຮ້ານຂາຍປຶ້ມ | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|
| | | | ຄົງທີ່ | ໝູນວຽນ | | ເລກທີ | ຖະໜົນ | ໜ່ວຍ, ບ້ານ | ເມືອງ, ແຂວງ | |
| 1 | ສູນຈຳໜ່າຍປຶ້ມ ຂຶ້ນກັບ ບ/ສ ແອນດີນຸ່ມ | 021 414052 | | | ທ. ເດັນລີພາຍ | 058 | 23 ສິງຫາ | ໂພນໄຊ | ໄຊເສດຖາ ນ/ຫຼ ວ/ຈ | |
| 2 | ຄິວຄິງ ຂາຍປຶ້ມ Q. KING BOOK SHOP | 020 2203338 | 40.000.000 | 10.000.000 | ນ. ທະວີສຸກ ອານຸວົງ | 053 | ດົງປ່າລານ | ໜ່ວຍ 02 ດົງປ່າລານທົ່ງ | ສີສັດຕະນາກ ນ/ຫຼ ວ/ຈ | |
| 3 | ຮ້ານບຸນຫຼາຍຍອດອຸດົມຂາຍເຈ້ຍ,ປຶ້ມ ແລະສິ່ງພິມ | 020 77719690 | 30.000.000 | 20.000.000 | ນ. ບຸນຫຼາຍ ວິໄລແສງ | 348 | ດອນແດງ | ໜ່ວຍ 28 ດອນແດງ | ຈັນທະບູລີ ນ/ຫຼ ວ/ຈ | |
| 4 | ທີ. ເອມ. ວາຍ T M Y | 020 55417368 | 80.000.000 | 20.000.000 | ນ.ຄອນທະລີສີພອນໄຊ | 196 | ມະໂຫສິດ | ໜ່ວຍ12. ສີສະເກດ | ຈັນທະບູລີ ນ/ຫຼ ວ/ຈ | |
| 5 | ຮ້ານນາງສຸພະຈັນ ຈຳໜ່າຍປຶ້ມ ແລະສິ່ງພິມທົ່ວໄປ HAPPYMOON | 020 55604777 021 620560 | 10.000.000 | 20.000.000 | ນ. ສຸພະຈັນ ໄຊເສນາ | | ໜ່ວຍ 11 | ສີສະເກດ | ຈັນທະບູລີ ນ/ຫຼ ວ/ຈ | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| 6 | ວຽງຈັນ ບຸກເຊັນເຕີ VIENTIANE BOOK CENTER | 020 22429726 | 20.000.000 | 10.000.000 | ນ.ດອນເພັດ ສີຫາລາດ | 51/1 | ປາງຄຳ | ໜ່ວຍ 3. ຊຽງຍືນ | ຈັນທະບູລີ ນ/ຫຼ ວ/ຈ | |
| 7 | ດີ ດີ ບຸກຮາວ DEE DEE BOOK HOUSE | 020 55627057 | 40.000.000 | 10.000.000 | ນ. ພິລາວັນ ອະມະຣະທິທາດາ | 073 | ດົງປ່າລານ | ໜ່ວຍ 5. ໜອງຈັນ | ສີສັດຕະນາກ ນ/ຫຼ ວ/ຈ | |
| 8 | ບໍລິສັດ ເວນຮາຮົງ WNENHAHONG Co. LTD | 020 56615942 | 30.000.000 | 20.000.000 | ທ. ຈິງ ອິນທະວົງ | | ຫຼວງພະບາງ | ໜ່ວຍ 01 ບ. ຊຸມຕາທົ່ງ | ສີໂຄດຕະບອງ ນ/ຫຼ ວ/ຈ | |
| 9 | ຮ້ານຈຳໜ່າຍປຶ້ມ ໂມນີວເມນ MONUMENT | 021 252100 | 1.115.500 ລວມ | | ທ. ຈັນດາເລດ ເພັດສີລິແສງ | 124/1 | ປາງຄຳ | ໜ່ວຍ 12 ບ.ມີໄຊ | ຈັນທະບູລີ ນ/ຫຼ ວ/ຈ | |
| 10 | ຮ້ານຈຳໜ່າຍປຶ້ມ ແລະອຸປະກອນ ການສອນພາສາອັງກິດ (ວິທະຍາໄລລາວ-ອາເມລິກາ) | ( 020 ) 99900453 | 75.600.000 ລວມ | | ທ. ທອງສອນ ພຸດສະຫວັດ | | ໄກສອນ | ໜ່ວຍ 14 ໂພນເຄັງ | ໄຊເສດຖາ ນ/ຫຼວງວຽງຈັນ | |
| 11 | ຮ້ານໂຄສະນາແລະ ຈຳໜ່າຍປຶ້ມ-ສິ່ງພິມ ຊະນິດຕ່າງໆ | ( 021 ) 214039 | 5.300.000 ລວມ | | ທ. ພົງທະຈິດ ສະຫວັດດີຜົນ | 078/4 | ຫຼວງພະບາງ | ໜ່ວຍ 07 ໜອງຈັນ | ສີສັດຕະນາກ ນ/ຫຼວງວຽງຈັນ | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| 12 | ຮ້ານຂາຍປຶ້ມ " ໂອຣຽນໂທນ ບຸກ ຊອບ " ORIENTAL BOOK SHOP | ( 020 ) 55513418 | 50.000.000 ລວມ | | ທ. ຍໍ ແກ້ວ ມູນລາ | 195 | ອານຸ | ໜ່ວຍ 13 ວັດຈັນ | ຈັນທະບູລີ ນ/ຫຼ ວ/ຈ | |
| 13 | ຮ້ານຂາຍປຶ້ມ ດອກເກດ DOKKED BOOK SHOP | 020 58574433 | 30.000.000 | 20.000.000 | ນ.ດວງແຂ ບຸນຍາວົງ | | | ໜ່ວຍ 9 ໂພນທັນ ເໜືອ | ໄຊເສດຖາ ນ/ຫຼ ວຽງຈັນ | |
| 14 | ຮ້ານຂາຍປຶ້ມ ສະຫວ່າງການພິມ Book Marketing Factory Savang printing | 020 55520435 | 500.000.000 | 100.000.000 | ນ.ຈັນນວນ ສີປະເສີດ | 128 | ໂພນ ຕ້ອງ | ໜ່ວຍ 7 ສະຫວ່າງ | ຈັນທະບູລີ ນ/ຫຼ ວຽງຈັນ | |

# ສະຖິຕິ ບໍລິສັດ ໂຄສະນາ

| ລ/ດ | ຊື່ບໍລິສັດ | ເບີໂທລະສັບ | ການລົງທຶນ | | ຊື່ເຈົ້າຂອງບໍລິສັດ | ທີ່ຕັ້ງຂອງບໍລິສັດ | | | | ໝາຍເຫດ ວັນທີ |
|---|---|---|---|---|---|---|---|---|---|---|
| | | | ຄົງທີ່ | ໝູນວຽນ | | ເລກທີ | ຖະໜົນ | ໜ່ວຍ. ບ້ານ | ເມືອງ ແຂວງ | |
| 01 | ບ/ສ ເຄພີ ອອກແບບ ແລະ ໂຄສະນາ ຜ່ານສື່ງພິມ ຈຳກັດ (ຄ ພ) K.P Design and Advertising Co,LTD ( K.P ) | 98922664 55462288 | 30.000.000 | 20.000.000 ກີບ | ທ.ຄຳພຸດ ອຸຕະມະນີ | | | 19 ທາດຫຼວງໃຕ້ | ໄຊເສດຖາ ນ/ຫຼ ວຽງຈັນ | |

| | | | | | | | | | | |
|---|---|---|---|---|---|---|---|---|---|---|
| 02 | ບ/ສ ເອັມ ເອ ເອ ຈຳກັດ ( ອ.ອ.ອ. ) Media Art Advertising Co, LTD | 021 461970 99915599 | 98.480.000 | 30.000.000 ກີບ | ທ.ສຸພາ ທີນເພັດ | 274 | | 21 ແສງສະຫວ່າງ | ໄຊເສດຖາ ນ/ຫຼ ວຽງຈັນ | |
| 03 | ບໍລິສັດນ້ຳມັນເຊື້ອໄຟດາລາຈະເລີນ | 021 264881 | | | | | | ບ້ານ ອຸບມຸງ | | |
| 04 | ບໍລິສັດດິງເຊີນອອກແບບໂຄສະນາ | 55528321 | 80.000 $ | 120.000 $ 48.000.000 ກີບ | ທ. ໄດຊີບິງ | 125 | | ໜອງດ້ວງໃຕ້ | ສີໂຄດຕະບອງ ນ/ຫຼ ວຽງຈັນ | 25.04.12 24.04.13 |
| 05 | ບໍລິສັດລາວຣູດສແອດເວີທາຍຊິງຈຳກັດ | 55521794 | 52.000.000 ກີບ | | ນ. ວັນດາລາວົງເດືອນ | 132 | | ສີມໂຮງ | ຫາດຊາຍຟອງ ນ/ຫຼ ວຽງຈັນ | 09.04.12 08.05.13 |
| 06 | ບໍລິສັດວຽງພະສິມິເດຍຈຳກັດຜູ້ດຽວ | 55333302 | 33.500.000 ກີບ | 66.499.999 ກີບ | ທ.ຄອນໄຊ ຈັນທະວອນ | 140 | | ບ້ານ ຊ້າງຄູ້ | ມ.ໄຊທານີ ນ/ຫຼ ວຽງຈັນ | 09.05.12 08.05.12 |

# ສະຖິຕິ ບໍລິສັດ ແປພາສາ ປີ 2011

| ລ/ດ | ຊື່ບໍລິສັດ | ຫົວໜ້າບໍລິສັດ | ວ/ດ/ປ ອະນຸຍາດ | ສະຖານທີ່ຕັ້ງ | ໂທລະສັບ | ວ/ດ/ປ ຕໍ່ | ໝາຍເຫດ |
|---|---|---|---|---|---|---|---|
| 1 | ບໍລິສັດ ທີດີເອັສ ຈຳກັດ | ທ່ານ. ບຸນໄທ ແກ້ວວິໄລ | 18/10/2001 | ບ. ບຶງຂະຫຍອງ ມ. ສີສັດຕະນາກ | 021 313339 | | ເອກະຊົນ |
| 2 | ບໍລິສັດ ດວງປະທີບ ຈຳກັດຜູ້ດຽວ | ທ່ານ. ທອງຂຽນ ຂໍາ ຕະກຸນ | 04/10/2001 | ບ. ມີໄຊ ມ. ຈັນທະບູລີ | 021 214118 | 17/01/2012 | ເອກະຊົນ |
| 3 | ບໍລິສັດ ວຽງຈັນວິຊາ ການ ຄົ້ນຄົ້ວສາກົນ ຈຳກັດຜູ້ດຽວ | ທ່ານປ. ດາລາ ກອນ ປະ ຖົມມະວົງ | 18/02/2002 | ບ. ອານຸ ມ. ຈັນທະບູລີ | 021 214182 | 21/02/2012 | ເອກະຊົນ |
| 4 | ບໍລິສັດ ເວັນຣາຣິງ ຈຳກັດ | ທ່ານ. ຈິງ ອິນທະວົງ | 27/03/2003 | ບ. ຊຸນຕາທ່າ ມ. ສີໂຄດ ຕະບອງ | 021 2615891 | 26/04/2012 | ເອກະຊົນ |
| 5 | ບໍລິສັດ ລາວ ເທັຣດມາກ | ທ່ານ. ຄຳແສນ ໄຊຍະວົງ | 18/12/2005 | ບ. ສີສະຫວາດ ກາງ ມ. ຈັນທະບູລີ | 021 222913 | | ເອກຊົນ |
| 6 | ບໍລິສັດ ອານຟາຄອມ ພິວເຕີ ຈຳກັດ | ນ. ກອງແກ້ວ ຕຸນາລົມ | 21/03/2006 | ບ. ຮອງໄກ່ ແກ້ວມ. ຈັນທະ ບູລີ | 021 212245 | | ເອກະຊົນ |

| | | | | | | | |
|---|---|---|---|---|---|---|---|
| 7 | ວິສາຫະກິດ ສ່ວນບຸນຄົນ ສູນແປພາສາ ເຣໂວຣູເຊິນ | ນ. ແກ້ວຊຸມພ ສັກດາວົງ | 08/01/2007 | ບ. ສີບຸນເຮືອງ ມ. ຈັນທະບູລີ | 021 451513 | | ເອກະຊຊົນ |
| 8 | ບໍລິສັດ ວ/ກ ສ່ວນບຸກຄົນ ບ/ກ ແປພາສາ ແລະ ໃຫ້ຄໍາປຶກສາທີດີ | ທ່ານ. ທອງແດງ ສິງທິລາດ | 18/03/2010 | ບ. ຈອມເພັດໃຕ້ ມ. ສີສັດຕະນາກ | 021 313132 | | ເອກະຊົນ |
| 9 | ບໍລິສັດ ເອສເອັມພີ | ນ. ມະໂນລົມ ສີສຸນວນ | 25/05/2010 | ບ. ສີບຸນເຮືອງ ມ. ຈັນທະບູລີ | 020 77877990 | 23/05/2012 | ເອກະຊົນ |
| 10 | ບໍລິສັດ ແປພາສາລາດສະວົງ | ນ. ສີສຸນັນ ລາດສະວົງ | 12/09/2011 | ບ. ໂນນແກ້ວ ມ. ສີໂຄດ | 020 54465533 | | ເອກະຊົນ |
| 11 | ບໍລິສັດ ເຣໂວລູເຊິນ ເອເຊຍ ຈໍາກັດ | ນ. ສຸລີວັນ ວົງມະນີ | 17/06/2011 | ບ. ອານຸ ມ. ຈັນທະບູລີ | 020 55444893 | | ເອກະຊົນ |
| 12 | ບໍລິສັດ center link | ນ. ອິລະນຸດ ໄຊຍະພົມ | 22/08/2011 | ບ. ສີດໍາດວນ ມ. ຈັນທະບູລີ | 020 55579079 | | ເອກະຊົນ |
| 13 | ບໍລິສັດ ວຽງພະສີ ມີເດຍ | ທ່ານ. ຄໍອນໄຊ ຈັນທະວອນ | 27/04/2011 | ບ. ຊາງຄູ ມ. ໄຊທານີ | 020 78804011 | | ເອກະຊົນ |

# ສະຫຼຸບການຊ່ວຍເຫຼືອວຽກງານຫໍສະໝຸດຂອງ ອົງການຕ່າງປະເທດ

## I. ອົງການພັດທະນາເດັກນ້ອຍລາວຍີ່ປຸ່ນ ( SVA )

- ປີ 2006 ສ້າງຫໍສະໝຸດທ້ອງຖິ່ນ 1 ແຫ່ງ : ແຂວງ ສະຫວັນນະເຂດ
- ປີ 2007 ສ້າງຫໍສະໝຸດທ້ອງຖິ່ນ 1 ແຫ່ງ : ແຂວງ ນະຄອນຫຼວງວຽງຈັນ
- ປີ 2008 ສ້າງຫໍສະໝຸດທ້ອງຖິ່ນ 1 ແຫ່ງ : ແຂວງ ວຽງຈັນ
- ປີ 2009 ສ້າງຫໍສະໝຸດທ້ອງຖິ່ນ 1 ແຫ່ງ : ແຂວງ ໄຊຍະບູລີ
- ປີ 2010 ສ້າງຫໍສະໝຸດທ້ອງຖິ່ນ 1 ແຫ່ງ : ແຂວງ ອຸດົມໄຊ
- ປີ 2009 ສ້າງຕູ້ປຶ້ມເຄື່ອນທີ່ 107 ຕູ້

24/VII

## II. ສະມາຄົມຮ່ວມນ້ຳໃຈເດັກນ້ອຍລາວ ຍີ່ປຸ່ນ (ALC)

ຫ້າມຈຳໜ່າຍ

- ປີ 2006 ສ້າງຫ້ອງສະໝຸດໂຮງຮຽນ 64 ແຫ່ງ
- ປີ 2007 ສ້າງຫ້ອງສະໝຸດໂຮງຮຽນ 111 ແຫ່ງ
- ປີ 2008 ສ້າງຫ້ອງສະໝຸດໂຮງຮຽນ 203 ແຫ່ງ
- ປີ 2009 ສ້າງຫ້ອງສະໝຸດໂຮງຮຽນ 181 ແຫ່ງ
- ປີ 2010 ສ້າງຫ້ອງສະໝຸດໂຮງຮຽນ 139 ແຫ່ງ
- ປີ 2006 -2007 ສ້າງຕູ້ປຶ້ມມອບໃຫ້ໂຮງຮຽນ 371 ຕູ້

## III. ອົງການອີຟາເຈແປນ (Efa-Japan)

- ປີ 2008 ສ້າງຫ້ອງສະໝຸດໂຮງຮຽນ 1 ແຫ່ງ
- ປີ 2009 ສ້າງຫ້ອງສະໝຸດໂຮງຮຽນ 24 ແຫ່ງ
- ປີ 2010 ສ້າງຫ້ອງສະໝຸດໂຮງຮຽນ 25 ແຫ່ງ

## IV. ອົງການຣູມທູຣີດ(RoomToRead)ຂຶ້ນກັບກ/ຊສຶກສາ

- ປີ 2006 ສ້າງຫ້ອງສະໝຸດໂຮງຮຽນ 42 ແຫ່ງ
- ປີ 2007 ສ້າງຫ້ອງສະໝຸດໂຮງຮຽນ 98 ແຫ່ງ
- ປີ 2008 ສ້າງຫ້ອງສະໝຸດໂຮງຮຽນ 199 ແຫ່ງ
- ປີ 2009 ສ້າງຫ້ອ ສະໝຸດໂຮງຮຽນ 167 ແຫ່ງ
- ປີ 2010 ສ້າງຫ້ອງສະໝຸດໂຮງຮຽນ 151 ແຫ່ງ

## V. ໂຄງການສົ່ງເສີມການສຶກສາຊຸມຊົນ ( CLI )

- ປີ 2010 ສ້າງຫ້ອງສະໝຸດໂຮງຮຽນ 2 ແຫ່ງ ແລະ ເຮືອສະໝຸດເຄື່ອນທີ່ 2 ລຳ

## VI. ອົງການກູດແຮນ : ( GH ) ຂຶ້ນ ກັບ ກ/ຊ ສຶກສາ

- ປີ 2010-2011 ສ້າງຫ້ອງສະໝຸດໂຮງຮຽນ 5 ແຫ່ງ ຢູ່ເມືອງໄຊທານີ.
- ປີ 2006 ມີຫໍສະແຂວງ 1 ແຫ່ງ ແລະ ຫ້ອງສະໝຸດໂຮງຮຽນ 64

ແຫ່ງ

- ປີ 2007 ມີຫໍສະແຂວງ 1 ແຫ່ງ ແລະ ຫ້ອງສະໝຸດໂຮງຮຽນ 111 ແຫ່ງ
- ປີ 2008 ມີຫໍສະແຂວງ 1 ແຫ່ງ ແລະ ຫ້ອງສະໝຸດໂຮງຮຽນ 204 ແຫ່ງ
- ປີ 2009 ມີຫໍສະແຂວງ 1 ແຫ່ງ ແລະ ຫ້ອງສະໝຸດໂຮງຮຽນ 205 ແຫ່ງ
- ປີ 2010 ມີຫໍສະແຂວງ 1 ແຫ່ງ ແລະ ຫ້ອງສະໝຸດໂຮງຮຽນ 164 ແຫ່ງ

## ສະຫຼຸບລວມ:

1. ຫໍສະໝຸດທ້ອງຖິ່ນ 9 ແຫ່ງ ສະເພາະ
   6 ແຫ່ງແມ່ນຂອງອົງການ SVA ຊ່ວຍເຫຼືອ
2. ຫ້ອງສະໝຸດປະຈຳເມືອງ 8 ແຫ່ງ
3. ຫ້ອງສະໝຸດໂຮງຮຽນ 951 ແຫ່ງ
4. ຕູ້ສະໝຸດເຄື່ອນທີ່ 371 ແຫ່ງ

# ກອນລຳທາງສັ້ນ
# (ກອນປາລິບເບື້ອງຕົ້ນ)

ອ່ຳຖ່ຳ  ແກ້ມເຈົ້າ ອ່ຳຖ່ຳ    ແກ້ມຂອງນາງຍາມລ່ຳ ກໍທາກແດງຮຸນໆ
ທຸກສິ້ນສ່ວນສົມບູນ    ໃຫ້ເບິ່ງເອົາເດີທ່ານ...
ແຕ່ວ່າ ຄວນເປັນຄົນຮັກອ່ານ    ຊອກຮູ້ຮ່ຳຮຽນ...
ແລ້ວຮູ້ຂີດຮູ້ຂຽນ    ຈັດພິມຈຳໜ່າຍ ແດ່ເດີເຈົ້າ...
ໂອລະນໍ....    ຜູ້ຟັງເອີຍ! ...
ລະແມ່ນວ່າ... ຟັງເດີເຈົ້າ    ທຸກເຫລົ່າ ຊາວຊົນ
ໝໍລຳເຮົາ ຊິພາທ່ານໄປສົນ    ສົກສາຫາເຫດ
ບໍ່ແມ່ນເລື່ອງນິເວດວິທະຍາການ ເພາະເປັນເລື່ອງວຽກງານການພິມຈຳໜ່າຍ
ວຽກອັນນີ້ ມັນເລີ່ມຕົ້ນແຕ່ງ່າຍ    ໄປຫາສັບສົນ
ແລ້ວກໍຫັນວຽນວົນ    ບົນບັນດາດ້ານ
ຂັດແຍ້ງກັນຫລາຍຍ່ານ    ຕາມເລື່ອງກິດເກນ
ຂະຫຍາຍໂຕໄປເປັນ    ອຸດສາຫະກຳການໃຫຍ່
ມັນບໍ່ແມ່ນເລື່ອງງ່າຍ    ຄືປອກກ້ວຍກິນ
ໃຜບໍ່ເຄີຍໄດ້ຍິນ    ໃຫ້ຟັງເອົາເດີທ່ານ
ການພິມຈຳໜ່າຍມີໂຄງປະກອບຂອບຍ່ານ ສາມດ້ານດ້ວຍກັນ
ຈຶ່ງເປັນສິ່ງສຳຄັນ    ຄຸມເຄືອ ຜູກຂາດ
ສຳພັນກັນຄືເຄືອຍາດ    ຄືກາຍອິນຊີ
ມັນຈຶ່ງຄ່ອຍເກີດມີ    ສິ່ງພິມເດີທ່ານ
ວຽກສາມດ້ານເວົ້າຜ່ານ    ນັ້ນແມ່ນອີຫຍັງ
ເຮົາຄວນຫັນຫູຟັງ    ໝໍລຳຊີ້ແຈ່ງ
ປຽບດັ່ງຄົນມີແຄ່ງ    ມີແຂນ ມີຂາ
ມີຮອດຫູ ຮອດຕາ    ມັນຈຶ່ງສົມສ່ວນ
ຄັນບໍ່ຄົບບໍ່ຖ້ວນ    ຊິຫຍຸ້ງຍາມເດີນ

ຊິເປັນຄືນກະເທີນ ຂາເຢັກຂາແຢ້ງ
ຈັກໜ່ອຍລົ້ມແປ້ງແງ້ງ ໃນແບບທາງາຍໝາ
ກໍຈະເກີດບັນຫາ ເດີ ສັດທາ ຍາທ່ານ...
ອ້າວ... ບັດນີ້, ຊິພາເຂົ້າດ່ານ ສາມດ້ານຄືທີມ
ວຽກທີໜຶ່ງກໍຄືການຈັດພິມກຽມຕົ້ນສະບັບ ຕ້ອງໄດ້ອ່ານໄດ້ນັບກວດແກ້ຮຽບຮຽງ
ມີບັນນາທິການຢູ່ຄຽງ ກວດກາຮອບດ້ານ
ໃຫ້ເໝາະມາດການອ່ານ ດ້ວຍເຫດ ແລະ ຜົນ
ສອດຄ່ອງໝົດທຸກທີ່ນ ການເມືອງ ການບ້ານ
ທັດສະນະຫລັກໝັ້ນ ຈຸດຢືນສອດຄ່ອງ
ໄປຖືກຄອງຄືເພິ່ນເວົ້າ ໄຖຟ້າວກໍບໍ່ຮາມ
ຄັນໄຖກົງກັນຂ້າມ ຊິໄຖຮາມພາດຮ່ອງ
ຊິເປັນກອງຈຸ່ມກຸ່ມໆ ມີງຸ້ມກໍບໍ່ເຖິງ...
ອ້າວ... ການຈັດພິມຢູ່ເວີ້ງໆ ມາເບິ່ງຫຼາຍປະເດັນ
ສຳນັກພິມນັ້ນເປັນ ບ່ອນໂຮມແຮງເຕົ້າ
ບ່ອນພົວພັນເຖິງເຄົ້າ ແກນກະເດົາແຕ້ມແຕ່ງ
ແຫຼ່ງຂີດຂຽນ ຄົ້ນຄວ້າ ສະບັບຕົ້ນຮຽບຮຽງ
ຊື່ຜູ້ຂຽນເວົ້າກ່ຽງ ຕົ້ນສະບັບຈັດພິມ
ມີຮອດທີມບັນນາທິການ ຮັບປະກັນເດີທ່ານ
ຄັນວ່າ ສົມບູນແລ້ວ ກຽມພິມ ກຽມອ່ານ
ເປັນທາງການ ອະນຸຍາດໄດ້ ຂໍຂຶ້ນເລກທະບຽນ
ບໍ່ຊິໃກ້ບ່ອນຜຽນ ນຳໄປສູ່ໂຮງພິມ
ການຈັດພິມ ມັນມີຂອບ ມີຮີມ ດັ່ງຈາມານັ້ນ
ມັນມີຕອນ ມີຂັ້ນ ສຳຄັນເດີທ່ານ
ຄັນບໍ່ເຮັດຮູບນັ້ນ ຊິຄາຄ້າງຂອດປາຍ
ກົດໝາຍມີນຳຄ້ຳ ຕິດຕາມນຳອ່ານ
ກົດໝາຍພິມຈຳໜ່າຍເດີພວກທ່ານ ຢ່າມົວຄ້ານ ອ່ານເອົາ
ອ້າວ... ບັດນີ້ ທັນມາເຂົ້າ ຂອດວຽກທີສອງ

ວຽກການພິມເປັນຂອງ ສຳຄັນອີກດ້ວຍ
ມັນຢາກຄືຊາມ ຖ້ວຍ ບັນຈຸແກງ ກ້ອຍ ຈີ່
ຄັນບໍ່ມີສິ່ງປ້ອນ ຊາມ ຖ້ວຍຊິເປົ່າດາຍ
ສະນັ້ນ, ອາຫານຂອງມັນ ກໍຄືໄດ້ກ່າວໄວ້
ຕົ້ນສະບັບສົມບູນ ມາຈາກສູນສຳນັກພິມ ທີ່ກຽມການແລ້ວ
ມັນກໍເປັນແນວນັ້ນ ການພິມເດີທ່ານ
ຜ່ານໂຮງພິມ ຈຶ່ງຜະລິດອອກໄດ້ ເປັນປຶ້ມໃຫ້ອ່ານດູ
ເອີ... ມັນຍັງໃຫ້ຄວາມຮູ້ ທຸກສ່ວນສັງຄົມ
ມັນໃຫ້ການອົບຮົມ ແກ່ຄົນຫຼາຍດ້ານ
ສ້າງທັດສະນະຫຼັກໝັ້ນ ອຸດົມການເກາະກ່າຍ
ນ່ຽວໃຫ້ຄົນຮອບຮູ້ ປັນຍາເປັ້ງ ປື່ງພູມ
ໃຜບໍ່ມັກເທີ່ຫຸ້ມ ຮັກອ່ານ ຮັກຂຽນ
ກະຊິວິນ ຊິວຽນ ຄືກວຽນດຸມເກົ່າ
ຊິຄືໝາເຫົ່າເຕົ່າ ໂດດເຫົ່າໂຕແລນ
ເພາະບໍ່ເຄີຍໄດ້ແຫງນ ຫຼຽວຫາສັດອື່ນ
ບາດເຫັນແລນ ເລີຍຕື່ນວ່າເຕົ່າຕາມເດີມ
ກໍເລີຍເຫົ່າເຄີ່ມ ງຶງໆຫອນເຫົ່າ
ໄດ້ແຕ່ຄວາມຮູ້ເກົ່າ ບໍ່ມີຍາມຂະຫຍາຍ
ຈຶ່ງຄວນພາກັນໄປ ຫາປັນຍາເພີ່ມ
ຄວນໄດ້ພາກັນເລີ່ມ ເສີມອ່ານໃຫ້ດີ
ໄຄກວ່າພວກຊູຊີ ຫາຊິແຕກແຕ່ເຫລົ້າ
ກິນແລ້ວມີຄຳເວົ້າ ຖຽງກັນໂວ່ເວ່
ແລ້ວກໍໄປມ້າງເພ ຜິດເຂວເດີທ່ານ
ທີ່ຈິງ ຄວນເອົາເງິນ ຊື້ເຫຼົ້າຂອງທ່ານ ຊື້ປຶ້ມອ່ານລອງດູ
ພໍຊິໄດ້ເປັນຄູ ຂອງຄົນທາງອ້ອມ
ໄຄກວ່າຫອມເຫີມຫຸ້ມ ຊຸມແຊວຢົກຈອກ
ຄັນບອກໄປຊື້ປຶ້ມ ວ່າເງິນນັ້ນບໍ່ມີ

ຖ້າເພິ່ນຫວນກ່າວຊີ້ ຊວນດື່ມມຶນເມົາ
ເງິນຢູ່ໃນກະເປົາ ກໍວ່າມີເຫຼືອໃຊ້
ແຖມຍັງຄຸຍໂວໃຫ້ ເງິນ ຄຳ ໃດຊິຍາກ
ຢາກຈະລຶນລວດມື້ ກໍເຊີນໄດ້ດື່ມສະບາຍ
ອ້າວ... ຫັນມາຮອດຂອດຄ້າຍ ວຽກໃຫຍ່ອັນທີສາມ
ມັນຄວນໄດ້ຕິດຕາມ ຊອກຫາເຄືອຂ່າຍ
ວຽກທີສາມນັ້ນຄືການຈຳໜ່າຍ ພວກປຶ້ມ, ສິ່ງພິມ
ຜະລິດອອກມາຈາກໂຮງພິມ ແລ້ວກໍໄປຈຳໜ່າຍ
ມີຫຼາຍຮູບ ຫຼາຍຝ່າຍ ຮຽກຮ້ອງຕ້ອງການ
ຖ້າຜະລິດບໍ່ທັນ ມັນກໍຕ້ອງຮຽກຮ້ອງ
ເລື່ອງລາຄາກໍຕ້ອງ ສອດຄ່ອງກົນໄກ
ແຕ່ບໍ່ຕ້ອງຫວ່ງໃຍ ນຳລາຄາຊື້
ເພາະເຮົາໄດ້ຈຳຈີ່ ເລື່ອງການດັດສົມ
ມັນຂຶ້ນກັບຄ່ານິຍົມ ຂອງການຕະຫລາດ
ຂຶ້ນກັບຄວາມສາມາດ ການຊື້ການຂາຍ
ບໍ່ຢາກເວົ້າຫຍັງຫຼາຍ ຄິດເອົາເດີທ່ານ
ຂອດຈຳໜ່າຍ ກໍຫາກເດີນໄປຜ່ານ ຫລາຍດ່ານຫລາຍທີນ
ຮ້ານຈຳໜ່າຍປຶ້ມບຸກຄົນ ລັດ ຫຼວງ ຕະຫຼາດ
ຂອດຈຳໜ່າຍປະກາດ ແບ່ງອອກເປັນສອງ
ອັນທີໜຶ່ງ ການຈຳໜ່າຍ ເປັນການແຈກຢາຍລ້າໆ
ອັນທີສອງ ເພິ່ນວ່າ ພິມຂາຍເອົາເງິນ
ໃຜຊິຊື້ກໍເຊີນ ໄປຕິດໄປຕໍ່
ອ້າວ... ຍັງມີພວກຕັ້ງກໍ່ ຂອດບໍລິການ
ພິມແບບທຳມະທານ ສັດທາແຈກຈ່າຍ
ການສົ່ງເສີມການອ່ານກໍໃຫຍ່ ຫຼາຍຖິ່ນສະຖານ
ຫໍສະໝຸດເປັນເຈົ້າການ ເຊີນໄປຄົ້ນຄວ້າ
ໄດ້ຄວາມຮູ້ດີກວ່າ ຫາຊອກມຶນເມົາ

ມັນຊິເກີດມີເຫົາ ໃນຫົວເດີ້ທ່ານ
ຂອດຈຳໜ່າຍເວົ້າຜ່ານ ມີ 2 ຮູບການ
ນັ້ນຄືການອຸທານ ເວົ້າກັນວິງແຄບ
ຄັນຊິເວົ້າເລິກແລບ ມັນມີ 5 ບັນຫາ

ນັ້ນກໍຄື: 1. ການນຳອອກຂາຍ
2. ການໃຫ້ເຊົ່າ, ໃຫ້ຢືມ ແລະ ແຈກຢາຍ
3. ການວາງສະແດງ
4. ການຈຳໜ່າຍຜ່ານອິນເຕີເນັດ
5. ການສົ່ງອອກ ແລະ ນຳເຂົ້າ (ຕ່າງປະເທດ)

ນີ້ແມ່ນເລື່ອງຂົງເຂດ ຈຳໜ່າຍສິ່ງພິມ
ມັນມີຂອບມີຮີມ ກົດໝາຍບອກກ່າວ
ບໍ່ແມ່ນເລື່ອງກະທ່າວ ເຮັດໄປຊະຊາຍ
ຜູ້ຈຳໜ່າຍຕ້ອງໄດ້ຕັດສິນໃຈ ເບິ່ງໃຫ້ຄົບຖ້ວນ
ເນື້ອໃນປື້ມມີສ່ວນ ຜິດ ຖືກ ຫຼື ໃດ
ສຳນັກພິມຂອງໃຜ ບັນນາທິການມີບໍ?
ຄະນະຈັດທຳລະບຸຕໍ່ ທັງເລກທະບຽນ
ຊື່ຜູ້ຂີດຜູ້ຂຽນ ມັນຈຶ່ງຖືກຕ້ອງ
ມີແນວນີ້ຈຶ່ງຄ່ອງ ໃນໝວດກົດໝາຍ
ມັນກໍຈຶ່ງສະບາຍ ໃຫ້ຟັງເອົາເດີທ່ານ
ອ້າວ... ຄັນວ່າປື້ມຍັງບໍ່ຜ່ານ ຕາມບັນຍາຍມາ
ມັນຈະມີບັນຫາ ເດີບັນດາເພື່ອນໆ
ເພາະຊິເປັນປື້ມເຖື່ອນ ລັກພິມປອມແປງ
ອາດມີສິ່ງແອບແຝງ ແບບລັບໆລີ້ໆ
ອາດມີແນວຮີບຮີ່ ລາມົກຈົກຂອງ
ຫຼື ລອກແບບຈຳລອງ ລິຂະສິດຄົນອື່ນ
ເຮົາຄວນພາກັນຕື່ນ ຕາມຂອບກົດໝາຍ
ຈຶ່ງຈຳໜ່າຍສະບາຍ ຟັງເອົາເດີທ່ານ

ອ້າວ... ວຽກສາມດ້ານເວົ້າຜ່ານ ມັນພົວພັນກັນ
ພິມຈຳໜ່າຍຈຶ່ງມະທັນ ເພາະມີສາມດ້ານ
ອຸດສາຫະກຳການນີ້ ມີການຂະຫຍາຍຕໍ່
ໃຫ້ພໍ່ແມ່ພີ່ນ້ອງ ຈຳໄວ້ຢ່າລືມ...
ເອີ່... ການຈຳໜ່າຍກ່າວລື້ມ ພິແຜ່ໄປໄກ
ຮອດຕ່າງແດນ ແລະ ພາຍໃນ ສິ່ງໄປຂາຍຄ້າ
ເປັນສັງຫານຳໃຫ້ ອາຫານຄືນອ່ານ
ການຄຸ້ມຄອງຂອດນີ້, ນິຕິກຳກ່າວໄວ້ ໄປຕັ້ງອ່ານດູ
ບໍ່ດັ່ງນັ້ນ ຊິບໍ່ຮູ້ ໄປສູ່ງົມກະໂທງ
ມັນຊິເປັນງຶງໆ ດັ່ງເຮືອບໍ່ຖືທ້າຍ
ເອົາແຕ່ພາຍໄປໜ້າ ມົວຕາຕຳຝັ່ງ
ມັນຊິເປັນເຫຼືອງຫຼ້າງ ໄຫຼຄ້າງໝູ່ຄອນ
ອ້າວ... ຄັນບໍ່ຮີບບໍ່ຮ້ອນ ນຳແນນຳນ່ຽວ
ຊິເປັນໄມ້ຕອກສ້ຽວ ລັງລ້ຽວໃສ່ມື
ເພື່ອປົກປ້ອງຜູ້ຊື້ ທັງຊື່ຜູ້ນຳຂາຍ
ຕ້ອງມີສາຍໂຍນຊັກ ທ່ວງທາວໃຫ້ມັນນິ້ມ
ສຳນັກພິມ, ການພິມ ແລະ ການຈຳໜ່າຍ ຕ້ອງປົກປ້ອງຄືກັນດ້ານດັ່ງ
ກົດໝາຍພິມຈຳໜ່າຍຈຶ່ງສ້າງ ນຳອ້າງອ່ານດູ
ເພື່ອປົກປ້ອງ ແລະ ຊຸກຍູ້ ໃຫ້ເຂົ້າສູ່ຕາມສິດ
ໃຜກະທຳຄວາມຜິດ ກໍວ່າໄປຕາມເລື່ອງ
ມີເຄື່ອງມື ມາດຕາຂໍ້ ກົດໝາຍເຕື້ອງຕໍ່
ມັນຈຶ່ງບໍ່ຂີ້ສີ້ ຫາຂໍ້ໃສ່ກັນ...
ອ້າວ... ໝໍລຳເວົ້າດັ່ງນັ້ນ ກໍແຈ້ງຈານປານດາວ
ຢ່າໄດ້ຂີ້ສະຫາວ ເບິ່ງດູດາຍລ້າ
ມັນຊິພາເຮົາຫຍຸ້ງ ລຸງລັງຄືຮາກໄຜ່
ໃຫ້ຊາບຊຶມເດີພວກເຈົ້າ ໝໍລຳເວົ້າໃຫ້ຈື່ເອົາ...ເດີນາຍ
ສິນານວນ ຊິຂໍມ້ວນໄວ້ກ່ອນ... ທໍ່ນີ້ນາ!

# ກອນລຳທາງສັ້ນ ປະກອບພາບ
## ( ທຳນອງລຳ ແບບໄຄສະນາ )

## ຫວນຄືນ 60ປີ ມູນເຊື້ອການພິມຈຳໜ່າຍ
## ( 13/08/1950 - 13/08/2010 )

ໂອ່... ລະນໍ... ນວນເອີຍ...

ອ້າວ... ຈັ່ງວ່າຟັງເຈົ້າຟັງ ບຸບຜັງ ດອກໃໝ່
ເລື້ອງການພິມຈຳໜ່າຍ ເລີ່ມແຕ່ງ່າຍ ໄປຫາໃສ
ທົກສິບປີ ຂີບັນຍາຍ ໃຫ້ເຈົ້າຫວນຄືນເບິ່ງ... ແນ່ເດີ...ເຈົ້າ...

ລະແມ່ນວ່າ... ເດີນາຍ...

ຟັງເອົາທ້ອນ ລຳກອນເກາະກ່າຍ
ບັນຍາຍວ່າເວົ້າ ເນີເຈົ້າ ໃຫ້ໃສ່ໃຈ
ຫູທັນມາ ໃກ້ໆ ຢ່າຟ້າວ ພ່າຍຫາຍໜີ
ເອົາຄະຕິ ການພິມ ວ່າກັນ ສັນສ້າງ
ມີເຫດຜົນ ນຳອ້າງ ຄາວຫຼັງ ພົ້ນຜ່ານ
ທົກສິບປີ ມາຫວນຄືນແຕ່ລະດ້ານ ການພິມນັ້ນຜ່ານມາ
ພິມຈຳໜ່າຍ ວ່າໄວ້ ໃນແຫຼ່ງການກິດ
ສາທິດ ຄືນ ທົກສິບປີ ເປັນເຄົ້າ
ເອົາແຕ່ຄາວໂຮມເຕົ້າ ຕອນຍັງ ກູ້ຊາດ
ສິງຄາມ ລະບາດຂຶ້ນ ຜົນປີ້ນ ປ່ຽນແປ
ຈັກກະພັດໃຫຍ່ແຍ້ ຍຸແຍ່ ຄົນລາວ
ເອົາພວກຫຸ່ນ ວຽງຈັນ ຈູໂຈມເໜືອໃຕ້
ພວກມັນ ມີໃບໃພ້ ກິນລວງ ເລ້ລ່ຽມ

ກຽມບຽດຢຶດ ແລ້ວເຂົ້າ ລາວນີ້ ຄອບຄອງ
ເປັນແນວນັ້ນແຫຼະ ພີ່ນ້ອງ ລາວຈຶ່ງຕ່ອຍຕີຣົບ
ເພື່ອເອົາຄວາມສະຫງົບ ຕ່າວຄືນມາບ້ານ
ເພື່ອຄົນລາວ ເຮົານັ້ນ ມີຄວາມເປັນເອກະລາດ
ຊາດເຜົ່າຊົນ ທຸກຊັ້ນ ຈຶ່ງນຳຕ້ານຕ່ອຍມານ...

ເອີ່... ເພື່ອໃຫ້ ປະເທດບ້ານ ບານເບີກເບີຍຈິດ
ມີສິດເປັນເຈົ້າຂອງ ປົກຄອງເມືອງບ້ານ
ຫານເລວສູ້ ຕີສັດຕູ ບໍ່ຢ້ານຍ່ອນ
ປະເທດຊາດ ເດືອດຮ້ອນ ເໜືອໃຕ້ ຊາລີ
ຈົນວ່າ ທຸກໆມື້ ໄດ້ຍິນແຕ່ສຽງປືນ
ບໍ່ຈັກຄືນ ຈັກວັນ ສັ່ນສະເທືອນ ບັ້ນກ້ອງ
ຍິນ ບີຫ້າສິບສອງ ຫຽວຖິ້ມ ເທໂບມ ລະເບີດຫວ່ານ
ຈົນວ່າ ແຕ່ລະບ້ານ ເຮືອນຮ້ານ ມຸ່ນທະລາຍ...
ອ້າວ... ສົງຄາມກ້າວ ຂຶ້ນຂັ້ນ ມະຫັນໃຫຍ່ ໄຟແຮງ
ເກືອຍ່ອມແພງຄວາມເຄັມ ໄວ້ເຕັມຕາມນ່ຽວ
ກຽວມັນທັນ ຢຶດນ່ຽວ ໜຽວແໜ້ນ ເຄັ່ງແຂງ
ຄົນລາວເຮົາ ເອົາຮອດເລືອດສີແດງ ທາດິນ ສະລະຊີບ
ເປັນຫຼັກໂຄນ ຄົງໝັ້ນ ແນບຮົ້ວ ຮັດຮັ້ນ
ນັ້ນແມ່ນ ຄວາມມະຫັນ ຄົນລາວຮັກຊາດ
ເລືອດນັກຮົບ ອົງອາດ ໄຟແຄ້ນ ແຮງສູງ
ພວກແມ່ປ້າ ພໍ່ລຸງ ຝັງເອົາໄວ້ແນ່ນໆ...
ພັກນຳພາ ເຫັນແງ່ ຂອດໂຄສະນາ
ເພິ່ນຈຶ່ງ ເຫັນບັນຫາ ປຸກລະດົມເປີດປ່າວ
ໃຊ້ສິ່ງພິມ ອອກຂ່າວ ມີຄວາມຈຳເປັນ
ເພາະມັນມີປະເດັນ ອັນໃດ ຜິດຖືກ
ບໍ່ແມ່ນຢູ່ ຄືກືກ ງຽບໆ ເຫງົາໆ

ເປີດໜ້າກາກ ຂອງເຂົາ ວິຈານ ຜ່ານສື່...
ໃຫ້ມັນໄດ້ ຫຼາບຈື່ ພວກມັກຮຸກຮານ
ຄົນລາວເຮົາ ອາດຫານ ລຸກຂຶ້ນຕໍ່ສູ້
ພ້ອມເຜົ່າພັນ ທຸກໝູ່ ຕ້ອງຕື່ນ ຕົວສູງ
ທັງມີການບຳລຸງ ຍົກສູງ ສະຕິຊາດ
ໃຫ້ມີຄວາມ ອົງອາດ ສູ້ຮົບ ຂັນແຂງ
ດ້ານຈິດໃຈ ແຂງແຮງ ຄືເພັດ ເດັດດ່ຽວ
ມີຫຼັກໝັ້ນ ຍຶດໝັ່ນງວ ຄຸນທາດ ການເມືອງ
ພິມຈຳໜ່າຍ ຈຶ່ງກາຍເປັນເຄື່ອງມື ສຳຄັນຂອງພັກ
ມັນຕິດພັນ ເປັນຫຼັກ ມາຕັ້ງ ຍາວນານ
ຫົກສິບປີ ກ່າວຂານ ກັບການ ສູ້ຕ່ອຍ
ການພິມມີ ບົດບາດບໍ່ຄ່ອຍ ກັບການ ປະຕິວັດ
ມັນຕິດພັນພັກລັດ ຕະຫຼອດ ຍາວນານ
ອ້າວ... ມັນເປັນສິ່ງສຳຄັນ ແນບນຽນ ຊ້ອນບິ່ມ
ປຸກລະດົມໂອບອ້ອມ ຄວາມຮູ້ ສູ່ຄົນ
ຍົກລະດັບ ໃຫ້ພົ້ນ ທັງຫຼອມຫຼໍ່ ຝຶກຝົນ
ມີລະດັບ ທຸກຄົນ ຕື່ມເຕີມ ຄວາມຮູ້
ດູເລີກແລ້ວ ຫຼາຍແນວເນີທ່ານ
ພິມຈຳໜ່າຍ ຍັງເປັນການຕໍ່ສູ້ ຊຶ່ນຊັ້ນ ດັ່ງກັນ....
ບອກຄຸນທາດ ຫຼັກໝັ້ນ ບໍ່ໃຫ້ທ່ານເຫຼະຫຼີມ
ມີອຸດົມການ ສັງຄົມນິຍົມ ຂີດໝາຍພາຍໜ້າ
ມັນຊິພາເຮົາກ້າວ ໄປໄກຫຼາຍຍ່ານ
ພວກຫຼານເຫຼັ້ນລຸ້ນນ້ອຍ ຟັງຂ້ອຍ ໃຫ້ຈື່ເອົາໆ.....

ອ້າວ... ບາດນີ້...
ຫັນເຂົ້າມາ ໃນເລື່ອງ ປະຕິວັດ
ຄາວເມື່ອຈັກກະພັດ ຮຸກຮານ ລາວນັ້ນ

ພັກໄດ້ ຜັນຂະຫຍາຍກວ້າງ ແນວໂຮມກູ້ຊາດ
ປະກາດແຈ້ງ ໃຫ້ແຂງເຂັ້ມ ເຄື່ອນແຮງ
ຕີສັດຕູ ໝູ່ແຫຼ່ງ ຂອງພວກຈັກກະພັດ
ພັກລັດເຮົາ ມອງເຫັນ ເລື່ອງປະເດັນ ເດີນໄດ້
ຈຶ່ງຕ້ອງຫັນໄປເວົ້າ ໂຄສະນາ ມະຫັນໃຫຍ່
ພິມຈຳໜ່າຍ ຈຶ່ງໄດ້ ດາຫ້າງ ຕ່າງຕຽມ
ກຽມຈັດຕັ້ງ ໂຮງພິມ ຂຶ້ນໃໝ່
ໂຮງພິມລາວອິດສະລະວ່າໄວ້ ເນີທ້ານ ທ່ານຜູ້ຟັງ...
ວັນທີ 13 ສິງຫາປີ 1950 ປະກາດຕັ້ງ ວາງເປີດທາງການ
ຢູ່ທີ່ແຂວງ ຫົວພັນ ເປີດປະຖົມໂຮມເຕົ້າ
ຈັດຕັ້ງແນວລາວ ອິດສະລະຂຶ້ນ ວັນດຽວດ້ານດັ່ງ
ຈັດຕັ້ງລັດຖະບານລາວຕໍ່ຕ້ານ ກໍວັນນັ້ນ ດັ່ງກັນ...
ອ້າວ... ໂຮງພິມ ຈາກ່າວນັ້ນ ເປັນທາງການຄັ້ງແຮກ
ບໍ່ພໍຄາວ ເຄີກນີ້ ກໍເລີຍເລັ້ງ ເລື່ອງພິມ
ເຖິງວ່າ ຍັງບໍ່ນິ້ມ ກໍຈັດແຈ່ງ ໄວວາ
ໂຮງພິມ ລາວອິດສະລະ ປະກາດໃນຕອນເຊົ້າ
ສາມໂມງແລງ ເຖິງເທົ້າພິມ ໜັງສືພິມລາວອິດສະລະສະບັບແຮກ
ເພື່ອແຈກຢາຍດ່ວນດັ້ນ ໃຫ້ມັນໄດ້ທ່ວງທັນ
ຈຶ່ງລະດົມກັນເຂົ້າ ຈັດພິມເນີທ່ານ
ເພື່ອແຈກກັນໃຫ້ໄດ້ ແນວໜ້າ ເຫຼົ່າທະຫານ
ນອກຈາກນັ້ນ ກໍແຈກທ່ານຜູ້ນຳເຮົາ
ເອົາໄປຢາຍ ຄະນະລັດຖະບານ ອ່ານດູຫຼາຍຂັ້ນ
ສຳຄັນດ້ວຍ ຖະແຫຼງການເນີທ່ານ
ພິມພາລະບົດບາດລັດຖະບານຕໍ່ຕ້ານ ຄາວນັ້ນອ່ານດູ
ສິ່ງຄວນຮູ້ ບົດບາດຖັນແຖວ
ຂອງແນວລາວອິດສະລະ ລະບອບການຂານຂໍ້
ໝໍລຳ ຂໍໂຄເວົ້າ ການພິມຕັ້ງໃໝ່

ມັນງ່າຍດາຍເນີພວກເຈົ້າ ຄາວນັ້ນ ແມ່ພິມ
ຫັນມາເວົ້າ ບ່ອນນີ້ມໆ ໂຮງພິມເຮົາ ຕັ້ງໃໝ່
ອາຄານເຮັດ ດ້ວຍໄມ້ ໃບຄໍ້ ຕໍ່ມຸງ
ມັນຈຶ່ງເປັນອຸ້ງປຸ້ງ ຄືອຸງອຸໄທ
ເອົາໄມ້ ພຸງພາງເປີ ປາດແປສານແອ້ມ
ຫຼັງຄາ ແນມແນຂື້ນ ຊີງລາວ ເຮືອນໄມ້ໃຜ່
ທາງໃນ ມັນອ່າວກ້ວາງ ພິມໄດ້ ດັ່ງໃຈ
ຄັນແມ່ນ ອະນຸລັກໄວ້ ໃຜເຫັນຊິໂອ້ອ່າວ
ໂຮງພິມລາວ ຄັ້ງນັ້ນ ຖານຕັ້ງ ຢູ່ໄພ
ເຄື່ອງຈັກພິມ ຫ້າງໄວ້ ພິມງ່າຍ ປະຖົມປະຖານ
ບໍ່ມີຄົນ ຈັດການ ດັ່ງປັດຈຸບັນນີ້
ທ່ານສີທາເພັງແພງມືອງນຳຊີ້ ອຳນວຍການຄັ້ງແຮກ
ມີທ່ານສິງຫອມສິມບັດ ແລະ ຄຳພັນຢູ່ດ້ວຍ ຄາວນັ້ນປະກອບທີມ
ສີພິມ ທົວຂີ້ໝິ້ນ ຮໍຮຸນ ໃຫ້ເຫຼືອງອ່ອນ
ມີໝາກມອນ ແກ່ນມີ້ ຝາງຕົ້ມ ແຕ່ງສີ
ໝາກຊາຕີ ກໍໃຊ້ ລະບາຍກັນເຈືອຈານ
ມາບົດຜານຕໍ່ຕົ້ມ ໃຫ້ພໍໃຊ້ ຢ່າງດີ
ສີບໍ່ໃສ ຄືຄາວນີ້ ກໍແສນດີ ສົມຄູ່
ມັນບໍ່ຄື ສູ່ມື້ ສະໄໝນັ້ນ ຕ່າງກັນ
ແຕ່ມັນກໍໃຊ້ໄດ້ ຍາມພິມໄປອ່ານ
ເຈ້ຍບໍ່ສາ ພິມຄັ້ງນັ້ນ ຊາວບ້ານຊອຍຫາ
ເລື່ອງແມ່ພິມ ວ່ານັ້ນ ຖ້ານແຖ່ນ ບໍ່ຫຼວງຫຼາຍ
ຄວັດໃສ່ ຫີນລິໂຕ ແຕ່ພຽງ 3 ກ້ອນ
ກຳມະກອນ 12 ທ່ານ ຫັນມັງ ດຸໝັ່ນ
ປະສານງານ ແຕ່ລະມື້ ເດີນໄດ້ຢ່າງດີ
ພິມຕີໂປ ສະໄໝນັ້ນ ຄັ້ງຜ່ານບໍ່ທັນຝັນ
ເອົາແຜ່ນຫີນ ປະຊັນ ເປັນແມ່ພິມ ເນີເຈົ້າ.....

ອ້າວ... ຄັນວ່າເທິງ ນານເຂົ້າ ຫຼາຍປີ ຂະຫຍາຍຕໍ່
ຍໍເອົາຫີນ 8 ກ້ອນ ມາຊ້ອນ ແມ່ພິມ
ຫີນລີໂຕ້ ເປັນແຫຼ່ງຫຼົ້ມ ພິມຕື່ມ ເຫຼືອຫຼາຍ
ຂະຫຍາຍ ກິງການພິມ ແຈກຢາຍຫຼາຍດ້ານ
ທ່ານ ສີຫາ ເພັງແພງເມືອງຄາວນັ້ນ ອຳນວຍການຈັດແຈ່ງ
ເພິ່ນໄດ້ດາ ແຕ່ງທ້າງ ຈັດຕັ້ງຕື່ມພິມ
ຫີມງານ ຈັດແຈ່ງໄວ້ ຄາດໃສ່ ບຸກຄົນ
ຜູ້ຊື້ນຳ ເທິງບົນ ລະບອບການສາຍຕັ້ງ
ກະຊວງສຶກສາ ດາໜັງ ຄາວປາງ ຕັ້ງໃໝ່
ມີທ່ານ ສຸກ ວົງສັກ ເປັນລັດຖະມົນຕີກ່າວໄວ້ ຄາວນັ້ນຜ່ານມາ
ການຈັດພິມວ່ານີ້ ໄດ້ເສີມຕໍ່ ເຕີມຕາມ
ເພິ່ນຈັດທຳ ໃບປີວ ໄປຫວ່ານລົງ ຂົງຄ້າຍ
ປຸກລະດົມໃຫ້ ພວກວຽງຈັນ ທະຫານຫຸ່ນ
ເພື່ອໃຫ້ເຂົາຊຸ້ນຊ້ຽວ ມາເຂົ້າຝ່າຍແນວ
ເຂົ້າຖັນແຖວ ອ້າຍນ້ອງ ອິດສະລະແນວລາວ
ລະດົມຊາວປະຊາຊົນ ໃຫ້ຕື່ນຕົວ ລຸກຕ້ານ
ໃຫ້ຮັກສາທີ່ໝັ້ນ ພູມຖານເຂດປົດປ່ອຍ
ບຸກຕ່ອຍຕີ ຄືບໜ້າ ທະຫຼຸກວ້າງ ລ່ວງໄກ...
ອ້າວ... ໃບປີວຈາກ່າວໄວ້ ໃນທ່າບັນຖັດຖານ
ໄດ້ປຽບ ພວກຮຸກຮານ ທະຫານ ເລວຮັບຈ້າງ
ຫວ່ານສິ່ງພິມຕ່າງໆ ເຜີຍແຜ່ ໄປໄກ
ປະກອບສ່ວນ ເຂົ້າໃສ່ ໃນສື່ສຳພັນ
ມັນຈຶ່ງຮັບປະກັນ ວິຈານຂານນຳ
ທັງບຸກຕີກະນ່ຳ ໂຄແຫກໂກນຫູ
ພິມໃຫ້ ໄດ້ອ່ານດູ ເປີດລາຍຂາຍໜ້າ
ມັນຍິວະ ຄົນລາວຂ້າ ກັນເອງ ບຸກບັ່ນ
ເຮົາຈຶ່ງ ລຸກຕໍ່ຕ້ານ ນານລ້ຳ ລ່ວງສະໄໝ...

ທັນມາສູ້ ບ່ອນໃກ້ ພິມຈຳໜ່າຍ ຈາເສີມ
ເລີ່ມຢູ່ແຂວງຫົວພັນ ຖິ່ນຖານ ຄາວນັ້ນ
ຕໍ່ມາ ທັນພິມປື້ມ ຫຼັກການຮຽນຮໍ່າ
ເຂດປົດປ່ອຍ ແກ່ວກ້ຳ ໄດ້ຮຽນຮູ້ ຄູ່ມື
ປື້ມນີ້ ບໍ່ໄດ້ຊື້ ພິມແຈກຢາຍຟີ
ເປັນຫຼັກການ ຮຽນດີ ຕໍ່ໂຮງຮຽນຕັ້ງ
ພິມແຈກຢາຍ ຫຼາຍຄັ້ງ ໃຫ້ພໍພຽງທຸກທີ່
ວັນນະຄະດີ ປະກອບໃຫ້ ເຮົາໄດ້ອ່ານດູ...ໆ
ພຶດສະຄະນິດ ຮຽນຮູ້ ຫຼັກໝູ່ໄວຍາກອນ
ເພື່ອໃຫ້ເປັນ ທຶນຮອນ ສິກສາຫາຮູ້
ມີຄູ່ມື ຫຼາຍເຫຼັ້ມ ລົງພິມ ກ່ອນປົດປ່ອຍ
ຂໍຄືນລາວ ໃຫຍ່ນ້ອຍ ຈຳໄວ້ຢ່າຊິລືມ ເດີນາຍ...

X X X X X

ອ້າວ... ລະແມ່ນວ່າ... ເດີນາຍ...
ພິມຈຳໜ່າຍນີ້ໄດ້ ເຕີບໃຫຍ່ຂະຫຍາຍໂຕ
ມັນບໍ່ແມ່ນ ຊິໂງ ໂງ້ງຄືນບ່ອນເກົ່າ
ບໍ່ຄືອື່ງເພົ້າຕ່າວ ກິນເມົາ ແນວດຽວ
ກິນອີ່ມແລ້ວ ພັດຫຽວ ເຂົ້າຮູ ຄືເກົ່າ
ຮອດເດືອນຫົກ ກັບຕ່າວ ກິນເມົາ ຕາມເຄີຍ
ພວກແມ່ປ້າ ລຸງເອີຍ ຟັງເຮົາຊິເຫຼົ່າ
ກິດເກນນັ້ນ ຕ່າງເກົ່າ ກ້າວໃໝ່ ຂະຫຍາຍ
ໄປສູ່ທັນ ສະໄໝ ປ່ຽນໄປ ເທື່ອລະກ້າວ
ວັດຖຸທາດ ບໍ່ຢູ່ເກົ່າ ປ່ຽນໃໝ່ ຂະຫຍາຍໂຕ
ການປະຕິວັດເຮົາໂຄ ກໍກ້າວໃຫຍ່ຂຶ້ນໜ້າ
ການກູ້ຊາດ ມາດຄ່າ ລ້ຳໜ້າໄປໄກ

ໂຮງພິມລາວ ທັນສະໄໝ ໄປຕາມທ່ວງທ່າ
ຄາວນັ້ນ ທະຫານຫວຽດນາມຕຽມທ່າ ກັບຄືນເມືອງຕົນ
ມີສັນຍາສາກົນ ບອກໃຫ້ກັບຕ່າວ
ເພິ່ນກໍເລີຍ ໄດ້ປ່າວ ປະກາດເຫດຜົນ
ແລ້ວກໍມອບ ຈັກກົນ ການພິມໃຫ້ຕໍ່
ພິມຕີໂປ ເດີພໍ່ ຈັກທັນສະໄໝ
ມອບໜຶ່ງ ເຄື່ອງເລີຍໄຄ ພິມດີ ກວ່າເກົ່າ
ຈັກຕີໂປ ເຮົາກ່າວ ໃຊ້ຕີນ ຢຽບເອົາ
ຫຼືວ່າໃຊ້ ຄົນເຮົາ ຊັກດຶງ ຈຶ່ງແລ່ນ....
ກຳມະກອນກໍແມ່ນ ແລ່ນຂຶ້ນ ທົບສອງ
ສິບຫ້າຄົນ ທັງຜອງ ໜ່ວຍງານແບ່ງແປດ
ຫີນລີໂຕ ສີແສດ ສິບກ້ອນ ເພີ່ມເຕີມ
ເລື່ອງສິ່ງພິມ ກໍ່ເສີມ ປາລິມານ ມາກລື່ນ
ຜະລິດສິ່ງພິມອື່ນ ໄດ້ຕັ້ງຫຼວງຫຼາຍ
ບໍ່ຢາກ ບັນລະຍາຍ ມັນຊິຍາວຍືດ
ປີດພຸ່ມໄມ້ ຄວາມເວົ້າ ແຫ່ງຫຼາຍ...ໆ

ອ້າວ... ເລື່ອງຈັກພິມວ່າໄວ້ ຈົ່ນໃຫ້ຊ່ວຍສະໝອງຊູ... ຕື່ມແລ້ວ
ມອບໜຶ່ງເຄື່ອງໃຫ້ຟື້ນຟູ ຈັກພິມເນີເຈົ້າ
ເຮົາຈຶ່ງທັນມາເຂົ້າ ຕີໂປຈັກໃໝ່
ການເກັບລຽງເພິ່ນໃຊ້ ໄຄຂຶ້ນກວ່າເດີມ
ໂຕໜັງສື ລິເລີ່ມ ຫຼໍ່ແຜ່ນໂລຫະ
ຕ້ອງສະລະ ເຮື່ອແຮງ ເພີ່ມຄົນ ຄູນຂຶ້ນ
ລັດລິງທຶນມາໃຫ້ ຕາມແຜນຊື້ຊອງ
ກຳນົດການ ຖືກຕ້ອງ ຄອງຄຸ້ມ ຢ່າງດີ.......
ເອີ່... ມາເຖິງ ຂີງເຂດນີ້ ບາດກ້າວໃໝ່ໃສງາມ
ວັນທີ 6 ເດືອນໜຶ່ງປີ 1956 ເຕີມຕາມ ໃສງາມບັ້ນໃໝ່

ເພິ່ນເປີດ ກອງປະຊຸມໃຫຍ່ ແນວລາວອິດສະລະ
ເປີດຂຶ້ນ ໃນໄລຍະ ປະຕິວັດເປີດກ້ວາງ
ແຂວງຫົວພັນ ຄ້າຍຄ່ວາງ ຈັດເປີດປະຊຸມ
ຕອນນີ້ ພັກໄດ້ສຸມ ຕັດສິນຊີ້ຂາດ
ລາວອິດສະລະປະກາດ ປ່ຽນຊື່ໄວທັນ
ເປັນແນວລາວຮັກຊາດ ທັນການ ປະກາດອອກສິ່ງ
ໂຮງພິມລາວອິດສະລະ ກໍບິ່ງ ເປີດປ່ຽນ ກິ່ງທັນ
ເພື່ອໃຫ້ມັນໄດ້ທັນ ຍາມການປະກາດ
ເລີຍປ່ຽນຊື່ ໃຫ້ຂາດ ລາວຮັກຊາດ ໂຮງພິມ
ສ່ວນວ່າໜັງສືພິມ ກໍປ່ຽນຊື່ແນວໃໝ່
ລາວຮັກຊາດ ເນີພໍ່ໃຫ່ຍ ຊື່ໃໝ່ ຕາມມາ
ພວກພີ່ນ້ອງ ອາວອາ ຈົດຈຳໄວ້ແນ່
ເປັນມູນເຊື້ອ ເດີ້ແມ່ ຄາວນັ້ນ ການຫຼັງ
ຕ້ອງຮັກສາ ມູນມັງ ຈີນເຊັ່ນຫຼານລູກ
ເຮົາຄວນພາກັນປູກ ຈິດສຳນຶກ ໃນໃຈ
ຍາມປະເທດກ້າວໄກ ຢ່າໄດ້ລືມ ເນີທ່ານ
ຫົກສິບປີພົ້ນຜ່ານ ໄປແລ້ວຫຼາຍປີ
ແຕ່ກໍຈຳໃຫ້ດີ ມັນມີຄຸນຄ່າ
ເປັນປັດໄຈໃຫ້ທ່າ ບຸກໜ້າບືນຕົວ
ມັນຈຶ່ງບໍ່ເມົາມົວ ຂີ້ຄ້ານ ມັກງ່າຍໆ...
ບັນຍາຍຮອດນີ້ ຊິມີ ເລື່ອງຕໍ່ໄປ
ອ້າວ... ນັບແຕ່ປ່ຽນເຕືອຄ່າຍ ຊື່ໃໝ່ການພິມ
ການເຮັດວຽກເປັນທີມ ມີຄວາມກ້າວໃໝ່
ໄດ້ 1 ປີ ລຽງໄລ່ ຖືກມາດຕະຖານ
ຍັງບໍ່ພໍເທີ່ງນານ ໜຶ່ງປີເສດໆ
ຮອດ 1957 ມາເຂົ້າພໍດີ ມັນກໍ່ເລີຍເກີດມີ ລວມລາວຄັ້ງທີໜຶ່ງ
ງິດສຽງປືນ ຕຶ່ງຕຶ່ງ ຫາທາງເຂົ້າຮ່ວມກັນ.......

ປອງດອງຊາດ ວ່າຊັ້ນ
ຢູ່ໂຮງພິມ ກຽມເອົາ
ຫາຫີນທາງ ເດີນເຂົ້າ
ຈັກພິມ ກຽມຮັບໃຊ້
ໂຮງພິມ ຖືກຕັ້ງໄວ້
ໃຜກໍເຄີຍໄດ້ຍິນ
ມີສອງຊັ້ນ ເພີ່ນກ່າວ
ກຳມະກອນເປັນທີມ
ຕ້ອງເຄື່ອນໄຫວ ແບບໃໝ່
ແມ່ປ້າເຫງົ້າ ເພີ່ນເອົາ
ແມ່ປ້າເຫງົ້າ ເພີ່ນຊ່າງ
ຈີນເອົາເຮືອນໃຫ້ເຊົ່າ
ໂຮງພິມ ຖືກຂົ່ມຂູ່
ຫາວ່າກ່າວ ວິຈານ
ຫາວ່າໄປວິພາກ
ຫາວ່າກ່າວ ໂຈມຕີ
ເຂົາວ່າ ຂ້າວລື່ນຂີ່
ເຂົາຊອກເລື່ອງ ໃຫ້ຍິນ
ແລ້ວກໍມາກ່າວຕູ່
ເລີຍເກີດເລື່ອງເກີດລາວ
ປີ1959 ເລີຍຍິ່ງ
ໂຮງພິມ ເລີຍຢຸດໄປ
ສິບຫົກເດືອນ ເດີໝູ່
ຕຳຫຼວດຫຸ່ນ ເຂົາທັນ
ເຂົາມາຕີ ວົງອ້ອມ
ແລ້ວກໍ ລົງລາຍເຕືອນ
ຄັນພິມຕໍ່ ເຂົາຊິລູ່

ທັນຮ່ອມ ລວມລາວ
ສິບເຈັດຄົນ ໄປເຕົ້າ
ວຽງຈັນບັ້ນໃໝ່
ດາຫ້າງ ແກ່ໄປ.......
ໃນເຂດຂົວດິນ
ເຮືອນແຖວເກົ່າໆ
ບ່ອນຕັ້ງໂຮງພິມ
ກະກຽມຮັບໃຊ້
ສະໄໝເມື່ອ ລວມລາວ
ເຮືອນທໍ ໃຫ້ຕັ້ງ
ຮັກທໍ່ ແນວລາວ
ຈັດສັນປັນຢູ່
ຈາກພວກຫຸ່ນວຽງຈັນ
ເປີດເຜີຍໜ້າກາກ
ໃສ່ຮ້າຍ ປ້າຍສີ
ຝ່າຍເຂົາ ຜ່ານສື່
ຢື້ຂ້າມ ຕາມປືນ
ກ່າວຫາ ຂົ່ມຂູ່
ນາບຂູ່ໃຫ້ເຊົາ
ຫຼາຍອັນພັນສິ່ງ
ສັບສົນວົນວາຍ
ໂຈະຈົ້ງ ຄືງຢູ່
ພິມຢູ່ ວຽງຈັນ
ເຂົ້າໄປປິດລ້ອມ
ຄືຮື້ວ ວຽນວົງ
ທ້າຕີ ຂົ່ມຂູ່
ບຸເຂົ້າ ຈັບກຸມ

ຜູ້ນຳເລີຍ ປະຊຸມ ປະກາດໃຫ້ຢ່າ....
ກຳມະກອນຕຶກທ່າ ຂັງໄວ້ ຢູ່ໃນ
45 ວັນ ຜ່ານໄປ ບໍ່ໃຫ້ ອອກບ້ານ
ອະນຸຍາດ ແຕ່ຍິງ2ທ່ານ ໄປຕະຫຼາດຊື້ຂອງ
ຈັ່ງແມ່ນມັນ ຈອງຫອງ ພວກຫຸ່ນ ເດີທ່ານ...

ອ້າວ... 45 ວັນນັ້ນຜ່ານ ການນຳປະກາດ
ໃຫ້ຮູ້ເລື່ອງ ບັງອາດ ສະຖານະການ
ພວກອຳນາດ ວຽງຈັນ ມັນດື້ຂະໜາດ
ມັນຄິດສວມອຳນາດ ຄຸມຄວບ ຝ່າຍດຽວ
ຈັກກະພັດ ມັນຫຽວ ວາງແຜນກໍ່ເລື່ອງ
ສະພາບເຄັ່ງ ຕໍ່ເນື່ອງ ລວມລາວ ສະຫຼາຍ
ກຳມະກອນ ສິ່ງໄປ ກັບຄືນ ຖິ່ນເຂດ
ໄປຈັ້ງຕົວ ສັງເກດ ແບບພິມລະເມືອງດີ
ຈຳນວນໜຶ່ງ ກໍໜີ ໄປຮຽນປະເທດຕ່າງ
ຈຳນວນໜຶ່ງ ກ່າວອ້າງ ບໍ່ຄືນຖິ່ນເດີມ
ອອກໄປເຮັດວຽກເສີມ ໂຮງພິມ ຂ້າງນອກ
ຈຶ່ງພາກັນ ໄປຊອກ ຮັບສະໝັກງານ
ຕອນນັ້ນ ສະຫາຍບີ ປະຕິຍານ ຂານວ່າບໍ່ອອກ
ຊິຢູ່ໃນເຂດຂອບ ຮັກສາໂຮງພິມ
ເຖິງວ່າ ບໍ່ໄດ້ພິມ ກໍອາສານອນເຝົ້າ
ຄືນເຜົ່າມື້ງ ວ່າກ່າວ ເດັດດ່ຽວ ເຂັ້ມແຂງ
ເຂົາຈະຢູ່ ເບິ່ງແຍງ ຈີນນາທີ ສຸດທ້າຍ
ແບ່ງກັນໄປ ຫຼາຍຝ່າຍ ລີ້ຊອນ ປ່ອນຕົວ
ທ່ານ ສີທາ ເຄຍຄວາ ຫາທີ່ ຍົກຍ້າຍ
ຈຶ່ງໄປເຂົ້າ ເຄືອຄ່າຍ ເຄື່ອນໄຫວ ປິດລັບ
ທ່ານ ທິດມ່ວນ ສາວຈັນທະລາ ວາຮັບ ໄດ້ຢ່າງທັນການ

ຢູ່ເຂດແຂວງ ວຽງຈັນ    ກຳລັງຮັກຊາດ
ພູພະນັງ ເພຍລາດ    ລ່ອງສັງ ລ່ອງຕອນ
ຖ້ຳຄອກມ້າ ກໍນອນ    ລີ້ຊ່ອນ ເຊົາຢູ່
ເພິ່ນສັບຊ້ອນ ເຂົ້າໝູ່    ຝ່າຍໂຄສະນາ
ເຮັດໃຫ້ ທ່ານສີຫາ    ພາກັນອອກເຄື່ອນ.......

X X X X X

ອ້າວຫຼະ... ເລື່ອນມາເຖິງຄາວຄັ້ງ ປາງຫຼັງສັກກະຫຼາດໃໝ່
ປີ1960 ວ່າໄວ້    ສະໄໝນີ້ ຕ່າງຫຼັງ
ເກີດສິ່ງຄາມມຸ່ນມ້າງ    ເສິກໃຫຍ່ ກາງເມືອງ
ນະຄອນວຽງ ເລີຍເຄືອງ    ຮ້ອນຮົນ ເນີທ່ານ
ພວກທະຫານຫຸ່ນວຽງຈັນຕີຕ້ານ ລັດຖະປະຫານຄັ້ງໃຫຍ່
ແນວລາວຮັກຊາດ ຈຶ່ງໄດ້    ກັບຄືນ ເຂົ້າສູ່ວຽງ... ຕື່ມແຫຼ້ວ
ເພື່ອຄຽງຄຶງ ດຶງໃຫ້    ກຳລັງລັດຖະປະຫານ ໄວ້ວອງ
ທັງເພື່ອ ຊ່ວຍປົກປ້ອງ    ວຽງນັ້ນ ດ່ວນດັ່ນໆ...

ອ້າວ... ຕອນນີ້...
ສະຫາຍບີ ກໍ່ເລີຍທັນ    ຕ່າວຄືນ ມາເຂົ້າ
ພິມໜັງສື ຄືເກົ່າ    ຕຽມການຈັດແຈ່ງ
ຈິນວ່າ ລັດຖະປະຫານຍາດແຍ້ງ ເລວສູ້ ເຊື່ອມສະຫຼາຍ
ຈາກນັ້ນ ກຳລັງຮັກຊາດຈຶ່ງໄດ້    ໄປປິດປ່ອຍ ທົ່ງໄຫຫີນ
ພວກຫຸ່ນ ມັນຍັງປີນ    ເປີດນຳຕາມຕ້ານ...
ເອີ່.... ໂຮງພິມຈາກມານັ້ນ    ພາກັນຕັ້ງຂຶ້ນໃໝ່... ຕື່ມແຫຼ້ວ
ຢູ່ທີ່ວພັນ ເຂດຄ້າຍ    ໃນຖ້ຳ ຮ່ອມຜາ
ກຳມະກອນ ທີ່ວໜ້າ    34 ຈຳນວນພິມ
ມີຫຼາຍຄົນ ນັກຂຽນ    ແຕ່ງປຸນແປງເລື້ອງ

24/VII
ຫ້າມຈຳໜ່າຍ

ສິ່ງພິມ ເຢືອງທາງໃຫ້ ປັດໄຈຊີ້ຊ່ອງ
ທັດສະນະຖືກຕ້ອງ ຫຼັກໝັ້ນ ກັ່ນແຂງ
ແຫຼ່ງສິ່ງພິມມາກຂຶ້ນ ກ້າວເດັ່ນ ໄປໄກ
ສຳນັກພິມເປັນປັດໄຈ ເປີດປະຖົມ ກຽມຕັ້ງ
ປີ 1968 ເປັນຄັ້ງ ສຳນັກພິມຕັ້ງກໍ່
ແຕ່ກຳຄຽງຄູ່ຂ້າງ ໂຮງພິມນັ້ນ ອັນດຽວ......

X X X X X

ເອີ່... ເມື່ອການປະຕິວັດລາວ ກ້າວເດີນຮອດບັ້ນ ຍິ່ງໃຫຍ່ຂະຫຍາຍໂຕ
ເລື່ອງການໂຄສະນາ ກໍຍິ່ງນຳ ມາເວົ້າ
ເລີ່ມ ແຕ່ປີ 69 ຍາວໄກ ເຂດປົດປ່ອຍ
ກອມເອົາ 3/5 ອານາກວ້າງແກ່ວລາວ
ພິມລະເມືອງ 1/3 ເນີເຈົ້າ ອາດເວົ້າວ່າເປັນລັດ
ສູນກາງພັກ ຈັດແຈງ ປ່ຽນແປງດາຫ້າງ
ເພິ່ນຕັ້ງ ຄ.ອ.ວ ຂຶ້ນ ຫຼາຍຂະແໜງ ເປີດປ່າວ
ພິມຈຳໜ່າຍ ກໍຢູ່ເຕົ້າ ຄ.ອ.ວ ເຈົ້າເລົ່າຂານ
ຄ.ອ.ວ ກ່າວຕ້ານ ຊີ້ສັ່ງ ບໍ່ໄລລະ
ໃຫ້ເພິ່ນ ພາຫະນະການພິມ ຕໍ່ເຕີມເສີມເຂົ້າ
ກຳມະກອນໂຮມເຕົ້າ ຮັບເອົາ ເຂົ້າຕື່ມ
ໃຜກໍແສນ ປາບປື້ມ ໄປເຂົ້າສະໝັກພິມ
ມີໃບໜ້າ ຍິ້ມແຍ້ມ ຮຽນຮ່ຳດອມກັນ
ສ້າງບັນດາ ນັກພິມ ໃຫ້ແກ່ ແຂວງເໜືອໃຕ້
ຈິນກ້າວໄປ ປຸກສ້າງ ໂຮງຮຽນ ຫຼັງໃໝ່
ຕັ້ງຢູ່ແຂວງ ອຸດົມໄຊເພິ່ນເວົ້າ ເປັນເປົ້າໃຫ້ 6 ແຂວງ
ໃນພາກເໜືອ ກ່າວແຈ້ງ ເພື່ອເປັນແຫຼ່ງໂຄສະນາ
ຕັ້ງໂຮງພິມຂຶ້ນມາ ປີ 72 ຄ່ອງຕົວ ພໍແລ້ວ

ໂຮງພິມແນວ ຄາວນີ້ ລາວ-ຈີນ ມິດຕະພາບ
ສະພາບພິມ ເທື່ອນີ້ ດີແທ້ ຈື່ເອົາ
ຂຶ້ນ ຄ.ອ.ວ ເນີພວກເຈົ້າ ສາຂາໃໝ່ ອຸດົມໄຊ
ເປັນປັດໄຈ ແຂງແຮງ ເມື່ອຄາວສະໄໝນັ້ນ
ທ່ານສີທາໄປຈັດຕັ້ງ ທາງການຈັດສິ່ງ
ໂຮງພິມລາວຮັກຊາດກໍຍັງຄົງ ຢູ່ພູແຄ ເຂດກຳ ຄ.ອ.ວ ນັ້ນດັ່ງກັນ...

ເອີ່... ຍາມນີ້.... ທ່ານ ໄກສອນ ພິມວິຫານ ເອົາບົດຊຽນຂອງທ່ານ
ມອບໃຫ້ ທ່ານ ສີທາ
ໄປເດົາດາຈັດພິມ ແລ້ວແຈກຢາຍ ເນີທ່ານ
ຈຶ່ງຈັດການນຳເຂົ້າ ໂຮງພິມ ມິດຕະພາບ
ໃຜກໍໄດ້ ຊາບເລື່ອງ ພິມໄດ້ ຢ່າງດີ...
ອ້າວ... ໂຮງພິມນີ້ຕັ້ງທີ່ປ່າ ຣິກເຮື້ອ ໃນຖ້ຳ ໃຫຍ່ຍາວ
ເປັນໂຮງພິມ ກ້າວໜ້າ ມາດຄ່າ ຄຸນສູງ
ມີຊ່ຽວຊານ ນຳຈູງ ລ່ຳແລ ແນໃກ້
ຈຶ່ງຄອຍ ເປັນປັດໄຂຂໍ້ ພໍພຽງ ແຈກຈຳໜ່າຍ
ໃຫ້ທຸກຄົນຈື່ໄວ້ ໄປໜ້າ ຢ່າຊິໄລ....ເດີນາຍ.....

X X X X X

ເອີ່... ຫັນມາຫາ ເຂດຄ້າຍ ວັນໃໝ່ໄສງາມ
ການປະຕິວັດ ແຜ່ລາມ ແຕ່ເໜືອ ເນືອໃຕ້
ເລີຍເປັນເງື່ອນໄຂໃຫ້ ເຊັ່ນກັນສັນຕິພາບ
ທະຫານຫຸ່ນ ຖືກປາບສ້ຽງ ຕີແຫ້ຍແຕກສະຫຼາຍ
ລັດຖະບານຫຸ່ນ ສູ້ບໍ່ໄດ້ ຫັນໄປສູ່ເຈລະຈາ
ມີການເຊັນສັນຍາ ຮ່ວມປະສົມ ເຖິງຂັ້ນ
ປີ 1973 ເດີ້ທ່ານ ສັນຍາສັນຕິພາບ

ທຸກແຫ່ງ ແສນປາບປື້ມ　　ລາວເຂົ້າຮ່ວມປະສົມ
ສົງຄາມ ຈຶ່ງເລີກລົ້ມ　　ຈັກກະພັດຖອນໜີ
ມີແຕ່ລາວ ກັບລາວ　　ວ່າກັນສັນສ້າງ
ຄະນະມົນຕີປະສົມການເມືອງຈັດຕັ້ງ ທາງການຟ້າວຟັ່ງ
ເອົາວຽງຈັນທັງຫຼວງພະບາງເປັນກາງເນີພວກເຈົ້າ ຕອນເຂົ້າຮ່ວມປະສົມ
ແຕ່ກໍໄປບໍ່ມົ້ມ　　ການປະສົມ ສຸກຮ່ວມ
ມີຂະບວນປະທ້ວງເກີດຂຶ້ນ　　ທະວີເຄື່ອນ ເຄັ່ງແຂງ
ທະຫານຫຸ່ນ ລູກແຫຼ້ງ　　ຂອງອຳນາດວຽງຈັນ
ມັນໄດ້ ຫັນເຫຄິດ　　ຄັ່ງຄອນ ຕອນນັ້ນ
ຈົນກ້າວໄປ ເຖິງຂັ້ນ　　ກົງທັບແຕກຫ່າງ
ເລີຍບໍ່ຍອມ ເຂົ້າຂ້າງ　　ທາງກໍາ ຜູ້ບັນຊາ
ສະພາບການ ກົງຫ້າ　　ເຖິງຮ່ວມ ສຸກຮອມ
ພວກໝູ່ຈອມພະເດັດການ　　ແຕກໂຕນໜີຈ້ອຍ
ມີພວກຄົນເປັນຮ້ອຍ　　ເປັນພັນພໍໝື່ນ
ໃຜ ກໍລຸກຮື້ຂຶ້ນ　　ປະນາມໄດ້ ໄລ່ເຂົາ
ທວງໃຫ້ຍຸບ ກຸ່ມເປົ້າ　　ອົງຄະນະມົນຕີ
ຕອນນີ້ ມັນບໍ່ເໝາະພໍທີ　　ສະພາບການເມືອງບ້ານ
ປະຕິການໜີແລ້ວ　　ບໍ່ມີແນວ ເວົ້າວ່າ
ຊາວປະຊາ ທົ່ວໜ້າ　　ລຸກຮື້ ຊົ່ວແຊວ...
ເອີ່...　ລຸກຂຶ້ນແລ້ວ　　ໄປຮ່ວມໂຮມຊຸມໝຸມ
ເຕັມໄປໝົດທຸກມູມ　　ເດີ່ນທາດຫຼວງມະຫັນລົ້ນ
ໝົດທຸກຄົນ ໄປເຂົ້າ　　ຂະບວນການຢຶດອຳນາດ
ສຸດປາກຽນ ກາດກ້ອງ　　ຄະນອງລົ້ນໂລກໄກ
23 ສິງຫາ 1975 ວ່າໄວ້　　ຢຶດອຳນາດ ມາມີ
ປົດປ່ອຍລາວ ລວມໄປ　　ທົ່ວແຂວງ ຂົງຄ້າຍ
ອຳນາດກາຍເປັນເຈົ້າ　　ປະຊາເຮົາທຸກເຜົ່າ
ອົງພັກນຳ ແຈ່ມເຈົ້າ　　ເຮົານັ້ນສະຫຼາດແຫຼມ.....

ເອີ່... ຂໍເວົ້າແຖມ ຕື່ມຕັ້ງ ຄັ້ງລະບອບ ສ.ປ.ປ.ລາວ
ວັນທີ 2 ທັນວາ ຈາຂານ ກ່າວກັນ ຫຼາຍຟ້າ
ປີໜຶ່ງພັນເກົ້າຮ້ອຍເຈັດສິບຫ້າ ສາທາລາວ ຕັ້ງຂຶ້ນໃໝ່
ປົດປ່ອຍລາວຕັ້ງແຕ່ເໜືອຮອດໃຕ້ ໄປໜ້າໃຫ້ເບິ່ງຫຼັງ... ເອີນວັງ... ເອີຍ...

X X X X X X

ອ້າວ... ມາຈາຂານອີກຄັ້ງ ພິມຈຳໜ່າຍພາຍຫຼັງ
ປົດປ່ອຍແລ້ວມີຫຍັງ ເມື່ອປະສົມໂຮມເຕົ້າ
ໂຮງພິມແນວລາວນຳມາຕັ້ງ ວາງເປັນຖານທີ່
ລັດຖະບານເກົ່າເຂົາມີ ໂຮງພິມແຫ່ງຊາດຊື່ຕັ້ງ ວາງໄວ້ແຕ່ເທິງ
ເຂິງແລ້ວ ເອົາລວມເຂົ້າ ເນົາໃນລັດຖະບານໃໝ່
ເປັນໂຮງພິມແຫ່ງຊາດວ່າໄວ້ ເອົາເຂົ້າຮ່ວມກັນ
ໂຮງພິມແຫ່ງຊາດ ວ່ານັ້ນ ໄດ້ຈັດສັນບັ້ນໃໝ່
ຮ່ຳຮຽນ ໄປພ້ອມໆ ຫຼັກໝັ້ນ ຜ່ານອົບຮົມ
ເຖິງອຸດົມການກ້າວ ສັງຄົມນິຍົມຍາວຍິ່ງ
ຕື່ນຕົວແບບ ນີ້ໆ ທະວີກ້າວຮ່ວມກັນ
ໃຜກໍ່ຫັນມັ່ງຫ້າວ ໄປຕາມພັກປະຊາຊົນປະຕິວັດລາວ ເນີພໍ່!
ກໍ່ສ້າງຕົວໃຫ້ກ້າວໜ້າ ມອງຟ້າ ແກ່ວໄກ
ການພິມລາວ ນີ້ໄດ້ ພິມຈຳໜ່າຍເລີຍເປັນກົມ
ຂຶ້ນກັບ ຄົມມະນາຄົມ ຝ່າຍກະຊວງສາຍຕັ້ງ
ແຕ່ວ່າພາຍຫຼັງນັ້ນ ລັດຖະບານປະກາດໃໝ່
ເອົາໄປຂຶ້ນຢູ່ເຕົ້າ ຖ.ວ ເທົ້າ ຊື່ກະຊວງ.....
ເອີ່.... ລ່ວງມາເຖິງ ຄາວນີ້ ທ່ານ ສີທາ ກໍມາວ່າ
ເປັນຫົວໜ້າກົມພິມຈຳໜ່າຍແຮກເຄົ້າ ໂຮມເຕົ້າແຕ່ງການ...
ສ່ວນໂຮງພິມວ່ານັ້ນ ກໍແມ່ນທ່ານບັນຊາ
ມີຄະນະ ນຳກັນ ຮ່ວມທີມ ຫຼາຍທ່ານ

ພະແນກການວາງໄວ້ ກວມໄກ ສອດຄ່ອງ
ສ້າງເງື່ອນໄຂ ໃຫ້ອ້າຍນ້ອງ ປອງສ້າງ ເລັ່ງຂະຫຍາຍ
ຝຶກຝົນໄປເປັນຂັ້ນ ຕາມມາດຖານ ຊຸບຫູ່
ໃຫ້ສືບທອດຕໍ່ໜ້າ ພາຍຊ້ອຍ ເມືອຫຼັງ
ເອີ່... ມັນໂລດເປັນດັ່ງນີ້ ພິມຈຳໜ່າຍໃນລາວ
ກ້າວເຖິງປີ 1982 ດຸ່ງເດີນເຖິງຂັ້ນ
ພິມຈຳໜ່າຍ ຫັນໃບໜ້າ ປານທາຄືນໃໝ່
ສຳນັກພິມກຽມໃຫ້ການສ້າງຕັ້ງ ວາງສ້າງຕື່ມຂະບວນ
ການຈັດພິມ ຊ່ວຍຊ້ວານ ປະກອບສ່ວນ ເຫຼືອຫຼາຍ
ນັກປະພັນ ຂະຫຍາຍ ຮ່ວມໃຈ ຊໍ້ຊ້ອງ
ມອງແງ່ ໂລກະທັດກ້ວາງ ດວງລີໄກ ເຕັ້ນຕື່ນ
ມີຈຸດຢືນ ຂາດຂັ້ນ ປະພັນເລື້ອງ ເລື່ອງຊຽນ
ປາກຽນກ້ອງ ຊິມລິມລະບອບໃໝ່
ປາກກາໃສ ຝົນປາຍແຫຼມລ່ຽນເຫຼື້ອມ ລີວເລັ້ງເລັ່ງແຕ່ຊຽນ...

X X X X X X

ອ້າວ... ໝໍລຳ ເວົ້າບໍ່ຜຽນ ເລື່ອງຊຽນຂີດມີຫຼາຍ
ຄັນຊິບັນຍາຍເຖິງ ກໍມາກມີ ມວນລົ້ນ
ສິນແຕ່ ລີງລາຍເວົ້າ ຊິເປັນເລົາຄືເຫຼົ່າ
ການພິມເວົ້າຮອດນີ້ ຊິລຳຊ້ອນຕໍ່ກອນໆ...
ຫັນມາຫາ ບ່ອນບັ້ນ ມື້ໃໝ່ໃສງາມ
ກຳມະກອນ ການພິມ ກໍມາກມີ ມວນຂຶ້ນ
ລັດລີງທຶນເທໃຫ້ ປັບປຸງປັ້ນແຕ່ງ
ສອງໂຮງພິມບໍ່ແກ້ງແຍ້ງ ຈັດເຂົ້າ ຄ່ອງກັນ
ສອງໂຮງພິມ ວ່ານັ້ນ ຮວມໂຮບ ເປັນພະລັງ
ມີທັງສຳນັກພິມ ຕື່ມເຕີມ ຕາມແຕ້ມ

ຈຳນວນພິມແຖມຊ້ອນ　　ກຳມະກອນ 188 ( ຄົນ )
ປານວ່າ ນົກກະແທດເຕົ້າ　　ລວມເຂົ້າໃສ່ ນົກເຂົາ
ມີສຽງຮ້ອງ ກ້າວໆ　　ເປັນເລົາໆ ກ້ອງເຫຼົ່າ
ຄືດັ່ງ ຈັກກະຈັ່ນຫ້າວ　　ເດືອນຫ້າ ນີ້ນັ້ນ
ຈັກກະຈັ່ນຮ້ອງ　　ສຽງຫອງ ຂຶ້ນທ່າ
ຄັບພົງໄພ ປ່າໄມ້　　ກຶກກ້ອງ ແກ່ວບິນ
ໜັງສືພິມ ປະຊາຊົນຕອນນີ້　　ມີການສືບຕໍ່
ບໍ່ເອີ້ນຊື່ ຄືແຕ່ກີ້　　ຄາວນີ້ ປ່ຽນທັນ
ລາວຮັກຊາດ ເມື່ອນັ້ນ　　ຄັ້ງຜ່ານເຮົາເຫັນ
ດຽວນີ້ກາຍມາເປັນໜັງສືພິມປະຊາຊົນ ປະກາດຕົນເປັນຕົ້ນ
ມີເຫດຜົນນຳອ້າງ　　ໃນທາງການປ່ຽນ
ຕັ້ງແຕ່ກວຽນ ແລະ ລໍ້　　ກໍຍັງໄດ້ ປ່ຽນໄປ
ເປັນລົດໄຖ ລົດຊວ້ານ　　ທັງມວນມາແທນທີ່
ສາລະຄະດີ ດັ່ງນີ້　　ທີໜ້າ ຊິວ່າແຖມ....
ອ້າວ... ປີ1983 ຍິ້ມແຍ້ມ　　ຕັ້ງໃໝ່ສຳນັກພິມ
ເປັນທີມງານ ບັນທັດ　　ຈັດພິມ ຫຼາຍດ້ານ
ຈັດການຂຶ້ນ　　ໃນຖານ ມາດໃໝ່
ສຳນັກພິມຕັ້ງໄວ້　　ວາງຂໍ້ຕໍ່ແຜນ
ສຳນັກພິມ ຍັງແມ່ນທ່ານ　　ຄືທ່ານສີທາເອງ
ເປັນໂຕເກງ ອຳນວຍການ　　ເມື່ອຄາວ ຈັດຕັ້ງ
ໄປຕາມທາງ ສັບຊ້ອນ　　ໃນຕອນປົດປ່ອຍໃໝ່
ເປັນປັດໄຈຈ່ອງນ້າວ　　ໃຫ້ເຮົາໄດ້ຊື່ນຊົມ
ຫົວໜ້າກົມພິມຈຳໜ່າຍໃໝ່ນັ້ນ　　ແທນທ່ານສີທາ
ທ່ານຄຳເສັງສູນດາລາ　　ເມືອລຸນ ກໍຫຼາຍທ່ານ
ສືບຕໍ່ກັນ ເປັນຂັ້ນ　　ລຽນລຳຕາມຕໍ່
ບໍ່ຢາກຍໍ ຍົກເວົ້າ　　ມັນຊິ ເຍີ້ນແກ່ຍາວ.....

ຫ້າພະແນກເນີພວກເຈົ້າ ມະຫາພາກພາຍບິນ
ມີຫຼາຍຄົນຮອງຮັບ ເມື່ອຫຼັງຫຼາຍບັ້ນ
ຫົວໜ້າກົມມີຫຼາຍທ່ານ ທຳການສືບຕໍ່
ມໍ່ໆປີ1999 ກໍ່ຊັບຊ້ອນ ຕື່ມຊອນ
ຕອນໃໝ່ນີ້ ນິຕິກຳ ນຳກ່າວ
ຂໍ້ກຳນົດ ວ່າເວົ້າ ຄອງຄຸ້ມສິ່ງພິມ
ເພື່ອໃຫ້ມັນ ແນ່ນິ້ມ ພິມຈຳໜ່າຍ ນຳຢາຍ
ມີກົດໝາຍຮອງຮັບ ປົກປ້ອງຄອງຄຸ້ມ
ກົດໝາຍນີ້ ປົກຫຸ້ມ ເດີນໄປໄດ້ງ່າຍ
ປົກປ້ອງສິດຜົນປະໂຫຍດຜູ້ໄດ້ ດຳເນີນເລື້ອງ ເລື່ອງພິມ
ເອີ່... ຫັນມາຫາບ່ອນນີ້ມ ແນມສ່ອງ ມອງໄກ
ຫັນໄປດູ ການພິມ ມາກແນວ ທາຍທ້າ
ເລີ່ມແຕ່ ປີ 75 ຈົນມາເຖິງ 80 ກວ່າ
ກໍມີການຄົ້ນຄວ້າ ຕາມໜ້າທີ່ການ
ສິ່ງພິມ ສານຮັບໃຊ້ ໃນເຂດການເມືອງ
ຕອບສະໜອງ ພັກລັດ ຜ່ານແຜນ ພິມນັ້ນ
ງົບປະມານລັດໃຫ້ ພິມໄປມີເຂດ
ປະເພດເຂົ້າ ຈ້ຳເຂົ້າ ຄາວນັ້ນ ແຫຼກຖະຫຼຳ
ຜະລິດສຳ ບໍ່ໄດ້ ຢູ່ເກົ່າ ຕາມໄປ
ເລີຍບໍ່ມີກຳໄລ ແກ່ໄປຕາມຜຽນ
ທຶນໝູນວຽນ ຄາຄ້າງ ທາງເດີນ ຍາກໃຫຍ່
ຄວາມສອດຄ່ອງ ບໍ່ໃຫ້ ໃນເລື່ອງ ເລື່ອງພິມ
ມັນກໍເລີຍ ບໍ່ນີ້ມ ໃນເລື່ອງບໍລິຫານ
ກາຍເປັນ ຖານເກື້ອກູນ ອຸດໜູນ ໄປເລື້ອຍ
ການຟຸມເຟືອຍ ຊ້ຳຊ້ອນ ຄືໝອນໜ່ວຍເກົ່າ
ຢາກເອົາໃໝ່ ບໍ່ໄດ້ ຫາຝ້າຍກໍບໍ່ມີ
ໄດ້ຫຼາຍປີ ມັນເສົ້າ ເອົາແພໂອບ ໜ່ວຍເກົ່າ

ຈົນມັນເຫຼື້ອມ ເມົ້າໆ ໝອນເຈົ້າຊ່າງເປັນ...

ເອີ່... ຊິຂໍເວົ້າ ກ່າວເນັ້ນ ຂົງເຂດການພິມ
ຫຼຽວຄືນ ເຫັນຄຶມມືມ ດັ່ງປາຍ ທາງໂຄ້ງ
ຄືຈັບປູ ວາງດົ້ງ ປູໂຄ່ງ ຄານຂີ່ໂຄ່ງ
ເປັນວົງມົນ ໂລ້ງໂຄ້ງ ບໍ່ຫວິດດົ້ງ ຮອບວົງ
ຂົງເຂດພິມ ວ່ານັ້ນ ພັດກ້າວໃຫຍ່ ທັນສະໄໝ
ມີຫຼາຍອັນ ຂັນແຂງ ຕື່ນໂຕ ໂຫນໂຫ້
ຈັກຕີໄປ ຕີໂປ້ ພິມນູນ ພິມຮາບ
ອັດປະຫຼັກ ຊັກລ້າງ ພິມໄດ້ດັ່ງໃຈ
ມີຈັກຕັດ ຈັກໄງ້ ຫຼາຍຢ່າງ ສັບກັນ
ມັນມີການປະສານ ຮ່ວມຮຽງຄຽງຊ້ອນ
ກຳມະກອນ ພັບເຈ້ຍ ຄືນງານການຕະຫຼາດ
ມີແຕ່ຜູ້ສະຫຼາດລ້ວນໆ ພະອວນເຈົ້າເບິ່ງເອົາ
ເອີ... ມັນບໍ່ຄື ແຕ່ເຄົ້າ ຄາວກ່ອນ ຕອນຫຼັງ
ປາງໃຊ້ຫີນ ລີໂຕ ແມ່ພິມ 3 ກ້ອນ
ໂຕອັກສອນຄາວນີ້ ເກັບລຽງ ຈັດຄູ່
ພະນັກງານ-ກຳມະກອນມີແຕ່ຜູ້ບູ້ໆ ດູໜ້າສະຫງ່າງາມ.....

ເອີ່... ເຮົາຫັນມາ ສູ້ກ້ຳ ກ່າວນຳ ໃນທີມ
ເລື່ອງກົນໄກການພິມ ກະໂດດໄປຫຼາຍຂັ້ນ
ຈັກອິບແຊັດ ການໃຊ້ ພິມໄປ ໄວແລ່ນ
ມີແຖບນອນ ແຖບຕັ້ງ ນຳອ້າງ ອ່ານດູ
ຫັນມາສູ່ ແກ່ວກ້ຳ ຢ້ຳຕໍ່ ສຳນັກພິມ
ເຮັດວຽກງານຈັດພິມ ຮ່ວມມື ເດີຫ້ານ
ຜູກສຳພັນ ກັນແໜ້ນ ມີແຜນເພື່ອຈຳໜ່າຍ
ປື້ມໂຊວຽດກໍໄດ້ ນຳເຂົ້າ ຕື່ມຕາມ

| | |
|---|---|
| ມີຮອດປີ້ມ ຈາກກ້ຳ | ປະເທດເພື່ອນ ມາຢາຍ |
| ມີຫຼາຍຄົນນັກແປ | ເປີດເຜີຍ ຫຼາຍເລື່ອງ |
| ແຕ່ມັນເຄືອງ ຄາຂ້ອງ | ກອງກັນ ເອ້ອັ່ງ |
| ປານວ່າ ສາງໃສ່ປື້ມ | ໃນຮ້ານ ທ່ໂຮມ |
| ຟັງເດີ ພໍ້ວດອກອິ້ມ | ໃຫ້ອີ່ມອ່ານ ການຫຼັງ |
| ສຳນັກພິມດັ່ງດັງ | ຕ່າງພິມຫຼາຍເລື້ອງ |
| ແຕ່ມັນ ເຄືອງຄາຄ້າງ | ວາງຂາຍ ບໍ່ສະດວກ |
| ຈຳພວກ ຄົນຜູ້ຊື້ | ມີໜ້ອຍ ບໍ່ຫຼາຍ |
| ແຕ່ກໍຍັງ ໃຊ້ໄດ້ | ຂະຫຍາຍເຂດສາຂາ |
| ໃນບັນດາ ຂົງແຂວງ | ແຫ່ງລາວ ເໜືອໃຕ້ |
| ລັດຜູ ລົງທຶນໃຫ້ | ໜັກໃຈ ເນີທ່ານ |
| ຜ່ານຂອດຂາຍ ແລະ ຊື້ | ກໍຢ່ຳເທົ້າ ຢູ່ບໍ່ເຊົາ |
| ປີ1986 ຍ່າງເຂົ້າ | ເຖິງຄາວ ປ່ຽນແປງໃໝ່ |
| ຈິນຕະນາການກ່າວໄວ້ | ໄປໜ້າປ່ຽນແປງ |
| ເສດຖະການ ກ່າວແຈ້ງ | ແປງໃໝ່ ກົນໄກ |
| ການພິມ ລາວຫັນໄປ | ວິສາຫະກິດເນີ ທ່ານ |
| ໄປສູ່ຖານ ການໃຊ້ | ໄລ່ລຽງຕາມລະບອບ |
| ວິສາຫະກິດປະກອບເວົ້າ | ຈັດເຂົ້າ ຂອດປະເດັນ |
| ພັກນຳພາກ່າວເນັ້ນ | ເລືອກເຟັ້ນໃໝ່ ກົນໄກ |
| ເສດຖະກິດຕະລາດ ເປັນປັດໄຈ | ຈື່ຈຳນຳເນັ້ນ |
| ຕາມກົດເກນເດີນກ້າວ | ເນັບເລນິນ ໄດ້ກ່າວ |
| ເສດຖະການຈິ່ງ ຊິກ້າວ | ໄປໜ້າຢ່າຊິລືມ... |

ເອີ... ມາບັດນີ້

| | |
|---|---|
| ວິສາຫະກິດ ກ່າວລື້ມ | ໄປໜ້າ ໄລ່ລຽງ |
| ພຽງແຕ່ດຳ ເນີນຂຶ້ນ | ລົງທຶນ ກ້າວໃຫຍ່ |
| ເສດຖະກິດຕະຫຼາດ ປະກາດໃຊ້ | ໄຕຂຶ້ນ ລື່ນຫຼັງ |

ມີແນວທາງ ເປີດກວ້າງ　　ໄປສູ່ໂລກ ແນມໄກ
ໄປສູ່ ໃນສາກົນ　　ໂລກສົນໃຈ ດ້ວຍ
ການພິມລາວ ເລີຍບໍ່ສ້ວຍ　　ສວຍງາມໆ ຂຶ້ນໃໝ່
ສຳນັກພິມໃບໜ້າໃຫຍ່ ໄປບໍ່ຢຸດບໍ່ຍັ້ງ ນາງນ້ອງໃຫ້ຈື່ຈຳ.. ສວຍງາມໆ...

ອ້າວ.... ມາສ່ຳນີ້ ແລ້ວພີ່ນ້ອງ　　ເຮົາມອງແງ່ການພິມ
ມີຈັກກົນ ຈັກຫຍິບ　　ແຕ່ງແປງ ຫຼາຍຖ້ານ
ການຈັດພິມ ມັນຂຶ້ນ　　ທະວີບີນ ບຸກຕໍ່
ວິສາຫະກິດຂອງລັດເນີພໍ່　　ເປັນຫົວຈັກອອກໜ້າ ພາດັ້ນດຸ່ງເດີນ...
ໂຮງພິມ ແຫ່ງລັດເພີ່ນເອີ້ນ　　ເດີນດ່ວນ ຊວນຜະລິດ
ເອກະຊົນ ມີສິດ　　ປະກາດພິມ ຈະແຈ້ງ
ຖືກິດເກນ ແກ້ງແຍ້ງ　　ມາແຍງ ຍາດແຍ່ງ
ເພື່ອເຂັ້ມແຂງ ຍ່າງກ້າວ　　ບໍ່ເມົາລົ້ມ ລະລາຍ
ໂຮງພິມລັດ ຍາດໄດ້　　ໃນເລື່ອງ ຜະລິດສຳ
ທຶນຄົງທີ່ ມີປະຈຳ　　ເພາະລັດມີມາແລ້ວ
ທຶນໝູນວຽນ ແນວຂອງ　　ເປັນຂອງທີ່ ຍັງຍາກ
ໂຮງພິມເລີຍປາກເວົ້າ　　ຄາວນີ້ ຕ່າງມີ
ທຶນໝູນວຽນວ່າມີ　　ບໍ່ຍາວຍິ່ງ ກວາງໄກ
ໄດ້ແກ້ໄຂ ໄປໝົດ　　ແລ່ນລີ້ວໄປໄດ້
ເພາະເປັນໃນຕົວເຈົ້າ　　ບໍ່ເປັນດາວ ດວງໃໝ່
ເຮັດການຕະຫຼາດຂີ້ຮ້າຍ　　ລາຍໄດ້ຈຶ່ງ ບໍ່ດີ
ຜູ້ທຶນດີ ເຂົາບຸກເຂົ້າ　　ເອົາການ ຂັນແຂ່ງ
ແກ້ງແຍ້ງ ໄປລ້ຳໜ້າ　　ຈຳໄດ້ ໃສ່ໃຈ
ເລື່ອງການພິມ ບໍ່ໄດ້　　ເປັນຍ້ອນ ຝ່າຍຕົນເອງ
ຄັນວ່າເລັ່ງ ການໄກ　　ມ່າຍມືນ ໂຫນໂຫ້
ເຮັດໜ່ອຍຕາໂລໂລ້　　ຊິເຫັນໂຕຂໍ້ຂັດແຍ້ງ
ຄັນປົວແປງ ໃຫ້ແຈ້ງ　　ຄຳແພງເຈົ້າ ຊິດຸ່ງໄກ... ເນີນາຍ...

## ສຽງລຳລ່ອງ:

ເອີ່... ການພິມ ລັດຍາດໄດ້ ຄັ້ງຜ່ານ ພາຍຫຼັງ
ຫຼາຍໂຮງພິມດົງດັ່ງ ເບີກຂະບວນນຳໜ້າ
ແຕ່ອາດເປັນບັນຫາດ້ວຍ ໃນການຂັນແຂ່ງ
ແຍງຫົວຈັກໃຫ້ໄດ້ ໄປໜ້າ ຢູ່ທ່ານຳ
ຈິ່ງຄະລຳ ເອົາໄວ້ ຢ່າທຳໄປໃຫ້ ຕົກຕ່ຳ
ຢ້ານຫົວຈັກ ຕຳຕົ້ນໄມ້ ຫົວຊິຍ້າຍໄປຢູ່ຫາງ
ຄັນຫາງຫົວມັນສ້ວຍ ເປັນຫາງມັນຊິຕາງ
ຫົວຈັກອື່ນ ມັນຊິຕັ້ງ ໄປໜ້າວ່າຈັ່ງໃດ... ນອນໃນໆ...

X X X X X

ອ້າວ...ດຽວນີ້... ໃຜກໍໄດ້ເບີກໜ້າ ທາຍທ້າ ຕະລາດໄປ
ເຮັດໃຫ້ດີເດັ່ນໄດ້ ໄປຕາມຄອງສະໜອງອ່ານ
ບໍລິການລູກຄ້າ ໄປໜ້າ ວ່ອງໄວ
ພິມລະບາຍ ສີເພີ້ມ ເສີມງາມຕາມພື້ນ
ຫຼຸບສາກົນ ມໍ່ໃກ້ ໄປແລ້ວ ແຕ່ດົນ...
ເອີ່... ສະຫວ່າງການພິມປຸ່ງມລົ້ນ ທັງມັນທາຕຸລາດ
ສີສະຫວາດ ພິມກ້າວໜ້າ ທາຍທ້າຕໍ່ສະໄໝ
ພາກລັດກໍໄດ້ ກ້າວໃຫຍ່ ໄປໄກ
ເລື່ອງຫົວຈັກ ກໍຊິງໄຊ ໃຫຍ່ໂຕນຳໜ້າ
ຢ່າວ່າເປັນ ຫົວຊ້າງ ຫາງໝູ ດອກເດີ້ໝູ່ໆ......
ມັນບໍ່ມີ ຊິປູ້ ດູໜ້າ ຄ່າສູງ... ໃສງາມໆ

ອ້າວ.... ການມຸ່ງໄປ ເປີດກ້ວາງ  ມັນເປັນທ່ວງ ທາງເດີນ
ສຳນັກພິມ ພັດຍັງສິເຂີນໆ  ແບບກະເທີນເນີເຈົ້າ
ເປັນຍ້ອນຄາວ ຈັດຕັ້ງ  ວາງກົນມາດໃໝ່ໆ
ຍັງບໍ່ດີນ ປະກາດໃຊ້  ຈຶ່ງໄປຊ້າ ທ່າເດີນ
ແຕ່ຍັງມີ ບາງບ່ອນຕັ້ງເຈີ້ນເທີ້ນ  ເອີ້ນຊື່ ມາດີນ
ແຕ່ພັດຍັງ ສັບສົນ  ຊິວ່າແລນ ຫຼື ເຫ້ຍ
ຊິວ່າ ເມຍ ຫຼື ຊູ້  ແລດູ ພັດບໍ່ແມ່ນ
ຄັນວ່າ ຕໍແກ່ນແຕ້  ແລໃກ້ ແມ່ນກະຍູງ
ຊິວ່າໂກ ກຸງກ້ານ  ຄືນຂານວ່າ ກົກກຸມ
ເປັນມຸມໆ ເມົ້າໆ  ຕົນເຈົ້າ ວ່າຈັ່ງໃດ... ເດີນາຍ...
ອ້າວ... ຄັນປັບໃໝ່ ກໍຊິໄດ້  ເພາະອາໄຫຼ ມັນຫຼືມ
ບາງເທື່ອ ວາວເປັນຄືນ  ສູບຫຼືມ ເນີທ່ານ
ປະໄວ້ນານ ຢ້ານມັນສ້ວຍ  ເປັນທາງຫາງ ຄືໝູ່ກ່າວ
ຫິວຈັກກິນ ຊິບໍ່ກ້າວ  ໃຫ້ນຳເຂົ້າ ສູ່ກະລາ
ອ້າວ.. ການຄຸ້ມຄອງວ່ານັ້ນ  ເຕີນປ່າວ ປຸກລຸກ
ໃຫ້ທຸກສຳນັກພິມ  ໃສ່ໃຈ ເປັນເຈົ້າ
ດຳເນີນໄປ ຕາມເປົ້າ  ກົດໝາຍ ພິມຈຳໜ່າຍ
ກົດໝາຍລິຂະສິດ ກໍບອກໄວ້  ເຮົາໄດ້ ໄຕ່ຕາມ
ຕ້ອງຫຼຽວເບິ່ງ ຂໍ້ຫ້າມ  ມາດຕານໍ່າ ແນຖະແຫຼງ
ແຍງຕາມທາງ ວາງກົດ  ຈຳໜ່າຍໄປທົ່ງຄ້າຍ
ຕົກມາໃນສະໄໝນີ້  ກໍມີການຈັດສາກ
ພາກວິຊາ ເພື່ອຄຸ້ມ  ກຸມແກ້ ກວດການ
ມີຄະນະສະເພາະກິດ ເນີທ້ານ  ກວດອ່ານ ເປັນທີມ
ລົງກວດກາ ສິ່ງພິມ  ທົ່ວໄປເໜືອໃຕ້
ໃຜພິມຜິນ ຜິດຂໍ້  ກົດໝາຍຍໍບອກບີ່ງ
ຄົງຫາຂໍ້ ຂອດແກ້  ແນເຂົ້າ ໃສ່ມາດຕາ......
ຢ່າໄດ້ຫວນ ຫາເລື້ອງ  ພິມປອມປື້ມອ່ານ

ຜ່ານອະນຸຍາດດ້ວຍ ທະບຽນຂຶ້ນຊື່ໝາຍ
ພິມບໍ່ມີ ເລກປ້າຍ ຜືນຜາຍ ການກິດ
ເລື່ອງສິ່ງພິມ ມັນຄືລິດ ເລກທະບຽນ ມີໄວ້
ຄັນບໍ່ມີທະບຽນໃຫ້ ກໍກາຍເປັນປຶ້ມເຖື່ອນ
ຊິຂໍເຕືອນ ຕື່ມໄວ້ ໄປໜ້າ ຢ່າຫຼົງ... ທົ່ງຄຳເອີ່ຍ..

ອ້າວ... ການກວດກາວ່າມັ້ງມ ຄືໂຮງຊຸ່ມດູນດັນ
ກິດໝາຍເປັນສຳຄັນ ຢ່າລ່ວງເກີນ ເດີນໜ້າ
ມັນຊິພາເຮົາຫຍຸ້ງ ລຸງລັງ ຄືຮາກໄຜ່
ຖືກແມງເງົາ-ງອດໄງ້ ໄລຕ້ອງ ຕ່ອຍມື...
ອ້າວ... ຕ້ອງຖືສັນຍາດ້ວຍ ການພິມ ເນີທ່ານ
ການສັນຍາວ່ານັ້ນ ທັນເຂົ້າສູ່ທີ່ໝາຍ
ພິມຫຼາຍໆ ດີດ້ວຍ ຮັບປະກັນ ຕ້ອງກວດຜ່ານ
ການຈຳໜ່າຍ ຖືກຕ້ອງ ຢ່າມອງຂ້າມລະບຽບການ
ໝໍລຳຂານໄຂຂໍ້ ຍໍມາໃຫ້ເຈົ້າຈື່
ການພົວພັນ ແລກຊື້ ໃນເລື່ອງ ສິ່ງພິມ
ຢ່າໄດ້ໄລລາຖິ້ມ ຫຼັກການ ໄດ້ຮຽນຜ່ານ
ພິມຈຳໜ່າຍວ່ານັ້ນ ໃຫ້ທັນເຂົ້າສູ່ປະເດັນ...

ເອີ່... ໃຫ້ຫຼຽວເຫັນ ຄາວເຄົ້າ ຄາວຍາມບໍ່ປິດປ່ອຍ
ການພິມເຮົາ ກ້າວຄ່ອຍໆຈາກງ່າຍດາຍ ໃຫຍ່ຂຶ້ນໜ້າ ເປັນຂັ້ນຜ່ານມາ...
60 ປີ ວ່າໄວ້ ຫຼຽວໃສ່ ການຫຼັງ
ຄືດັ່ງ ໝໍລຳວາງ ວ່າມາ ເນີເຈົ້າ
60 ປີ ເປັນເຄົ້າ ໃຫ້ຫວນຄືນມືນເບິ່ງ
ມູນເຊື້ອ ເປີງແຕ່ເຄົ້າ ເຮົາເວົ້າຜ່ານມາ
ຢ່າລືມລາ ເນີເຈົ້າ ການພິມເຮົາ ໄດ້ກ້າວ
ມີເລື່ອງລາວ ບອກເວົ້າ ໄປໜ້າ ຢ່າລືມ

ເຮົາຄວນໄດ້ ກ່າວລື້ມ　　ເລື່ອງຜ່ານຍາວນານ
ເພື່ອເປັນຖານ ທາງຄິດ　　ຕໍ່ໄປພາຍໜ້າ
ໝໍລຳຈາມາເຖິງນີ້　　ຊິຂໍລາໂຄ້ງຕ່າວ
ອຸດສາຫະກຳການພິມມັນຊິກ້າວ... ໄປໜ້າຢ່າຊິລືມ... ເດີນາຍ... ນ້າ



# ງານສັງສັນວັນພິມຈຳໜ່າຍ

ແຕ່ງໂດຍ : ສຸວັນດາ+ກິດສະໜາ
ຈັງຫວະ : ລຳວົງ
010910

• ຊົມເຊີຍ ວັນການພິມຈຳໜ່າຍ
ພວກເຮົາດີໃຈ ໄດ້ມາພົບກັນ
ມາເຮົາມາ ມາພົບປະສັງສັນ ( ຊ )
ມາຮ່ວມສະຫຼອງກັນ ງານຄົບຮອບ 60 ປີ

• ພູມໃຈ ທຸກຄົນໄດ້ຮັບຮູ້
ພ້ອມກັນຊ່ວຍຊູ ລຸລ່ວງໂດຍດີ
ມີນ້ຳໃຈ ເຫຼື້ອມໃສເອື້ອອາລີ ( ຊ )
ໃຫ້ງານສັງສັນນີ້ ປະກາຍສີດັ່ງດວງດາວ

**R** ກິດໝາຍ ການພິມຈຳໜ່າຍ
ປະກາດໃຊ້ ໃນທົ່ວແດນລາວ
ວຽກການພິມ ການຈຳໜ່າຍຈະເລີນກ້າວ ( ຊ )
ຮ່ວມກັບຊາວຕ່າງດ້າວ ປວງຊົນລາວທຸກຄົນ

• ອວຍໄຊ ໃຫ້ພອນທຸກໆທ່ານ
ເຖິງພະນັກງານ ວິຊາການທຸກຄົນ
ທ່ານຜູ້ນຳ ວິລະກຳປັນຍາຊົນ ( ຊ )
ຂໍໃຫ້ມີສຸກລົ້ນ ທຸກຄົນຈົ່ງໂຊກດີ.

# ເຈົ້າຂອງຮ້ານປີ້ມ

ແຕ່ງໂດຍ : ສຸວັນດາ ຈັນສວຍວັນເພັງ
ຈັງຫວະ : ສະໂລລ໊ອກ
290810

• ອ້າຍນີ້ຫຼຽວມອງ
ນ້ອງພວມຂາຍປື້ມ
ອົດໃຈບໍ່ໄຫວ
ອ້າຍຂໍຖາມນ້ອງແດ່

ເຫັນນ້ອງເຈົ້າຂອງຮ້ານປື້ມ
ອ້າຍຢືນຊົມວ່າງາມແທ້
ຈຶ່ງໄປທັກທາຍຢາມແວ່
ຊື່ແທ້ນັ້ນວ່າຈັ່ງໃດ

• ສຸດແສນດີໃຈ
ວ່າຊື່ສົມປອງ
ຮູບຮ່າງບາດຕາ
ງາມເລີດລື່ນຍິ່ງໃດໆ

ໄດ້ຮູ້ຄວາມຈິງຈາກນ້ອງ
ນາມຄອງນ້ອງສວຍວິໄລ
ກິລິຍາວາຈາບາດໃຈ
ທີ່ອ້າຍໄດ້ເຫັນພົບພານ

**R** ເຈົ້າຂອງຮ້ານປື້ມ
ອ້າຍຂໍສັນຍາ
ຈະພາສ້າງກໍ່
ພ້ອມພຽງຍຶດໝັ້ນຂະຫຍັນ

ຢ່າລືມວັນໜ້າຈະມາ
ສ້າງສາຮ້ານປື້ມຊ່ວຍກັນ
ຈິດຈໍ່ດ້ວຍຄວາມຫ້າວຫັນ
ສະຫວັນຈະເປັນຂອງເຮົາ

• ຄຸນຄ່າຂອງຄົນ
ຄຸນຄ່າຂອງງານ
ຈຳໄວ້ເດີນ້ອງ
ຢ່າຫຼົງເຊື່ອຄຳຍົວະເຍົ້າ

ຢູ່ທີ່ຜົນຂອງງານ
ຢູ່ທີ່ການກະທຳຂອງເຮົາ
ປະຄອງຄວາມຮັກສອງເຮົາ
ສະຫວັນຂອງເຮົາຈະແຕກສະລາຍ.

# ສາວສຳນັກພິມ

แต่งโดย : สุวันดา จับสวยวันเพ็ງ
จัງหวะ : ลำวົງ
280810

- ສາວສຳນັກພິມ ຍືນຍິ້ມຢູ່ຂ້າງຮ້ານ
ສົ່ງສາຍຕາອ່ອນຫວານ ປະສານດ້ວຍສຽງທັກທາຍ
ນ້ອງເວົ້າແກມຍອກ ບອກຊື້ປຶ້ມທີ່ນ້ອງຂາຍ
ເປັນກຳລັງແຮງໃຈ ຊື້ໄວ້ອ່ານພາຍໃນຄອບຄົວ

- ປຶ້ມມີຄຸນຄ່າ ມາກມາຍມະຫາສານ
ເປັນຕຳລາຮຽນອ່ານ ຜິນຂອງມັນຄືອາຫານຫົວ
ເນື້ອໃນຫຼາຍຢ່າງ ມີທັງອ່ານມ່ວນຊວນຫົວ
ສຶກສາຮຽນຄົ້ນຄວ້າ ວຽກສ່ວນຕົວທຳມາຄ້າຂາຍ

**R** ສາວສຳນັກພິມ ຊ່າງຍິ້ມຫວານແທ້ເດຫຼ້າ
ບອກມາເຖີດຂວັນຕາ ປຶ້ມນີ້ນາລາຄາເທົ່າໃດ
ນ້ອງບອກອ້າຍວ່າ ຫົວນີ້ລາຄາບໍ່ຫຼາຍ
ຫາກວ່າອ້າຍຕິດໃຈ ມາຊື້ໃໝ່ວັນໜ້າອີກທີ

- ອ້າຍຂານອາສາ ມາຂາຍປຶ້ມເປັນຄູ່
ຫາກວ່າໄດ້ເປັນຊູ້ ບຸນຍູ້ກໍຍິ່ງແຮງດີ
ຫາກບຸນບໍ່ຊ່ວຍ ອຳນວຍຊ່ວຍອ້າຍອີຫຼີ
ຂາຍຊ່ວຍດ້ວຍຄວາມພັກດີ ມີກຳໄລມອບໃຫ້ໝົດເລີຍ.

# ຮັກສາວໂຮງພິມ

ແຕ່ງໂດຍ : ສຸວັນດາ ຈັນສວຍວັນເພັງ
ຈັງຫວະ : ສະຫຼົບ
231005

• ສາວໂຮງພິມ ຍິ້ມຫວານແທ້ນໍ້ນ້ອງ
ມີຜູ້ຈັບຈອງ ແລ້ວບໍ່ນ້ອງນົງຄານ
ອ້າຍນີ້ຂໍມາ ຂານອາສາຊ່ວຍງານ ( ຊ )
ວຽກເຮືອນການຊານ ການບ້ານອ້າຍກໍເປັນ

• ສາວໂຮງພິມ ຊ່າງຍິ້ມມີລາສີ
ນ້ຳໃຈແສນດີ ສັກສີກໍສູງເດັ່ນ
ຜູ້ໃດແລມອງ ຕ້ອງຕິດໃຈບໍ່ເວັ້ນ ( ຊ )
ຢາກໄດ້ມາເປັນ ມາເປັນແມ່ສີເຮືອນ

**R** ໂປຼດອີນດູ ຜູ້ມີຄວາມຫວັງ
ຂໍແຕ່ນ້ອງນາງ ຢ່າຫາທາງບິດເບືອນ
ຈະສິ້ມໝາຍປອງ ຫາກນ້ອງບໍ່ແຊເຊືອນ ( ຊ )
ຮັກບໍ່ສະເທືອນ ເຈື່ອນພັງດັ່ງຕະຄອງ

• ດາວເຕັມຟ້າ ກໍບໍ່ຮຸ່ງປານເດືອນ
ບໍ່ມີໃຜເໝືອນ ໝົດເມືອງບໍ່ເໝືອນນ້ອງ
ຮັກນ້ອງຄົນດຽວ ບໍ່ທ່ຽວເລາະຫາສອງ ( ຊ )
ຈິງແທ້ເນື້ອທອງ ຮັກນ້ອງສາວໂຮງພິມ.

# ນັກປະພັນຝັນຊຽນ

ແຕ່ງໂດຍ : ສຸວັນດາ ຈັນສວຍວັນເພັງ
ຈັງຫວະ : ລຸມບາ
250905

• ຈັບປາກກາ
ບາງຄັ້ງມີຄວາມໝາຍ
ບາງຄັ້ງສາລະດີ
ຢູ່ພາຍໃນປະເທດ

ຂຶ້ນມາບັນລະຍາຍ
ບາງຄັ້ງກາຍເປັນເຈ້ຍເສດ
ເນື້ອໃນມີສາເຫດ ( ຊ )
ນອກປະເທດກໍຕາມ

• ຍາມຄິດອອກ
ອັກສອນສາດວາດລຽນ
ເດິກດື່ນຂ້ອນຄືນ
ບໍ່ແມ່ນການປະມານ

ຊອກມາຂີດຂຽນ
ພາກພຽນຂຽນເປັນຂໍ້ຄວາມ
ຈຳຕ້ອງບືນຂຽນຕາມ ( ຊ )
ວິຈານເພື່ອມີຄວາມສຸກ

**R** ມີບາງຄັ້ງ
ບາງຄັ້ງກໍຢ້ານກົວ
ບາງຄັ້ງສະບາຍ
ສຸດແສນຈະສະໜຸກ

ນັ່ງນອນກໍຍິ້ມຫົວ
ຕົວລະຄອນນັ້ນມີທຸກ
ຕົວລະຄອນມີສຸກ ( ຊ )
ທຸກຄືນວ່າບ້າອາລົມ

• ນັກປະພັນ
ແປງຕຳລາເຢົາຢາ
ບໍ່ແມ່ນເພື່ອຫວັງ
ຫາກມີຄົນຊື່ນຊົມ

ນັ້ນຫຍຸ້ງເຫຍີງໜັກໜາ
ທີ່ວອານາໃນສັງຄົມ
ຊັ່ງຊາລິດນິຍົມ ( ຊ )
ຂໍປະນົມນິ້ວຂອບໃຈ

# ໂຄງຮ່າງການຈັດຕັ້ງ ກົມພິມຈຳໜ່າຍ ໃນປີ 2010




24/VII
ຫ້າມຈຳໜ່າຍ


ສະມາຄົມນັກປະພັນລາວ
ສະມາຄົມການພິມ
ສະມາຄົມຫໍສະໝຸດ
ງຫົວໜ້າກົມພິມຈຳໜ່າຍ ຊຸດທີ 4
ສຳນັກງານ ວັນນະສິນ
ສຳນັກພິມ ແລະ ຈຳໜ່າຍປຶ້ມແຫ່ງລັດ
ຫໍສະໝຸດແຫ່ງຊາດ
ພ/ນ ການຈຳໜ່າຍ ແລະ ໂຄສະນາຜ່ານສິ່ງພິມ
ພ/ນ ຫໍສະໝຸດ

ພິມທີ່ໂຮງພິມ ເທບປັນຍາ

978-9932-01-049-3